# ກົດບັດ ສະຫະ ປະຊາ ຊາດ

## ແລະ ທຳມະນູນ ສານຍຸຕິທຳ ລະຫວ່າງປະເທດ

# ກົດບັດ
# ສະຫະ
# ປະຊາ
# ຊາດ

## ແລະ ທຳມະນູນ
## ສານຍຸຕິທຳ
## ລະຫວ່າງປະເທດ

2015 United Nations Publications Edition

DPI/2587. Previously published as DPI/511.

Copyright © 2015 United Nations. All rights reserved.

This publication in its entirety may not be reproduced or transmitted in any form or by any means, electronic or mechanical, including photocopy, recording or any information storage and retrieval systems now known or to be invented, without permission from the publisher.

United Nations Publications
300 East 42nd Street
New York, NY 10017
United States of America
e-mail: permissions@un.org
website: un.org/publications

No protection is claimed for the text from the Charter of the United Nations and from the Statute of the International Court of Justice. Reuse and reproduction is allowed without prior permission from the United Nations.

Photo (opposite): UN Photo


WE THE PEOPLES OF
THE UNITED NATIONS
determined
and for these ends

**ມິຖຸນາ 1941**

ຖະແຫຼງການ
ພະລາດຊະວັງ ເຊັນ ເຈມ

**ສິງຫາ 1941**

ກົດບັດ ອັດລັງຕິກ

**ມັງກອນ 1942**

ການປະກາດຖະແຫຼງການ
ໂດຍ ສະຫະປະຊາຊາດ

**ຕຸລາ 1943**

ກອງປະຊຸມ ມົດສະກູ

**ທັນວາ 1943**

ກອງປະຊຸມ ເຕເຮຣານ

**ສິງຫາ 1944**

ການສົນທະນາ
ທີ່ ດຳບາຕັນ ໂອກ

**ກຸມພາ 1945**

ກອງປະຊຸມ ຢານຕາ

**ເມສາ - ມິຖຸນາ 1945**

ກອງປະຊຸມ
ຊານຟຣານ ຊິດສໂກ

# ຈາກສົງຄາມສູ່ສັນຕິພາບ

ຄວາມຫວັງຂອງຫຼາຍຮຸ່ນຄົນໄດ້ປະກົດຜົນເປັນຈິງໃນປີ 1945 ໃນການສ້າງຕັ້ງກົດບັດສະຫະປະຊາຊາດ ເຊິ່ງເປັນສົນທິສັນຍາພື້ນຖານຂອງອົງການຈັດຕັ້ງສາກົນ ທີ່ຖືກສ້າງຕັ້ງຂຶ້ນເພື່ອຮັກສາສັນຕິພາບ ແລະ ຄວາມໝັ້ນຄົງສາກົນ, ເພື່ອເສີມຂະຫຍາຍສາຍພົວພັນມິດຕະພາບລະຫວ່າງບັນດາປະຊາຊາດ, ແລະ ເພື່ອສົ່ງເສີມຄວາມກ້າວໜ້າທາງສັງຄົມ, ຊີວິດການເປັນຢູ່ທີ່ດີຂຶ້ນ ແລະ ສິດທິມະນຸດ.

## ຖະແຫຼງການ ທີ່ ພະລາຊະວັງເຊນເຈມສ໌

ອົງການສະຫະປະຊາຊາດ ແລະ ກົດບັດສະຫະປະຊາຊາດໄດ້ຖືກກໍ່ຮ່າງສ້າງຕົວຂຶ້ນ ຍ້ອນສົງຄາມໂລກຄັ້ງທີ II. ໃນປີ 1941, ພາກພື້ນເອີຣົບ ແລະ ອາຊີ-ປາຊີຟິກ ສ່ວນໃຫຍ່ ແມ່ນຕົກຢູ່ໃນການຍຶດຄອງຂອງກຸ່ມອໍານາດ ນໍາໂດຍເຢຍລະມັນ, ອີຕາລີ ແລະ ຍີ່ປຸ່ນ. ເຖິງຢ່າງໃດກໍຕາມກຸ່ມພັນທະມິດທີ່ຕ້ານອໍານາດດັ່ງກ່າວໄດ້ຕັ້ງເປົ້າໝາຍເໜືອກວ່າໄຊຊະນະທາງທະຫານ; ພວກເຂົາໄດ້ວາງແຜນເພື່ອບັນລຸສັນຕິພາບທີ່ຍືນຍົງ ແລະ ຄວາມວັດທະນະຖາວອນພາຍຫຼັງສົງຄາມ.

ໃນເດືອນມິຖຸນາຂອງປີດຽວກັນ, ຜູ້ຕາງໜ້າກຸ່ມປະເທດພັນທະມິດຈາກ ອົດສະຕາລີ, ແບນຊິກ, ການາດາ, ເຊັກໂກສະໂລວາກີ, ສະວິດ, ຝລັ່ງ, ເກຼັກ, ລຸກຊໍາບວກ, ເນເທີແລນ, ນິວຊີແລນ, ນໍເວ, ໂປໂລຍ, ອາຟຣິກາໃຕ້, ອັງກິດ ແລະ ຢູໂກສະລາວີ ໄດ້ພົບກັນ ຢູ່ ພະລາຊະວັງເຊນ໌ເຈມສ໌, ທີ່ ລອນດອນ. ເຫັນໄດ້ນອກເໜືອຈາກສະພາບຄວາມຂັດແຍ່ງໃນປັດຈຸບັນ, ບັນດາປະເທດເຫຼົ່ານັ້ນໄດ້ຖະແຫຼງວ່າ ພື້ນຖານໜຶ່ງດຽວທີ່ແທ້ຈິງ ຂອງສັນຕິພາບທີ່ຍືນຍົງແມ່ນຄວາມປາຖະໜາໃນການຮ່ວມມືຂອງປະຊາຊົນທີ່ມີອິດສະຫຼະພາບໃນທົ່ວໂລກ ທີ່ປາສະຈາກໄພນາບຂູ່ຂອງການຮຸກຮານ, ເຊິ່ງທຸກຄົນມີຄວາມໝັ້ນຄົງທາງດ້ານເສດຖະກິດ ແລະ ສັງຄົມ ແລະ ພວກເຂົາມີຄວາມມຸ່ງຫວັງ ຈະເຮັດວຽກຮ່ວມກັນກັບປະຊາຊົນທີ່ມີອິດສະຫຼະພາບ ບໍ່ວ່າຈະຢູ່ໃນພາວະສົງຄາມ ຫຼື ສັນຕິພາບ ກໍຕາມ, ເພື່ອເປົ້າໝາຍດັ່ງກ່າວ.

## ກົດບັດອັດລັງຕິກ

ສອງເດືອນຕໍ່ມາ, ປະທານາທິບໍດີ ແຟຼງກິນ ດີລາໂນ ຣູດສ໌ເວັດ (Franklin Delano Roosevelt) ຂອງ ສະຫະລັດອາເມລິກາ, ຊຶ່ງ ປະເທດດັ່ງກ່າວຈະບໍ່ຢູ່ໃນສົງຄາມຈົນຮອດທ້າຍປີ, ແລະ ນາຍົກລັດຖະ ມົນຕີ ແຫ່ງ ລາຊະອານາຈັກອັງກິດ, ທ່ານ ວິນສ໌ຕັນ ເຊີຊິວ (Winston

Churchill) ໄດ້ປະກາດຖະແຫຼງການສະບັບໜຶ່ງ ຊຶ່ງຕໍ່ມາເປັນທີ່ຮູ້ກັນໃນນາມ ກົດບັດອັດລັງຕິກ, ຊຶ່ງມີຫຼັກການທົ່ວໄປ ທີ່ພວກເຂົາໄດ້ວາງຄວາມຫວັງເພື່ອອະນາຄົດທີ່ດີ ຄື: ບໍ່ມີການຂະຫຍາຍອະທິໄຕ, ດິນແດນ ຫຼື ຢ່າງອື່ນ; ບໍ່ມີການປ່ຽນແປງດິນແດນ ທີ່ຂັດກັບຄວາມປາຖະໜາຂອງປະຊາຊົນທີ່ກ່ຽວຂ້ອງ; ສິດໃນການປົກຄອງຕົນເອງ ແລະການສົ່ງຄືນອໍານາດດັ່ງກ່າວ; ການເຂົ້າເຖິງການຄ້າ ແລະ ວັດຖຸດິບຂອງທຸກປະເທດຢ່າງເທົ່າທຽມກັນ; ການຮ່ວມມືທາງດ້ານເສດຖະກິດ ເພື່ອປັບປຸງມາດຕະຖານແຮງງານ, ການດັດປັບທາງດ້ານເສດຖະກິດ ແລະຄວາມໝັ້ນຄົງຂອງສັງຄົມ; ທີ່ຢູ່ອາໄສທີ່ມີຄວາມປອດໄພ ແລະ ສິດເສລີພາບ ປາສະຈາກຄວາມຢ້ານກົວ ແລະ ຄວາມຕ້ອງການ; ການເດີນທາງ ທາງທະເລທີ່ບໍ່ມີສິ່ງກີດກັ້ນ; ແລະ ການບໍ່ນໍາໃຊ້ກໍາລັງຂອງທຸກປະເທດ, ໄປພ້ອມກັບການປົດອາວຸດຂອງປະເທດທີ່ຮຸກຮານ, ການສ້າງຕັ້ງລະບົບຄວາມໝັ້ນຄົງທົ່ວໄປທີ່ກວ້າງຂວາງ ແລະ ຖາວອນ ທີ່ຍັງເປັນບັນຫາຄົງຄ້າງ.

## ຖະແຫຼງການຂອງອົງການສະຫະປະຊາຊາດ

ໂດຍເຫັນດີຕໍ່ແຜນການລວມຂອງຈຸດປະສົງ ແລະ ຫຼັກການ ທີ່ໄດ້ບັນຍັດໄວ້ໃນກົດບັດອັດລັງຕິກ, ຜູ້ຕາງໜ້າຈາກ 26 ປະເທດພັນທະມິດ

ໄດ້ລົງນາມໃນຖະແຫຼງການຂອງອົງການ ສະຫະປະຊາຊາດ ໃນເດືອນມັງກອນ ປີ 1942 ທີ່ ວໍຊິງຕັນ ດີຊີ. ໂດຍຍຶດໝັ້ນວ່າພວກເຂົາຈະເຂົ້າຮ່ວມໃນການຕໍ່ສູ້ ເພື່ອປົກປ້ອງຊີວິດ, ເສລີພາບ, ເອກະລາດ ແລະ ອິດສະຫຼະພາບໃນການເຊື່ອຖືສາສະໜາ ແລະ ເພື່ອຮັກສາສິດທິມະນຸດ ແລະ ຄວາມຍຸຕິທຳບົນຜືນແຜ່ນດິນຂອງຕົນເອງ, ເຊັ່ນດຽວກັບຜືນແຜ່ນດິນຂອງປະເທດອື່ນ, ພວກເຂົາໄດ້ໃຫ້ຄຳໝັ້ນສັນຍາວ່າລັດຖະບານຂອງຕົນຈະນຳໃຊ້ຊັບພະຍາກອນຢ່າງເຕັມສ່ວນເຂົ້າໃນການຍຸຕິສົງຄາມ ແລະ ຜູກມັດຕົນເອງວ່າຈະບໍ່ເຮັດສັນຍາສະຫງົບສຶກ ຫຼື ສັນຕິພາບໂດຍລຳພັງ. ປະເທດຕ່າງໆ ອີກບໍ່ດົນຕໍ່ມາ ກໍ່ໄດ້ເຂົ້າຮ່ວມຖະແຫຼງການດັ່ງກ່າວ.

## ກອງປະຊຸມ ມົດສະກູ ແລະ ເຕເຮຣານ

ສືບຕໍ່ເຂົ້າຮ່ວມ ພິທີເປີດລະບົບຄວາມໝັ້ນຄົງທົ່ວໄປ , ຖະແຫຼງການຂອງ 4 ປະເທດ ວ່າດ້ວຍ ຄວາມໝັ້ນຄົງທົ່ວໄປ ຊຶ່ງໄດ້ຖືກລົງນາມທີ່ມົດສະກູ ໃນເດືອນຕຸລາ ປີ 1943 ໂດຍລັດຖະມົນຕີການຕ່າງປະເທດຂອງ ສະຫະລັດອາເມລິກາ, ອັງກິດ ແລະ ສະຫະພາບໂຊວຽດ ແລະ ເອກອັກຄະລັດຖະທູດ ຈີນ ປະຈຳ ສະຫະພາບໂຊວຽດ (USSR), ໄດ້ຮັບຮູ້ ຄວາມຈຳເປັນໃນ ການສ້າງຕັ້ງອົງການຈັດຕັ້ງສາກົນທົ່ວໄປໃນ

ເວລາທີ່ຮີບດ່ວນ ແລະ ເໝາະສົມ ບົນພື້ນຖານຫຼັກການຂອງຄວາມສະເໝີພາບ ດ້ານອະທິປະໄຕຂອງທຸກປະເທດ ທີ່ຮັກຫອມສັນຕິພາບ ແລະ ເປີດໃຫ້ປະເທດເຫຼົ່ານັ້ນ, ບໍ່ວ່າຈະເປັນປະເທດໃຫຍ່ ຫຼື ນ້ອຍ ສາມາດເຂົ້າເປັນສະມາຊິກ ເພື່ອຮັກສາສັນຕິພາບ ແລະ ຄວາມໝັ້ນຄົງສາກົນ . ສອງເດືອນຕໍ່ມາ, ທ່ານ ເຊີຊິວ, ທ່ານ ຣູດສ໌ເວັດ ແລະ ຜູ້ນໍາຂອງໂຊວຽດ ທ່ານ ໂຈເຊັບ ສະຕາລິນ (Joseph Stalin) ໄດ້ພົບກັນທີ່ເຕເຮຣານ ເພື່ອຮ່ວມກັນວາງຍຸດທະສາດ ຂອງຕົນເພື່ອຍາດເອົາໄຊຊະນະບັ້ນສຸດທ້າຍ. ເພື່ອເປັນການສ້າງເງື່ອນໄຂສໍາລັບສັນຕິພາບທີ່ຍືນຍົງໃນຕໍ່ໜ້າ, ຖະແຫຼງການ ຂອງ ສາມປະເທດມະຫາອໍານາດ ໄດ້ຢືນຢັນວ່າ: ພວກເຮົາຮັບຮູ້ຢ່າງເຕັມປ່ຽມເຖິງຄວາມຮັບຜິດຊອບສູງສຸດທີ່ຖືກມອບໝາຍໃຫ້ພວກເຮົາ ແລະ ອົງການສະຫະປະຊາຊາດທັງໝົດ ເພື່ອສ້າງສັນຕິພາບທີ່ຈະຕອບສະໜອງຄວາມມຸ່ງມາດປາຖະໜາອັນແຮງກ້າຂອງປະຊາຊົນທັງມວນໃນທົ່ວໂລກທີ່ເບື່ອໜ່າຍຕໍ່ສົງຄາມ ແລະ ເພື່ອຢັບຢັ້ງຄວາມຫາຍະນະ ແລະ ຄວາມຢ້ານກົວທີ່ເກີດຈາກສົງຄາມໃຫ້ໝົດໄປໃນຣຸ່ນຄົນຕໍ່ໆໄປ.

## ການປຶກສາຫາລືທີ່ດຳບາຕັນ ໂອກ (Dumbarton Oaks) ແລະ ກອງປະຊຸມຢານຕາ (Yalta)

ບາດກ້າວຕັດສິນໃນການສ້າງຕັ້ງອົງການຈັດຕັ້ງສາກົນທົ່ວໄປ ເພື່ອຮັກສາສັນຕິພາບ ແລະ ຄວາມໝັ້ນຄົງ ໄດ້ເລີ່ມຕົ້ນໃນເດືອນສິງຫາ ເຖິງ ເດືອນຕຸລາ ປີ 1944 ທີ່ ດຳບາຕັນ ໂອກ, ວໍຊິງຕັນ ດີຊີ, ໂດຍຜູ້ຕາງໜ້າຈາກຈີນ, ລາຊະອານາຈັກອັງກິດ, ສະຫະລັດອາເມລິກາ ແລະ ສະຫະພາບໂຊວຽດ (USSR) ໄດ້ພົບກັນ ເພື່ອສະເໜີຈຸດປະສົງ ແລະ ຫຼັກການ. ພວກເຂົາເຈົ້າໄດ້ກຳນົດ ອົງການສະຫະປະຊາຊາດ ທີ່ປະກອບມີອົງກອນຫຼັກຄື: ສະມັດຊາໃຫຍ່, ສະພາຄວາມໝັ້ນຄົງ, ສານຍຸຕິທຳສາກົນ ແລະ ກອງເລຂາ - ພ້ອມກັນນັ້ນກໍມີ ສະພາເສດຖະກິດ-ສັງຄົມ. ສະມັດຊາໃຫຍ່ ຈະຄົ້ນຄວ້າ ແລະ ສະເໜີຄຳແນະນຳ ເພື່ອສົ່ງເສີມການຮ່ວມມືສາກົນໃນດ້ານການເມືອງ, ເສດຖະກິດ ແລະ ສັງຄົມ ແກ້ໄຂສະພາບການທີ່ຈະສົ່ງຜົນກະທົບຕໍ່ສະຫວັດດີການທົ່ວໄປ. ສະພາຄວາມໝັ້ນຄົງ - ໃນເມື່ອຖືກຮ້ອງຂໍ ບັນດາປະເທດສະມາຊິກ ຈະເຫັນດີສ້າງກອງກຳລັງທະຫານ - ຈະເອົາຄວາມ ຮັບຜິດຊອບເບື້ອງຕົ້ນເພື່ອຮັກສາສັນຕິພາບ ແລະ ຄວາມໝັ້ນຄົງສາກົນ, ລວມທັງການສະກັດກັ້ນ ແລະຕ້ານທຸກໆການຮຸກຮານ. ຕໍ່ໜ້າການສິ້ນສຸດ ຂອງສົງຄາມ, ທ່ານ ເຊີຊຽວ

ທ່ານ ຣູດສ໌ເວັດ ແລະ ທ່ານ ສະຕາລິນ ໄດ້ພົບ ປະກັນອີກເທື່ອໜຶ່ງໃນເດືອນກຸມພາ ປີ 1945 ທີ່ຢານຕາ, ຄຣິເມຍ. ພວກເຂົາເຈົ້າ ໄດ້ຕົກລົງກັນກ່ຽວກັບລະບຽບການລົງຄະແນນສຽງໃນສະພາຄວາມໝັ້ນຄົງ; ໄດ້ສະເໜີກົນໄກສະພາອາລັກຂາ; ແລະ ມອບໝາຍໃຫ້ກອງປະຊຸມອົງການສະຫະປະຊາຊາດ ໃນວັນທີ 25 ເມສາ 1945 ຢູ່ ຊານຟຣານຊິດສໂກ, ຮ່າງກົດບັດຂອງອົງການຈັດຕັ້ງໂລກດັ່ງກ່າວ.

## ກອງປະຊຸມ ຊານຟຣານຊິດສໂກ

ພາຍຫຼັງການພົບປະກັນຂອງຄະນະກຳມາທິການນັກກົດໝາຍ ເພື່ອຮ່າງທຳມະນູນສານຍຸຕິທຳສາກົນ ໃນຕົ້ນເດືອນນັ້ນ, ທີ່ ວໍຊິງຕັນ ດີຊີ, ຄະນະຜູ້ແທນຈາກ 50 ປະເທດ ຈາກທຸກໆທະວີບ - ເຊິ່ງເປັນຕົວແທນໃຫ້ແກ່ຄວາມຫຼາກຫຼາຍທາງດ້ານວັດທະນະທຳ ຫຼາຍກວ່າ 80 ສ່ວນຮ້ອຍຂອງຈຳນວນປະຊາກອນໂລກ ໄດ້ຈັດກອງປະຊຸມຂຶ້ນ ທີ່ ຊານຟຣານຊິດສໂກ, ໂດຍຖືເອົາຂໍ້ສະເໜີ ດຳບາຕັນ ໂອກ ເປັນລະບຽບວາລະຂອງຕົນ. ພວກເຂົາເຈົ້າໄດ້ແກ້ໄຂບັນຫາກ່ຽວກັບການເຂົ້າເປັນສະມາຊິກ, ໂຄງຮ່າງ ແລະ ລະບຽບການ, ລວມທັງການລົງຄະແນນສຽງໃນສະພາຄວາມໝັ້ນຄົງ; ການຮ່ວມມື ສາກົນທາງດ້ານເສດຖະກິດ ແລະ ສັງຄົມສະພາອາລັກຂາສາກົນ; ຂອບເຂດອຳນາດສານຍຸຕິທຳສາກົນ; ແລະ

ບັນຫາສໍາຄັນອື່ນໆ. ກົດບັດໄດ້ເປີດໃຫ້ລົງນາມໃນ 2 ເດືອນຕໍ່ມາ, ໃນ ວັນທີ 26 ມິຖຸນາ 1945. ກົດບັດດັ່ງກ່າວມີຜົນບັງຄັບໃຊ້ໃນວັນທີ 24 ຕຸລາ 1945 ພາຍຫຼັງທີ່ ຈີນ, ຝລັ່ງ, ລາຊະອານາຈັກອັງກິດ, ສະຫະລັດ ອາເມລິກາ ແລະ ສະຫະພາບໂຊວຽດ ແລະ ອີກຫຼາຍປະເທດອື່ນໆທີ່ໄດ້ ລົງນາມ ໃຫ້ສັດຕະຍາບັນ ແລະ ຍື່ນສານເພື່ອຈຸດປະສົງດັ່ງກ່າວ. ອົງ ການສະຫະປະຊາຊາດໄດ້ຖືກສ້າງຕັ້ງຂຶ້ນ ແລະ ໂດຍປະຕິບັດຕາມກົດ ບັດ ໄດ້ເລີ່ມຕົ້ນຈັດຕັ້ງປະຕິບັດບັນດາເປົ້າໝາຍທີ່ທ້າທາຍຂອງຕົນ: ເພື່ອຊ່ວຍເຫຼືອຄົນຮຸ່ນຕໍ່ໆໄປຈາກສົງຄາມ ແລະ ເພື່ອສົ່ງເສີມສິດທິມະ ນຸດ ຄວາມກ້າວໜ້າທາງສັງຄົມ ແລະ ຊີວິດການເປັນຢູ່ທີ່ດີສໍາລັບໝົດ ທຸກຄົນ.

ແຫຼ່ງຂໍ້ມູນ:

“Steps to the Charter”, in: *UN Chronicle*, Vol. XXII, No. 4, 1985, pp. 4–11.
“The United Nations. I. Origin and Evolution”, in: *Yearbook of the United Nations*, *1946–47* (Vol. 1). Lake Success, New York: 1947, pp. 1–50.

Photo (opposite): Original manuscript of the preamble to the Charter of the United Nations. UN Photo.

36 pica meas

Extra

Preamble

24 pt

# THE CHARTER OF THE UNITED NATIONS

PREAMBLE

WE THE PEOPLES OF THE UNITED NATIONS

determined to save succeeding generations from the scourge of war, which twice in our lifetime has brought untold sorrow to mankind, and

to reaffirm faith in fundamental human rights, in the dignity and ~~value~~ worth of the human person, in the equal rights of men and women and of nations large and small, and

to establish conditions under which justice and respect for the obligations arising from treaties and other sources of international law can be maintained, and

to promote social progress and better standards of life in larger freedom,

and for these ends

to practice tolerance and live together in peace with one another as good neighbors, and

to unite our strength to maintain international peace and security, and

by the acceptance of principles and the institution of methods, ~~to insure~~ to insure, that armed force shall not be used, save in the common interest, and

~~by the~~ to employ~~ment of~~ international machinery for the promotion of the economic and social advancement of all peoples,

have resolved to combine our efforts to accomplish these aims.

Accordingly, our respective governments, through representatives assembled in the City of San Francisco, who have exhibited their full powers found to be in good and due form, have agreed to the present Charter of the United Nations and do hereby establish an international organization to be known as the United Nations.

~~5364~~ ~~(Preamble) 1~~

Printer Add this to Charter at beginning

P-67

~~(Mark FIRST PROOF)~~

# ສາລະບານ

## ກົດບັດ ສະຫະປະຊາຊາດ


I. ເປົ້າໝາຍ ແລະ ຫຼັກການ .................................. 5

II. ສະມາຊິກ ................................................ 9

III. ອົງກອນ ................................................ 11

IV. ສະມັກຊາໃຫຍ່ .......................................... 12

V. ສະພາຄວາມໝັ້ນຄົງ ...................................... 21

VI. ການແກ້ໄຂຂໍ້ຂັດແຍ້ງ ຢ່າງສັນຕິວິທີ ...................... 27

VII. ການດຳເນີນການໃນກໍລະນີມີການຂົ່ມຂູ່ຕໍ່ສັນຕິພາບ, ການມ້າງເພສັນຕິພາບ ແລະ ການກະທຳ ການຮຸກຮານ .. 31

VIII. ຂໍ້ຕົກລົງພູມິພາກ ........................................ 39

IX. ການຮ່ວມມືດ້ານເສດຖະກິດ ແລະ ສັງຄົມ ລະຫວ່າງຊາດ .................................... 42

X. ສະພາເສດຖະກິດ ແລະ ສັງຄົມ ........................... 45

XI. ຖະແຫຼງການວ່າດ້ວຍ ດິນແດນທີ່ຍັງບໍ່ທັນໄດ້ ປົກຄອງຕົນເອງ ......................................... 52

XII. ລະບົບວ່າດ້ວຍການອາລັກຂາ ລະຫວ່າງຊາດ ............ 55

XIII. ສະພາວ່າດ້ວຍການອາລັກຂາ ........................ 62
XIV. ສານຍຸດຕິທຳ ລະຫວ່າງປະເທດ ...................... 66
XV. ສຳນັກເລຂາທິການ ........................................ 69
XVI. ຂໍ້ບັນຍັດຕ່າງ ............................................... 72
XVII. ຂໍ້ຕົກລົງສະເພາະ ຊົ່ວຄາວ
ກ່ຽວກັບຄວາມໝັ້ນຄົງ ............................... 74
XVIII. ການດັດແປງແກ້ໄຂ ...................................... 76
XIX. ການສັດຕະຍາບັນ ແລະ ການລົງນາມ ................ 78

## ທຳມະນູນ ສານຍຸຕິທຳ ລະຫວ່າງປະເທດ

I. ການຈັດຕັ້ງຂອງສານ ........................................ 81
II. ອຳນາດສານ ................................................... 98
III. ການພິຈາລະນາຄະດີ ...................................... 103
IV. ຄຳເຫັນແນະນຳ ............................................ 114
V. ການດັດແປງແກ້ໄຂ ......................................... 117

ໝາຍເຫດ: ການດັດແປງແກ້ໄຂເພີ່ມເຕີມບັນດາມາດຕາໃນ
ກົດບັດ..................................................................... 119

# ກົດບັດ
# ສະຫະປະຊາຊາດ

# ພວກເຮົາບັນດາ, ປະຊາຊົນ ແຫ່ງ ສະຫະປະຊາຊາດ ໄດ້ຕັ້ງເຈດຈໍານົງ

ທີ່ຈະຊ່ວຍຄົນລຸ້ນຫຼັງ ໃຫ້ພົ້ນຈາກໄພພິບັດ ແຫ່ງສົງຄາມ ຊຶ່ງໄດ້ນໍາຄວາມສູນເສຍ ຢ່າງໃຫຍ່ຫຼວງມາສູ່ມວນມະນຸດ ໃນຊົ່ວຊີວິດ ຂອງພວກເຮົາເຖິງສອງຄັ້ງແລ້ວ,

ທີ່ຈະຢັ້ງຢືນເຖິງຄວາມເຊື່ອໝັ້ນ ໃນສິດທິອັນພື້ນຖານ ຂອງມະນຸດ, ໃນກຽດສັກສີ ແລະ ຄຸນຄ່າຂອງມວນມະນຸດ ແຕ່ລະຄົນ, ໃນສິດສະເໝີພາບລະຫວ່າງຊາຍ ແລະ ຍິງ ກໍຄືບັນດາປະຊາຊາດໃຫ່ຍ ແລະ ນ້ອຍ,

ທີ່ຈະສ້າງເງື່ອນໄຂອັນຈໍາເປັນ ໃຫ້ແກ່ການປົກປັກຮັກສາຄວາມຍຸຕິທໍາ ແລະ ການເຄົາລົບຕໍ່ພັນທະທັງປວງ ທີ່ເກີດມາຈາກສົນທິສັນຍາ ແລະ ທີ່ມາອື່ນໆຂອງກົດຫມາຍລະຫວ່າງປະເທດ,

ທີ່ຈະສົ່ງເສີມຄວາມກ້າວໜ້າທາງສັງຄົມ ແລະ ເງື່ອນໄຂແຫ່ງການດໍາລົງຊີວິດອັນດີກ່ວາເກົ່າທ່າມກາງອິດສະລະພາບທີ່ກ້ວາງຂວາງຍິ່ງໆຂຶ້ນ,

**ແລະ ເພື່ອຈຸດປະສົງດັ່ງກ່າວ**

ທີ່ຈະປະຕິບັດການຜ່ອນສັ້ນຜ່ອນຍາວ ແລະ ດຳລົງຊີວິດຢູ່ຮ່ວມກັນ ຖານບ້ານໃກ້ເຮືອນຄຽງທີ່ດີ,

ທີ່ຈະໂຮມກຳລັງຂອງພວກເຮົາເພື່ອປົກປັກຮັກສາສັນຕິພາບ ແລະ ຄວາມໝັ້ນຄົງລະຫວ່າງຊາດ,

ທີ່ຈະຍອມຮັບຫຼັກການ ແລະ ສ້າງຕັ້ງວິທີການຄ້ຳປະກັນວ່າ ຈະບໍ່ມີການໃຊ້ກຳລັງອາວຸດເວັ້ນເສຍແຕ່ວ່າເພື່ອຜົນປະໂຫຍດຮ່ວມກັນ, ທີ່ຈະເພິ່ງພາສະຖາບັນສາກົນຕ່າງໆເພື່ອພັດທະນາຄວາມກ້າວໜ້າທາງດ້ານເສດຖະກິດ ສັງຄົມຂອງທຸກໆປະຊາຊົນ.

**ຈຶ່ງໄດ້ຕົກລົງ ຈະປະສົມປະສານ ຄວາມພະຍາຍາມຂອງພວກເຮົາເພື່ອໃຫ້ ສຳເລັດຜົນຕາມເຈດຕະນາເຫຼົ່ານີ້**

ດັ່ງນັ້ນ, ລັດຖະບານຂອງພວກເຮົາຈຶ່ງໄດ້ຕົກລົງກັນຮັບເອົາ ກົດບັດສະຫະປະຊາຊາດ ສະບັບນີ້ໂດຍຜ່ານຜູ້ແທນ ທີ່ມາໂຮມ ປະຊຸມຢູ່ນະຄອນ ຊານຟຣານຊິສໂກ, ຜູ້ທີ່ມີໃບມອບອຳນາດເຕັມຊຶ່ງເຫັນ

ວ່າຖືກຕ້ອງ ແລະ ເໝາະສົມ ແລະ ໂດຍຊ່ອງໜ້າ ຂອງຜູ້ເຂົ້າຮ່ວມ ປະຊຸມຈຶ່ງສະຖາປະນາອົງການຈັດຕັ້ງລະຫວ່າງຊາດຂຶ້ນຊຶ່ງມີວ່າຊື່ ສະຫະປະຊາຊາດ.

# ໝວດທີ່ I
## ເປົ້າໝາຍ ແລະ ຫຼັກການ

*ມາດຕາ 1*

ເປົ້າຫມາຍ ຂອງສະຫະປະຊາຊາດ ມີດັ່ງນີ້:

1. ເພື່ອປົກປັກຮັກສາ ສັນຕິພາບ ແລະ ຄວາມໝັ້ນຄົງ ລະຫວ່າງຊາດ ແລະ ເພື່ອຈຸດປະສົງດັ່ງກ່າວນີ້: ຈຶ່ງໄດ້ເອົາມາດຕະການຮ່ວມກັນຢ່າງມີປະສິດທິຜົນເພື່ອສະກັດກັ້ນ ແລະ ຈຳກັດປັດເປົ່າການຂົ່ມຂູ່ຕໍ່ສັນຕິພາບ ແລະ ເພື່ອປາບປາມ ທຸກການກະທຳຮຸກຮານ ຫຼື ການລ່ວງລະເມີດອື່ນໆຕໍ່ສັນຕິພາບ, ແລະ ເຮັດໃຫ້ມີຄວາມເຂົ້າໃຈ ຫຼື ແກ້ໄຂຂໍ້ຂັດແຍ້ງ ຫຼື ສະຖານະການລະຫວ່າງຊາດອັນຈະນຳໄປສູ່ການມ້າງເພທຳລາຍສັນຕິພາບຢ່າງສັນຕິວິທີ, ໂດຍສອດຄ່ອງ ກັບຫຼັກການແຫ່ງຄວາມຍຸຕິທຳ ແລະ ກົດໝາຍລະຫວ່າງປະເທດ.

2. ພັດທະນາສາຍພົວພັນ ມິດຕະພາບລະຫວ່າງຊາດບົນພື້ນຖານການເຄົາລົບນັບຖືຫຼັກການສິດສະເໝີພາບ ຂອງ ບັນດາປະຊາຊາດ ແລະ ສິດຂອງປະຊາຊົນ ໃນການປົກຄອງຕົນເອງພ້ອມກັບເອົາ ມາດຕະການທີ່ເໝາະສົມອື່ນໆ ເພື່ອຮັດແຫນ້ນຄວາມໝັ້ນຄົງຂອງສັນຕິພາບໂລກ;

3. ເສີມສ້າງການຮ່ວມມື ລະຫວ່າງຊາດ ດ້ວຍການແກ້ໄຂບັນຫາ

ສາກົນ ດ້ານເສດຖະກິດ, ສັງຄົມ, ວັດທະນະທຳ ຫຼື ມະນຸດສະທຳ, ດ້ວຍການພັດທະນາ ແລະ ສົ່ງເສີມການເຄົາລົບນັບຖືສິດທິມະນຸດ ແລະ ອິດສະລະພາບອັນພື້ນຖານ ຂອງທຸກໆຄົນ ໂດຍບໍ່ຈຳແນກເຊື້ອຊາດ, ເພດ, ພາສາ ຫຼື ສາດສະໜາ;

4. ເພື່ອເປັນສູນກາງ ເຮັດໃຫ້ຄວາມພະຍາຍາມ ຂອງ ບັນດາປະຊາຊາດ ທັງປວງມີ ຄວາມກົມກຽວກັນ ເພື່ອບັນລຸຈຸດປະສົງຮ່ວມກັນທີ່ໄດ້ກ່າວມານັ້ນ.

*ມາດຕາ 2*

ເພື່ອເຮັດໃຫ້ເປັນໄປຕາມເປົ້າໝາຍ ທີ່ໄດ້ບົ່ງໄວ້ໃນ ມາດຕາ 1, ອົງການສະຫະປະຊາຊາດ ແລະ ສະມາຊິກທັງໝົດຈະຕ້ອງດຳເນີນການໃຫ້ສອດຄ່ອງ ກັບບັນດາຫຼັກການດັ່ງຕໍ່ໄປນີ້:

1. ສະຫະປະຊາຊາດ ຖືກສ້າງຕັ້ງຂຶ້ນ ບົນພື້ນຖານຂອງຫຼັກການສະເໝີພາບ ດ້ານອະທິປະໄຕ ຂອງສະມາຊິກທັງປວງ.

2. ເພື່ອຮັບປະກັນດ້ານສິດ ແລະ ຜົນປະໂຫຍດ ໃຫ້ແກ່ທຸກປະເທດ ໃນຖານະເປັນສະມາຊິກກະພາບ, ບັນດາສະມາຊິກ ຂອງສະຫະປະຊາຊາດ ຈະຕ້ອງປະຕິບັດ ພັນທະທີ່ຕົນຕ້ອງໄດ້ເຮັດຕາມ ກົດບັດສະບັບນີ້ ດ້ວຍຄວາມບໍລິສຸດໃຈ.

3. ບັນດາສະມາຊິກ ຂອງສະຫະປະຊາຊາດ ຈະຕ້ອງແກ້ໄຂຂໍ້ຂັດ

ແຍ້ງສາກົນລະຫວ່າງຕົນດ້ວຍວິທີທາງອັນສັນຕິວິທີ ຊຶ່ງບໍ່ເປັນອັນຕະລາຍຕໍ່ສັນຕິພາບ ແລະ ຄວາມຫມັ້ນຄົງລະຫວ່າງຊາດ ກໍຄືຄວາມຍຸຕິທໍາ.

4. ໃນການພົວພັນລະຫວ່າງຊາດ, ສະມາຊິກສະຫະປະຊາຊາດຈະຕ້ອງບໍ່ໃຊ້ການຂົ່ມຂູ່ ຫຼື ໃຊ້ກໍາລັງຕ້ານເຂດນໍ້າ ແດນດິນອັນຄົບຖ້ວນ ຫຼື ເອກະລາດ ດ້ານການເມືອງ ຂອງແຕ່ລະລັດ ຫຼື ການກະທໍາອື່ນໆ ທີ່ບໍ່ສອດຄ່ອງກັບເປົ້າຫມາຍ ຂອງ ສະຫະປະຊາຊາດ.

5. ສະມາຊິກ ຂອງສະຫະປະຊາຊາດ ຈະໃຫ້ການຊ່ວຍເຫຼືອທຸກປະການແກ່ອົງການ ສະຫະປະຊາຊາດ ໃນທຸກການປະຕິບັດງານທີ່ສອດຄ່ອງ ກັບຂໍ້ບັນຍັດ ຂອງກົດບັດສະບັບນີ້ ແລະ ຈະບໍ່ໃຫ້ຄວາມຊ່ວຍເຫຼືອແກ່ລັດທີ່ກໍາລັງຖືກ ອົງການສະຫະປະຊາຊາດ ດໍາເນີນ ມາດຕະການຈໍາກັດ ແລະ ບັງຄັບຢູ່.

6. ອົງການຈະຕ້ອງເຮັດແນວໃດ ເພື່ອເຮັດໃຫ້ບັນດາລັດ ທີ່ບໍ່ແມ່ນສະມາຊິກ ຂອງສະຫະປະຊາຊາດ ປະຕິບັດເທົ່າທີ່ຈະ ເປັນໄປໄດ້ຫຼັກການເຫຼົ່ານີ້ ໃນການປົກປັກຮັກສາສັນຕິພາບ ແລະ ຄວາມຫມັ້ນຄົງລະຫວ່າງຊາດ.

7. ບໍ່ມີບັນຍັດຂໍ້ໃດ ໃນກົດບັດສະບັບນີ້ ທີ່ຈະອະນຸຍາດໃຫ້ ສະຫະປະຊາຊາດ ເຂົ້າໄປແຊກແຊງກິດຈະການ ຊຶ່ງໂດຍຕົ້ນຕໍແລ້ວຂຶ້ນກັບສິດອໍານາດແຫ່ງຊາດ ຂອງລັດນຶ່ງ, ທັງບໍ່ບັງຄັບສະມາຊິກໃຫ້ນໍາເລື່ອງດັ່ງກ່າວ ມາສະເໜີໃຫ້ສະຫະປະຊາຊາດ ແກ້ໄຂຕາມກົດບັດສະບັບນີ້;

ແຕ່ເຖິງຢ່າງໃດກໍ່ຕາມຫຼັກການ ດັ່ງກ່າວ ຈະບໍ່ກະທົບກະເທືອນຕໍ່ການ ນຳໃຊ້ ມາດຕະການບັງຄັບທີ່ບົ່ງໄວ້ໃນ ໝວດ III.

# ໝວດທີ່ II
## ສະມາຊິກ

*ມາດຕາ 3*

ສະມາຊິກດັ້ງເດີມ ຂອງສະຫະປະຊາຊາດ ໄດ້ແກ່ລັດ ທີ່ໄດ້ເຂົ້າຮ່ວມກອງປະຊຸມ ສະຫະປະຊາຊາດ ວ່າດ້ວຍອົງການຈັດຕັ້ງ ລະຫວ່າງຊາດ ທີ່ ນະຄອນ ຊານຟຣານຊິດສະໂກ ແລະ ໄດ້ລົງນາມ ໃນກົດບັດສະບັບນີ້ ແລະ ໃຫ້ສັດຕະຍາບັນ ໂດຍສອດຄ່ອງກັບ ມາດຕາ 110, ຫຼືລັດທີ່ໄດ້ລົງນາມໄວ້ກ່ອນແລ້ວ ໃນຖະແຫຼງການຂອງສະຫະປະຊາຊາດ ລົງວັນທີ 01 ມັງກອນ 1942.

*ມາດຕາ 4*

1. ການເປັນສະມາຊິກ ຂອງສະຫະປະຊາຊາດ ແມ່ນເປີດໃຫ້ແກ່ທຸກໆລັດທີ່ຮັກຫອມສັນຕິພາບ ແລະ ຍອມຮັບເອົາພັນທະຂອງ ກົດບັດສະບັບນີ້, ແລະ ແມ່ນລັດທີ່ສາມາດ ແລະ ເຕັມໃຈປະຕິບັດພັນທະດັ່ງກ່າວຕາມການຕົກລົງ ຂອງອົງການສະຫະປະຊາຊາດ.

2. ການຮັບຮອງເອົາລັດໃດນຶ່ງ ທີ່ມີເງື່ອນໄຂດັ່ງກ່າວນັ້ນ ເຂົ້າເປັນສະມາຊິກ ແມ່ນຂຶ້ນກັບມະຕິ ຂອງສະມັດຊາໃຫຍ່ສະຫະປະຊາຊາດ

ຕາມການແນະນຳຂອງ ສະພາຄວາມຫມັ້ນຄົງ.

*ມາດຕາ 5*

ສະມາຊິກໃດນຶ່ງ ຂອງອົງການສະຫະປະຊາຊາດ ທີ່ຖືກສະພາຄວາມຫມັ້ນຄົງດຳເນີນມາດຕະການຈຳກັດ ແລະ ບັງຄັບນັ້ນ ອາດຖືກສະມັດຊາໃຫຍ່ງົດການໃຊ້ສິດ ແລະ ເອກະສິດ ຂອງສະມາຊິກ ຕາມການແນະນຳຂອງສະພາຄວາມຫມັ້ນຄົງ. ສະພາຄວາມຫມັ້ນຄົງສາມາດຄືນສິດ ແລະ ເອກະສິດ ໃຫ້ສະມາຊິກ ດັ່ງກ່າວໄດ້.

*ມາດຕາ 6*

ຖ້າວ່າສະມາຊິກໃດນຶ່ງ ຂອງສະຫະປະຊາຊາດ ຫາກຝ່າຝືນຫຼັກການຂອງ ກົດບັດສະບັບນີ້ ຢ່າງເນື່ອງນິດລຽນຕິດ, ສະມາຊິກດັ່ງກ່າວອາດຖືກໄລ່ອອກ ຈາກອົງການ ໂດຍສະມັດຊາໃຫຍ່ຕາມການສະເຫນີແນະ ຂອງສະພາຄວາຫມັ້ນຄົງ.

# ໝວດທີ່ III
## ອົງກອນ

*ມາດຕາ 7*

1. ອົງກອນສຳຄັນ ຂອງສະຫະປະຊາຊາດ ທີ່ໄດ້ສ້າງຂຶ້ນມີດັ່ງນີ້: ສະມັດຊາໃຫຍ່, ສະພາຄວາມໝັ້ນຄົງ, ສະພາເສດຖະກິດ ແລະ ສັງຄົມ, ສະພາອາລັກຂາ, ສານຍຸຕິທຳລະຫວ່າງປະເທດ ແລະ ສຳນັກງານເລຂາທິການ.

*ມາດຕາ 8*

ສະຫະປະຊາຊາດ ຈະບໍ່ວາງຂໍ້ຈຳກັດໃດໆໝົດໃນການຮັບເອົາຜູ້ຊາຍ ຫຼື ຜູ້ຍິງ ເຂົ້າຮ່ວມວຽກໃນອົງກອນສຳຄັນ ຫຼື ອົງກອນຊ່ວຍວຽກໃນທຸກຕຳແຫນ່ງຫນ້າທີ່, ໃນເມື່ອມີເງື່ອນໄຂເທົ່າທຽມກັນ.

# ໝວດທີ IV
## ສະມັດຊາໃຫຍ່

### ການປະກອບ.

*ມາດຕາ 9*

1. ສະມັດຊາໃຫ່ຍປະກອບດ້ວຍສະມາຊິກທັງໝົດຂອງສະຫະປະຊາຊາດ.
2. ສະມາຊິກແຕ່ລະປະເທດ ຈະມີຜູ້ແທນໃນສະມັດຊາໃຫຍ່ຢ່າງຫຼາຍບໍ່ກາຍ 5 ຄົນ.

### ໜ້າທີ່ ແລະ ອໍານາດ.

*ມາດຕາ 10*

ສະມັດຊາໃຫຍ່ ສາມາດອະພິປາຍໄດ້ທຸກໆບັນຫາ ຫຼື ທຸກໆເລື່ອງພາຍໃນຂອບເຂດ ຂອງກົດບັດສະບັບນີ້ ຫຼື ກ່ຽວກັບອໍານາດ ແລະ ຫນ້າທີ່ຂອງອົງກອນໃດນຶ່ງທີ່ບົ່ງໄວ້ໃນກົດບັດ ສະບັບນີ້ ແລະ ສະເຫນີບັນຫາ ຫຼື ຄໍາແນະນໍາ ໄປຍັງສະມາຊິກ ຂອງອົງການສະຫະປະຊາຊາດ ຫຼື ສະ

ພາຄວາມຫມັ້ນຄົງ, ຫຼື ໄປຍັງສະມາຊິກ ອົງການສະຫະປະຊາຊາດ ແລະ ສະພາຄວາມຫມັ້ນຄົງ, ເວັ້ນເສຍແຕ່ທີ່ໄດ້ບົ່ງໄວ້ໃນ ມາດຕາ 12.

*ມາດຕາ 11*

1. ສະມັດຊາໃຫຍ່ ສາມາດພິຈາລະນາ ຫຼັກການທົ່ວໄປ ຂອງການຮ່ວມມື ເພື່ອປົກປັກຮັກສາ ສັນຕິພາບ ແລະ ຄວາມຫມັ້ນຄົງລະຫວ່າງຊາດ, ລວມທັງຫຼັກການໃນການຫຼຸດຜ່ອນອາວຸດ ແລະ ຂໍ້ບັງຄັບວ່າດ້ວຍການປະກອບອາວຸດ ແລະ ສາມາດເຮັດຄະແນນນຳກ່ຽວກັບ ຫຼັກການເຫຼົ່ານີ້ ໄປຍັງສະມາຊິກສະຫະປະຊາຊາດ ຫຼື ສະມາຊິກສະພາຄວາມໝັ້ນຄົງ ຫຼື ໄປຍັງສະມາຊິກຂອງ ສະຫະປະຊາຊາດ ແລະ ສະພາຄວາມຫມັ້ນຄົງທັງສອງ.

2. ສະມັດຊາໃຫຍ່ສາມາດອະພິປາຍໄດ້ທຸກໆບັນຫາ ທີ່ກ່ຽວກັບການປົກປັກຮັກສາ ສັນຕິພາບ ແລະ ຄວາມຫມັ້ນຄົງ ລະຫວ່າງຊາດ ທີ່ໄດ້ສະເຫນີຕໍ່ ສະມັດຊາໃຫຍ່ໂດຍ ສະມາຊິກຂອງສະຫະປະຊາຊາດ, ຫຼື ໂດຍສະພາຄວາມຫມັ້ນຄົງ ຫຼື ລັດໃດ ລັດນຶ່ງ ທີ່ບໍ່ແມ່ນ ສະມາຊິກຂອງສະຫະປະຊາຊາດ ຕາມຂໍ້ບັນຍັດຂອງ ວັນທີ 2 ມາດຕາ 35, ແລະ ສາມາດເຮັດຄຳແນະນຳ ເວັ້ນເສຍແຕ່ທີ່ໄດ້ບົ່ງໄວ້ໃນ ມາດຕາ 12 ກ່ຽວກັບ ທຸກໆບັນຫາໃນ ທຳນອງດັ່ງກ່າວໄປຍັງລັດ ຫຼື ບັນດາລັດ ທີ່ກ່ຽວຂ້ອງ ຫຼື ໄປຍັງສະພາຄວາມຫມັ້ນຄົງ ຫຼື ໄປຍັງບັນດາລັດດັ່ງກ່າວ

ແລະ ສະພາຄວາມຫມັ້ນຄົງ ພ້ອມກັນ. ສະມັດຊາໃຫ່ຍ ຈະສົ່ງບັນຫາໃດນຶ່ງໃນທຳນອງດັ່ງກ່າວທີ່ຈຳເປັນຕ້ອງໄດ້ຮັບການພິຈາລະນາ, ໄປຍັງສະພາຄວາມຫມັ້ນຄົງຈະເປັນກ່ອນ ຫຼື ຫຼັງການອະພິປາຍ ກໍໄດ້.

3. ສະມັດຊາໃຫຍ່ ສາມາດແຈ້ງໃຫ້ສະພາຄວາມໝັ້ນຄົງຊາບເຖິງສະຖານະການທີ່ອາດຈະເປັນອັນຕະລາຍ ຕໍ່ສັນຕິພາບ ແລະ ຄວາມຫມັ້ນຄົງລະຫວ່າງຊາດ.

4. ອຳນາດ ຂອງສະມັດຊາໃຫຍ່ ຕາມທີ່ກຳນົດໄວ້ໃນ ມາດຕານີ້ຈະບໍ່ຈຳກັດຂອບເຂດທົ່ວໄປຂອງ ມາດຕາ 10.

*ມາດຕາ 12*

1. ໃນຂະນະທີ່ສະພາຄວາມຫມັ້ນຄົງ ກຳລັງປະຕິບັດ ໜ້າທີ່ແກ້ໄຂການຂັດແຍ້ງ ຫຼື ສະຖານະການໃດນຶ່ງ ຊຶ່ງໄດ້ຮັບມອບໝາຍຕາມກົດບັດສະບັບນີ້ຢູ່ນັ້ນ, ສະມັດຊາໃຫຍ່ຈະບໍ່ອອກຄຳແນະນຳໃດໆ ກ່ຽວກັບການຂັດແຍ້ງ ຫຼື ສະຖານະການດັ່ງກ່າວເອັ້ນເສຍແຕ່ວ່າສະພາຄວາມຫມັ້ນຄົງຈະຮ້ອງຂໍ.

2. ໂດຍການອະນຸມັດຂອງສະພາຄວາມຫມັ້ນຄົງ, ເລຂາທິການໃຫຍ່ ຈະຕ້ອງແຈ້ງໃຫ້ສະມັດຊາໃຫຍ່ຊາບ, ໃນແຕ່ລະສະໄໝປະຊຸມເຖິງວຽກງານຕ່າງໆທີ່ກ່ຽວຂ້ອງ ກັບການປົກປັກຮັກສາ ສັນຕິພາບ ແລະ ຄວາມຫມັ້ນຄົງລະຫວ່າງຊາດ ເຊິ່ງສະພາຄວາມຫມັ້ນຄົງພວມ

ດຳເນີນງານຢູ່; ໃນທຳນອງດຽວກັນ ເລຂາທິການໃຫ່ຍ ຈະຕ້ອງແຈ້ງໃຫ້ສະມັດຊາໃຫຍ່ ຫຼື ສະມາຊິກ ສະຫະປະຊາຊາດ, ຖ້າຫາກບໍ່ຢູ່ໃນໄລຍະສະໄຫມປະຊຸມໃນທັນທີ ທີ່ສະພາຄວາມຫມັ້ນຄົງ ຢຸດຕິການແກ້ໄຂກໍລະນີດັ່ງກ່າວ.

*ມາດຕາ 13*

1. ສະມັດຊາໃຫຍ່ລິງມືສຶກສາ ແລະ ອອກຄຳແນະນຳ ເພື່ອຈຸດປະສົງ.

ກ. ພັດທະນາການຮ່ວມມື ລະຫວ່າງຊາດ ໃນດ້ານການເມືອງ ແລະ ການຊຸກຍູ້ພັດທະນາເປັນກ້າວໆໄປຂອງ ກົດໝາຍລະຫວ່າງປະເທດ ແລະ ການຈັດເປັນປະມວນກົດໝາຍດັ່ງກ່າວ.

ຂ. ພັດທະນາການຮ່ວມມືລະຫວ່າງຊາດ ໃນດ້ານເສດຖະກິດ, ສັງຄົມ, ວັດທະນະທຳ, ການສຶກສາ ແລະ ສາທາລະນະສຸກ ແລະ ຊ່ວຍໃຫ້ໝົດທຸກຄົນ ຮູ້ຊົມໃຊ້ສິດທິມະນຸດ ແລະ ອິດສະຫຼະພາບຂັ້ນພື້ນຖານ ໂດຍປາສະຈາກການຈຳແນກດ້ານເຊື້ອຊາດ, ເພດ, ພາສາ, ຫຼືສາດສະໜາ.

2. ຄວາມຮັບຜິດຊອບ, ໜ້າທີ່ ແລະ ອຳນາດອື່ນໆ ຂອງສະມັດຊາໃຫຍ່ກ່ຽວກັບບັນຫາທີ່ບົ່ງໄວ້ໃຫ້ວັກ 1 ຂໍ້ ຂ. ຂ້າງເທິງນັ້ນແມ່ນຖືກກຳນົດໄວ້ໃນຫມວດ IX ແລະ X.

*ມາດຕາ 14*

ຍົກເວັ້ນບົດບັນຍັດຂອງມາດຕາ 12, ສະມັດຊາໃຫຍ່ ສາມາດແນະນຳມາດຕະການສະເພາະ, ເພື່ອສ້າງຄວາມເຂົ້າໃຈ ຢ່າງສັນຕິຕໍ່ສະຖານະການໃດນຶ່ງ, ເຊິ່ງເກີດມາຈາກໃສກໍ່ຕາມ, ທີ່ເຫັນວ່າຈະສ້າງ ຄວາມເສຍຫາຍທົ່ວໆໄປ ຫຼື ເປັນອັນຕະລາຍຕໍ່ສາຍພົວພັນມິດຕະພາບລະຫວ່າງຊາດ, ລວມທັງສະຖານະການເຊິ່ງເປັນຜົນສະທ້ອນມາຈາກການລະເມີດບົດບັນຍັດຂອງ ກົດບັດສະບັບນີ້ ເຊິ່ງກຳນົດເປົ້າໝາຍ ແລະ ຫຼັກການຂອງ ສະຫະປະຊາຊາດ.

*ມາດຕາ 15*

1. ສະມັດຊາໃຫຍ່ ແລະ ສຶກສາບົດລາຍງານປະຈຳປີ ແລະ ບົດລາຍງານພິເສດ ຂອງສະພາຄວາມຫມັ້ນຄົງ; ບົດລາຍງານດັ່ງກ່າວຈະລວມເອົາເລື່ອງມາດຕະການຕ່າງໆ ທີ່ ສະພາຄວາມຫມັ້ນຄົງໄດ້ຕັດສິນ ຫຼື ຮັບຮອງເອົາເພື່ອປົກປັກຮັກສາສັນຕິພາບ ແລະ ຄວາມຫມັ້ນຄົງລະຫວ່າງຊາດ.

2. ສະມັດຊາໃຫຍ່ຮັບ ແລະ ສຶກສາບົດລາຍງານຂອງອົງກອນອື່ນໆ ຂອງສະຫະປະຊາຊາດ.

*ມາດຕາ 16*

ສະມັດຊາໃຫຍ່ປະຕິບັດຫນ້າທີ່ ກ່ຽວກັບລະບົບສາກົນ ວ່າດ້ວຍການອາລັກຂາທີ່ໄດ້ຮັບມອບຫມາຍຕາມຫມວດທີ XII ແລະ XIII, ລວມທັງການໃຫ້ຄວາມເຫັນດີ ຕໍ່ຂໍ້ຕົກລົງວ່າດ້ວຍການອາລັກຂາບັນດາເຂດທີ່ບໍ່ໄດ້ລະບຸໄວ້ເປັນເຂດຍຸດທະສາດ.

*ມາດຕາ 17*

1. ສະມັດຊາໃຫຍ່ພິຈາລະນາ ແລະ ຮັບຮອງເອົາງົບປະມານຂອງສະຫະປະຊາຊາດ.

2. ສະມາຊິກເປັນຜູ້ອອກຄ່າໃຊ້ຈ່າຍຂອງອົງການຕາມອັດຕາສ່ວນທີ່ສະມັດຊາໃຫ່ຍໄດ້ກໍານົດແບ່ງປັນໃຫ້.

3. ສະມັດຊາໃຫຍ່ພິຈາລະນາ ແລະ ຮັບຮອງເອົາການຕົກລົງ ດ້ານການເງິນ ແລະ ງົບປະມານທີ່ຕົກລົງກັນ ກັບສະຖາບັນວິຊາສະເພາະດັ່ງທີ່ບົ່ງໄວ້ໃນມາດຕາ 57 ແລະ ພິຈາລະນາງົບປະມານການບໍລິຫານຂອງສະຖາບັນດັ່ງກ່າວເພື່ອອອກຄໍາແນະນໍາທີ່ກ່ຽວຂ້ອງ.

## ການລົງຄະແນນສຽງ.

*ມາດຕາ 18*

1. ສະມາຊິກແຕ່ລະປະເທດ ຂອງສະມັດຊາໃຫຍ່ຈະມີຄະແນນ

ສຽງ 1 ຄະແນນ .

2. ມະຕິຂອງສະມັດຊາໃຫຍ່ ໃນບັນຫາສຳຄັນ ຈະຕົກລົງດ້ວຍການລົງຄະແນນສຽງສ່ວນຫຼາຍຂອງສະມາຊິກຜູ້ມີໜ້າ ແລະ ອອກສຽງ ບັນຫາເຫຼົ່ານີ້ຖືວ່າສຳຄັນ: ຄຳແນະນຳທີ່ກ່ຽວຂ້ອງກັບການປົກປັກຮັກສາສັນຕິພາບ ແລະ ຄວາມຫມັ້ນຄົງລະຫວ່າງຊາດ, ການເລືອກຕັ້ງ ສະມາຊິກ ບໍ່ຖາວອນຂອງສະພາຄວາມຫມັ້ນຄົງ, ການເລືອກຕັ້ງ ສະມາຊິກຂອງສະພາເສດຖະກິດ ແລະ ສັງຄົມ, ການເລືອກຕັ້ງ ສະມາຊິກ ອາລັກຂາຕາມ ມາດຕາ 86 ວັກ 1 ຂໍ້ ຄ, ການຮັບສະມາຊິກໃໝ່ ຂອງ ສະຫະປະຊາຊາດ, ການງົດສິດ ແລະ ເອກະສິດຂອງສະມາຊິກ, ການ ຂັບໄລ່ສະມາຊິກ, ບັນຫາທີ່ກ່ຽວກັບການດຳເນີນງານຂອງ ລະບົບ ອາລັກຂາ ແລະ ບັນຫາງົບປະມານ.

3. ມະຕິຕໍ່ບັນຫາອື່ນໆ ລວມທັງການກຳນົດປະເພດ ຂອງບັນຫາທີ່ຈະຕ້ອງພິຈາລະນາດ້ວຍຄະແນນສຽງ ສອງສ່ວນສາມ, ແມ່ນຄະແນນສຽງສ່ວນໃຫຍ່ ຂອງສະມາຊິກ ຜູ້ມີໜ້າ ແລະ ອອກສຽງ.

*ມາດຕາ 19*

ສະມາຊິກ ສະຫະປະຊາຊາດ ທີ່ຈ່າຍຄ່າບຳລຸງຊັກຊ້າຈະບໍ່ສາມາດລົງຄະແນນສຽງ ຢູ່ໃນສະມັດຊາໃຫຍ່ໄດ້ ຖ້າວ່າຈຳນວນເງິນທີ່ບໍ່ຊຳລະນັ້ນຫາກເທົ່າກັນ ຫຼື ສູງກວ່າຈຳນວນເງິນບຳລຸງຂອງສອງປີຜ່ານມາ.

ເຖິງຢ່າງໃດກໍ່ຕາມ, ສະມັດຊາໃຫຍ່ສາມາດອະນຸຍາດໃຫ້ສະມາຊິກ ດັ່ງກ່າວ ລົງຄະແນນສຽງ ໄດ້ເມື່ອຮູ້ວ່າສາເຫດ ຂອງການຄ້າງຊຳລະນັ້ນແມ່ນມາຈາກສະພາວະການ ທີ່ຢູ່ນອກເໜືອຈາກຄວາມຕັ້ງໃຈຂອງສະມາຊິກປະເທດນັ້ນ.

## ວິທີດຳເນີນກອງປະຊຸມ

*ມາດຕາ 20*

ສະມັດຊາໃຫຍ່ ຈະປະຊຸມກັນຢ່າງເປັນປົກກະຕິ ໃນສະໄໝສາມັນປະຈຳປີຫນຶ່ງເທື່ອ ແລະ ໃນສະໄໝພິເສດອີກຖ້າຫາກມີຄວາມຈຳເປັນ. ການປະຊຸມສະມັດຊາໃຫຍ່ສະໄໝພິເສດຈະຮຽກໂດຍ ເລຂາທິການໃຫຍ່ຕາມ ການຮ້ອງຂໍຂອງສະພາຄວາມໝັ້ນຄົງ ຫຼື ຂອງສະມາຊິກສ່ວນໃຫຍ່ຂອງ ສະຫະປະຊາຊາດ.

*ມາດຕາ 21*

ສະມັດຊາໃຫຍ່ຈະຮັບເອົາຂໍ້ບັງຄັບລະບຽບ ການປະຊຸມສະມັດຊາໃຫຍ່ຈະເລືອກຕັ້ງປະທານຂອງຕົນ ສຳລັບແຕ່ລະສະໄຫມປະຊຸມ.

*ມາດຕາ 22*

ສະມັດຊາໃຫຍ່ສາມາດສ້າງອົງກອນຊ່ວຍວຽກ ຊຶ່ງເຫັນວ່າຈຳເປັນສຳລັບການປະຕິບັດໜ້າທີ່ຂອງຕົນ.

# ໝວດທີ່ V
## ສະພາຄວາມໝັ້ນຄົງ

### ອົງປະກອບ

*ມາດຕາ 23*

1. ສະພາຄວາມໝັ້ນຄົງ ປະກອບດ້ວຍສະມາຊິກສະຫະປະຊາຊາດ 15 ປະເທດ. ໂດຍມີ ສາທາລະນະລັດ ປະຊາຊົນຈີນ, ສາທາລະນະລັດ ຝຼັ່ງ, ສະຫະພາບ ສາທາລະນະລັດ ສັງຄົມນິຍົມ ໂຊວຽດ, ສະຫະລາດຊະອານາຈັກ ອັງກິດ ແລະ ອຽກລັງເໜືອ ແລະ ສະຫະລັດອາເມລິກາ ເປັນສະມາຊິກຖາວອນ. ສະມາຊິກບໍ່ຖາວອນອີກ 10 ປະເທດ ຈະຖືກເລືອກຕັ້ງໂດຍສະມັດຊາໃຫຍ່, ໂດຍຄໍານຶງເປັນພິເສດ ແລະ ກ່ອນອື່ນໝົດເຖິງການປະກອບສ່ວນ ດ້ານເງິນອຸດໜູນຂອງສະມາຊິກຂອງສະຫະປະຊາຊາດ ເພື່ອປົກປັກຮັກສາ ສັນຕິພາບ ແລະ ຄວາມຫມັ້ນຄົງລະຫວ່າງຊາດ ແລະ ຈຸດປະສົງອື່ນໆຂອງອົງການກໍ່ຄືການແບ່ງປັນດ້ວຍຄວາມເຫມາະສົມຕາມເຂດພູມມີສາດອີກດ້ວຍ.

2. ສະມາຊິກບໍ່ຖາວອນ ຂອງສະພາຄວາມຫມັ້ນຄົງຈະໄດ້ຮັບການເລືອກຕັ້ງໃນກໍານົດ 2 ປີ. ໃນການເລືອກຕັ້ງຄັ້ງທໍາອິດຂອງສະມາຊິກບໍ່ຖາວອນຫຼັງຈາກທີ່ສະມາຊິກສະພາຄວາມຫມັ້ນຄົງໄດ້ເພີ່ມຂຶ້ນຈາກ

11 ເປັນ 15 ປະເທດນັ້ນ, ສອງໃນສີ່ປະເທດທີ່ເພີ່ມຂຶ້ນຈະໄດ້ຮັບເລືອກຕັ້ງໃນກຳນົດໜຶ່ງປີ. ສະມາຊິກທີ່ພົ້ນຕຳແໜ່ງໄປແລ້ວບໍ່ມີສິດເຂົ້າຮັບເລືອກຕັ້ງ ໃນທັນທີໄດ້.

3. ສະມາຊິກແຕ່ລະປະເທດ ຂອງສະພາຄວາມໝັ້ນຄົງ ຈະມີຜູ້ແທນຫນຶ່ງຄົນປະຈຳສະພາ.

## ໜ້າທີ່ ແລະ ອຳນາດ

*ມາດຕາ 24*

1. ເພື່ອຮັບປະກັນການດຳເນີນງານ ຢ່າງວ່ອງໄວ ແລະ ມີປະສິດທິຜົນ ຂອງສະຫະປະຊາຊາດ, ສະມາຊິກຈຶ່ງມອບຄວາມຮັບຜິດຊອບອັນສຳຄັນກ່ຽວກັບການປົກປັກຮັກສາສັນຕິພາບ ແລະ ຄວາມຫມັ້ນຄົງລະຫວ່າງຊາດ ໃຫ້ແກ່ສະພາຄວາມຫມັ້ນຄົງ ແລະ ຮັບຮູ້ວ່າໃນການປະຕິບັດຫນ້າທີ່ຕາມຄວາມຮັບຜິດຊອບນີ້ ສະພາຄວາມຫມັ້ນຄົງດຳເນີນໃນນາມຂອງສະມາຊິກ.

2. ໃນການປະຕິບັດຫນ້າທີ່ດັ່ງກ່າວນີ້, ສະພາຄວາມຫມັ້ນຄົງຈະດຳເນີນໃຫ້ໄປຕາມເປົ້າໝາຍ ແລະ ຫຼັກການຂອງ ສະຫະປະຊາຊາດ. ອຳນາດສະເພາະທີ່ມອບໃຫ້ແກ່ຄວາມໝັ້ນຄົງ ເພື່ອປະຕິບັດໜ້າທີ່ດັ່ງກ່າວ ແມ່ນໄດ້ກຳນົດໄວ້ ໃນຫມວດທີ VI, VII, VIII, ແລະ ທີ 12.

3. ສະພາຄວາມຫມັ້ນຄົງ ຈະສະເຫນີບົດລາຍງານປະຈຳປີ ແລະ ບົດ

ລາຍງານພິເສດ ໃນເມື່ອຈຳເປັນຕໍ່ສະມັດຊາໃຫຍ່ ເພື່ອໃຫ້ພິຈາລະນາ.

*ມາດຕາ 25*

ສະມາຊິກສະຫະປະຊາຊາດ ຕົກລົງຍອມຮັບ ແລະ ປະຕິບັດບັນດາມະຕິຂອງສະພາຄວາມໝັ້ນຄົງ ຕາມກົດບັດສະບັບນີ້.

*ມາດຕາ 26*

ເພື່ອສົ່ງເສີມການສ້າງ ແລະ ປົກປັກຮັກສາ ສັນຕິພາບ ແລະ ຄວາມໝັ້ນຄົງລະຫວ່າງຊາດ ໂດຍການນຳເອົາຊັບພະຍາກອນມະນຸດ ແລະ ເສດຖະກິດຂອງ ໂລກມາໃຊ້ໃນການປະກອບອາວຸດ ໃຫ້ໜ້ອຍທີ່ສຸດ, ສະພາຄວາມໝັ້ນຄົງໄດ້ຮັບມອບໝາຍໃຫ້ຄົ້ນຄວ້າແຜນການທີ່ຈະສະເໜີຕໍ່ ສະມາຊິກສະຫະປະຊາຊາດ ເພື່ອສ້າງລະບົບຂໍ້ບັງຄັບວ່າດ້ວຍການປະກອບອາວຸດ, ທາງນີ້ດ້ວຍຄວາມຊ່ວຍເຫຼືອ ຂອງຄະນະກຳມະການ ເສນາທິການທະຫານ ຕາມທີ່ໄດ້ບົ່ງໄວ້ໃນ ມາດຕາ 47.

## ການລົງຄະແນນສຽງ

*ມາດຕາ 27*

1. ສະມາຊິກແຕ່ລະປະເທດ ສະພາຄວາມໝັ້ນຄົງມີຄະແນນສຽງ

ຫນຶ່ງຄະແນນ.

2. ການດຳເນີນກອງປະຊຸມ ຂອງສະພາຄວາມຫມັ້ນຄົງ ແມ່ນຜ່ານດ້ວຍການລົງຄະແນນສຽງເຫັນດີ ຂອງສະມາຊິກເກົ້າປະເທດ.

3. ມະຕິຂອງສະພາຄວາມຫມັ້ນຄົງກ່ຽວກັບເລື່ອງອື່ນໆ ແມ່ນຜ່ານດ້ວຍຄະແນນສຽງເຫັນດີຂອງສະມາຊິກເກົ້າປະເທດ ຊຶ່ງໃນນັ້ນ ນັບທັງຄະແນນສຽງເຫັນດີ ຂອງສະມາຊິກຖາວອນທຸກປະເທດ, ແຕ່ວ່າການລົງມະຕິຕາມຫມວດທີ VI ແລະ ຕາມວັກ 3 ຂອງ ມາດຕາ 52 ນັ້ນຄູ່ກໍລະນີ ໃນການຂັດແຍ້ງຈະຕ້ອງງົດເວັ້ນຈາກການລົງຄະແນນສຽງ. ມະຕິຂອງສະພາຄວາມຫມັ້ນຄົງກ່ຽວກັບເລື່ອງອື່ນໆ ແມ່ນຜ່ານດ້ວຍຄະແນນສຽງ ເຫັນດີຂອງສະມາຊິກເກົ້າປະເທດ ຊຶ່ງໃນນັ້ນ ນັບທັງຄະແນນສຽງເຫັນດີຂອງສະມາຊິກຖາວອນ ທຸກປະເທດ , ແຕ່ວ່າ ການລົງມະຕິຕາມຫມວດທີ VI ແລະ ຕາມວັກ 3 ຂອງ ມາດຕາ 52 ນັ້ນຄູ່ກໍລະນີ ໃນການຂັດແຍ້ງ ຈະຕ້ອງງົດເວັ້ນຈາກການລົງຄະແນນສຽງ.

## ວິທີດຳເນີນກອງປະຊຸມ.

*ມາດຕາ 28*

1. ສະພາຄວາມຫມັ້ນຄົງ ຖືກຈັດຕັ້ງໃນລັກສະນະທີ່ສາມາດປະຕິບັດໜ້າທີ່ໄດ້ເປັນປະຈຳ. ໃນເປົ້າໝາຍດັ່ງກ່າວ, ສະມາຊິກແຕ່ລະປະເທດຂອງ ສະພາຄວາມຫມັ້ນຄົງຈະຕ້ອງມີຜູ້ແທນປະຈຳຕະຫຼອດເວລາ

ຢູ່ທີ່ຕັ້ງສໍານັກງານອົງການຂອງ ອົງການສະຫະປະຊາຊາດ.

2. ສະພາຄວາມຫມັ້ນຄົງຈະປະຊຸມກັນເປັນໄລຍະ ເຊິ່ງຖ້າຫາກ ຕ້ອງການ ແຕ່ລະປະເທດສະມາຊິກສາມາດໃຫ້ຄະແນນລັດຖະບານ ຂອງຕົນຜູ້ຫນຶ່ງ ຫຼື ຜູ້ໃດຫນຶ່ງ ທີ່ຖືກແຕ່ງຕັ້ງເປັນພິເສດໃຫ້ເປັນຜູ້ແທນ ຂອງຕົນເຂົ້າຮ່ວມປະຊຸມ.

3. ສະພາຄວາມໝັ້ນຄົງອາດຈະປະຊຸມ ຢູ່ບ່ອນອື່ນໆນອກຈາກທີ່ ຕັ້ງຂອງສະຫະປະຊາຊາດກໍໄດ້ ຖ້າຫາກພິຈາລະນາເຫັນວ່າຈະອໍານວຍ ຄວາມສະດວກທີ່ສຸດໃຫ້ແກ່ວຽກງານຂອງຕົນ.

*ມາດຕາ 29*

ສະພາຄວາມຫມັ້ນຄົງ ສາມາດຕັ້ງອົງກອນຊ່ວຍວຽກຂອງຕົນຂຶ້ນ ໄດ້ ຖ້າຫາກເຫັນວ່າຈໍາເປັນສໍາລັບການປະຕິບັດໜ້າທີ່ຂອງຕົນ.

*ມາດຕາ 30*

ສະພາຄວາມຫມັ້ນຄົງ ຈະສ້າງຂໍ້ບັງຄັບລະບຽບການພາຍໃນຂອງ ຕົນ ຊຶ່ງໃນນັ້ນຈະກໍານົດວິທີການແຕ່ງຕັ້ງປະທານຂອງຕົນ.

*ມາດຕາ 31*

ສະມາຊິກສະຫະປະຊາຊາດ ທີ່ບໍ່ໄດ້ເປັນສະມາຊິກ ຂອງສະພາຄວາມໝັ້ນຄົງ ສາມາດເຂົ້າຮ່ວມການອະພິປາຍບັນຫາໃດກໍໄດ້ທີ່ນໍາສະເໜີຕໍ່ສະພາຄວາມໝັ້ນຄົງ, ໂດຍບໍ່ມີສິດລົງຄະແນນສຽງ, ໃນເມື່ອສະພາຄວາມໝັ້ນຄົງພິຈາລະນາເຫັນວ່າຜົນປະໂຫຍດຂອງສະມາຊິກປະເທດນັ້ນໄດ້ຮັບການກະທົບກະເທືອນ.

*ມາດຕາ 32*

ສະມາຊິກສະຫະປະຊາຊາດ ທີ່ບໍ່ໄດ້ເປັນສະມາຊິກສະພາຄວາມໝັ້ນຄົງ ຫຼື ລັດໃດໜຶ່ງທີ່ບໍ່ໄດ້ເປັນສະມາຊິກຂອງສະຫະປະຊາຊາດ ຫາກເປັນຄູ່ກໍລະນີການຂັດແຍ້ງເຊິ່ງຢູ່ໃນການພິຈາລະນາຂອງສະພາຄວາມໝັ້ນຄົງ, ປະເທດນັ້ນຈະຖືກເຊີນເຂົ້າຮ່ວມອະພິປາຍກ່ຽວກັບຂໍ້ຂັດແຍ້ງດັ່ງກ່າວ ໂດຍບໍ່ມີສິດລົງຄະແນນສຽງ. ສະພາຄວາມໝັ້ນຄົງຈະກໍານົດເງື່ອນໄຂ ທີ່ເຫັນວ່າຖືກຕ້ອງສໍາລັບການເຂົ້າຮ່ວມຂອງລັດ ທີ່ບໍ່ແມ່ນສະມາຊິກຂອງສະຫະປະຊາຊາດ.

# ໝວດທີ່ VI
## ການແກ້ໄຂຂໍ້ຂັດແຍ້ງ ຢ່າງສັນຕິວິທີ

*ມາດຕາ 33*

1. ຜູ້ເປັນຄູ່ກໍລະນີການຂັດແຍ້ງ ຊຶ່ງຖ້າຫາກວ່າການສືບຕໍ່ຂັດແຍ້ງກັນໄປອາດຈະຂົ່ມຂູ່ການປົກປັກຮັກສາ ສັນຕິພາບ ແລະ ຄວາມໝັ້ນຄົງລະຫວ່າງຊາດ, ກ່ອນອື່ນໝົດ, ຈະຕ້ອງຊອກສະແຫວງຫາ ການແກ້ໄຂໂດຍການເຈລະຈາ, ການໄຕ່ສວນ, ການໄກ່ເກ່ຍ, ການປະນີປະນອມ, ອະນຸຍາໂຕຕຸລາການ, ການແກ້ໄຂໂດຍທາງສານ, ການຫັນໜ້າເຂົ້າອາໄສອົງການຕົວແທນ ຫຼື ຂໍ້ຕົກລົງພູມີພາກ ຫຼື ວິທີສັນຕິອື່ນໆ ທີ່ຄູ່ກໍລະນີອາດຈະເລືອກເອົາ.

2. ເມື່ອເຫັນວ່າຈໍາເປັນສະພາຄວາມໝັ້ນຄົງອາດຈະເຊື້ອເຊີນໃຫ້ຄູ່ກໍລະນີການຂັດແຍ້ງມາແກ້ໄຂບັນຫານໍາກັນດ້ວຍວິທີໃດໜຶ່ງທີ່ກ່າວມານັ້ນ.

*ມາດຕາ 34*

ສະພາຄວາມໝັ້ນຄົງສາມາດສືບສວນທຸກໆກໍລະນີການຂັດແຍ້ງ

ຫຼື ສະຖານະການທີ່ອາດຈະນຳໄປສູ່ຄວາມບໍ່ເຂົ້າໃຈກັນລະຫວ່າງປະຊາຊາດ ຫຼື ກໍ່ໃຫ້ເກີດການຜິດຖຽງກັນ, ເພື່ອຊອກຮູ້ວ່າຖ້າການສືບຕໍ່ການຂັດແຍ້ງ ຫຼື ສະຖານະການແນວນັ້ນອາດຈະເປັນການຂົ່ມຂູ່ຕໍ່ການປົກປັກຮັກສາສັນຕິພາບ ແລະ ຄວາມຫມັ້ນຄົງລະຫວ່າງຊາດ.

*ມາດຕາ 35*

1. ສະມາຊິກສະຫະປະຊາຊາດ ສາມາດນຳສະເຫນີການຂັດແຍ້ງ ຫຼື ສະຖານະການໃດນຶ່ງຕາມລັກສະນະທີ່ກຳນົດໄວ້ໃນມາດຕາ 34 ຕໍ່ສະພາຄວາມຫມັ້ນຄົງ ຫຼື ສະມັດຊາໃຫຍ່.

2. ລັດໃດນຶ່ງທີ່ບໍ່ໄດ້ເປັນສະມາຊິກຂອງສະຫະປະຊາຊາດສາມາດນຳສະເຫນີການຂັດແຍ້ງທີ່ຕົນເປັນຄູ່ກໍລະນີຕໍ່ສະພາຄວາມຫມັ້ນຄົງ ຫຼື ສະມັດຊາໃຫຍ່, ຖ້າວ່າລັດດັ່ງກ່າວຫາກຍອມຮັບລ່ວງຫນ້າວ່າຈະປະຕິບັດພັນທະຂອງການແກ້ໄຂບັນຫາຢ່າງສັນຕິວິທີຕາມທີ່ບົ່ງໄວ້ໃນກົດບັດສະບັບນີ້ ໃນການແກ້ໄຂຂໍ້ຂັດແຍ້ງນີ້.

3. ການກະທຳຂອງສະມັດຊາໃຫຍ່ໃນເລື່ອງທີ່ຖືກສະເຫນີຂຶ້ນມາຕາມມາດຕານີ້ຈະຕ້ອງເປັນໄປຕາມບົດບັນຍັດຂອງ ມາດຕາ 11 ແລະ 12.

*ມາດຕາ 36*

1. ສະພາຄວາມຫມັ້ນຄົງສາມາດແນະນຳໃນໄລຍະໃດກໍໄດ້ຂອງວິວັດທະນາການຂອງການຂັດແຍ້ງວິທີດຳເນີນການ ຫຼື ວິທີການສ້າງຄວາມເຂົ້າໃຈທີ່ເຫມາະສົມຕາມລັກສະນະທີ່ບົ່ງໄວ້ໃນມາດຕາ 33 ຫຼື ສະຖານະການທີ່ຄ້າຍກັນນີ້.

2. ສະພາຄວາມຫມັ້ນຄົງຈະຕ້ອງເອົາມາພິຈາລະນາເຖິງວິທີດຳເນີນການທີ່ຄູ່ກໍລະນີໄດ້ຮັບເອົາແລ້ວເພື່ອແກ້ໄຂການຂັດແຍ້ງ.

3. ໃນການໃຫ້ຄຳແນະນຳຕາມມາດຕານີ້, ສະພາຄວາມຫມັ້ນຄົງຈະຕ້ອງຄຳນຶງທີ່ວ່າໂດຍທົ່ວໄປແລ້ວການຂັດແຍ້ງໃນທາງກົດໝາຍ ຈະຕ້ອງຖືກນຳສະເຫນີໂດຍຄູ່ກໍລະນີ ຕໍ່ສານຍຸຕິທຳລະຫວ່າງປະເທດ ຕາມບົດບັນຍັດຂອງທຳມະນູນສານດັ່ງກ່າວ.

*ມາດຕາ 37*

1. ຖ້າວ່າຄູ່ກໍລະນີການຂັດແຍ້ງຕາມລັກສະນະທີ່ບົ່ງໄວ້ໃນມາດ 33 ຫາກບໍ່ສາມາດປະຊຸມກັນແກ້ໄຂຕາມວິທີ ທີ່ກຳນົດໄວ້ ໃນມາດຕາດັ່ງກ່າວແລ້ວ, ຄູ່ກໍລະນີຈະນຳເລື່ອງນັ້ນໄປສະເຫນີຕໍ່ສະພາຄວາມຫມັ້ນຄົງ.

2. ຖ້າວ່າສະພາຄວາມຫມັ້ນຄົງ ຫາກເຫັນວ່າການສືບຕໍ່ຂັດແຍ້ງກັນອາດຈະຂົ່ມຂູ່ຕໍ່ການປົກປັກຮັກສາສັນຕິພາບ ແລະ ຄວາມຫມັ້ນຄົງ

ລະຫວ່າງຊາດ, ສະພາຄວາມຫມັ້ນຄົງຕ້ອງຕັດສິນວ່າຕົນຈະດຳເນີນການປະຕິບັດ ມາດຕາ 36 ຫຼື ຈະແນະນຳວິທີການແກ້ໄຂທີ່ຕົນເຫັນວ່າເຫມາະສົມ.

*ມາດຕາ 38*

ຖ້າວ່າຄູ່ກໍລະນີຫາກຮ້ອງຂໍ ສະພາຄວາມຫມັ້ນຄົງສາມາດເຮັດຄຳແນະນຳແກ່ຄູ່ກໍລະນີໃນການຂັດແຍ້ງ ເພື່ອແກ້ໄຂບັນຫາຢ່າງສັນຕິວິທີ, ທັງນີ້ໂດຍບໍ່ໃຫ້ແຕະຕ້ອງຕໍ່ບົດບັນຍັດຂອງ ມາດຕາ 33 ເຖິງ 37.

# ໝວດທີ່ VII
## ການດຳເນີນການໃນກໍລະນີມີການຂົ່ມຂູ່ຕໍ່ສັນຕິພາບ, ການມ້າງເພສັນຕິພາບ ແລະ ການກະທຳ ການຮຸກຮານ

*ມາດຕາ 39*

ສະພາຄວາມໝັ້ນຄົງ ຈະພິຈາລະນາການຂົ່ມຂູ່ຕໍ່ສັນຕິພາບ, ການມ້າງເພສັນຕິພາບ ຫຼື ການກະທຳການຮຸກຮານ ແລະ ເຮັດຄຳແນະນຳ ຫຼື ຕັດສິນວ່າຈະເອົາມາດຕະການໃດຕາມມາດຕາ 41 ແລະ 42 ເພື່ອປົກປັກຮັກສາ ຫຼື ຟື້ນຟູສັນຕິພາບ ແລະ ຄວາມໝັ້ນຄົງ ລະຫວ່າງຊາດ.

*ມາດຕາ 40*

ເພື່ອປ້ອງກັນບໍ່ໃຫ້ສະຖານະການຊຸດໂຊມລົງກວ່າເກົ່າ, ສະພາຄວາມໝັ້ນຄົງສາມາດເຊີນ ຄູ່ກໍລະນີທີ່ກ່ຽວຂ້ອງໃຫ້ປະຕິບັດຕາມມາດຕະການຊົ່ວຄາວທີ່ເຫັນວ່າຈຳເປັນ ຫຼື ສົມຄວນຈະເປັນໄປ, ກ່ອນທີ່ຈະເຮັດຄຳແນະນຳ ຫຼື ຕັດສິນເອົາມາດຕະການຕາມມາດຕາ 39. ບັນດາມາດຕະການຊົ່ວຄາວນີ້ ຈະບໍ່ກະທົບກະເທືອນຕໍ່ສິດ, ຄວາມ

ຮຽກຮ້ອງ ຫຼື ຖານະຂອງຄູ່ກໍລະນີ ທີ່ກ່ຽວຂ້ອງ. ໃນກໍລະນີທີ່ບໍ່ປະຕິບັດຕາມມາດຕະການຊົ່ວຄາວດັ່ງກ່າວນີ້, ສະພາຄວາມຫມັ້ນຄົງກໍ່ຈະຕ້ອງຄໍານຶງເຖິງຄວາມບໍ່ສໍາເລັດນີ້ເຊັ່ນກັນ.

*ມາດຕາ 41*

ສະພາຄວາມຫມັ້ນຄົງສາມາດຕັດສິນວ່າຈະເອົາມາດຕະການໃດ, ທີ່ບໍ່ນໍາໄປສູ່ການນໍາໃຊ້ກໍາລັງອາວຸດ, ເພື່ອເຮັດໃຫ້ມະຕິຂອງຕົນໄດ້ຮັບຜົນ, ແລະ ສາມາດເຊີນສະມາຊິກຊະຫະປະຊາຊາດ ໃຫ້ປະຕິບັດຕາມມາດຕະການດັ່ງກ່າວນີ້. ບັນດາມາດຕະການນີ້ອາດຈະລວມເຖິງການຕັດສາຍສໍາພັນຢ່າງສິ້ນເຊີງ ຫຼື ບາງສ່ວນ, ດ້ານເສດຖະກິດ ແລະ ການຄົມມະນາຄົມ ທາງລົດໄຟ, ທາງທະເລ, ທາງອາກາດ, ທາງໄປສະນີ, ທາງໂທລະເລກ, ທາງວິທະຍຸ ແລະ ພາຫະນະການຄົມມະນາຄົມອື່ນໆ ພ້ອມດ້ວຍການຕັດສໍາພັນທາງດ້ານການທູດ.

*ມາດຕາ 42*

ຖ້າສະພາຄວາມຫມັ້ນຄົງ ຫາກຊັ່ງຊາເຫັນວ່າມາດຕະການຕາມທີ່ບົ່ງໄວ້ໃນມາດຕາ 41 ອາດຈະບໍ່ເຫມາະສົມ ຫຼື ເຫັນວ່າບໍ່ໄດ້ຮັບຜົນ, ສະພາຄວາມຫມັ້ນຄົງສາມາດດໍາເນີນການໃຊ້ກໍາລັງທາງອາກາດ, ທາງ

ທະເລ ຫຼື ທາງພາກພື້ນດິນ ທີ່ເຫັນວ່າຈຳເປັນໃນການປົກປັກຮັກສາ ຫຼື ຟື້ນຟູສັນຕິພາບ ແລະ ຄວາມໝັ້ນຄົງລະຫວ່າງຊາດ. ການດຳເນີນການດັ່ງກ່າວນີ້ ອາດຈະລວມເຖິງການສະແດງແສນຍານຸພາບ, ມາດຕະການປິດລ້ອມ ແລະ ການປະຕິບັດການອື່ນໆ ໂດຍກຳລັງທາງອາກາດ, ທາງທະເລ ຫຼື ທາງພາກພື້ນດິນຂອງບັນດາສະມາຊິກສະຫະປະຊາຊາດ.

*ມາດຕາ 43*

1. ເພື່ອປະກອບສ່ວນເຂົ້າໃນການປົກປັກຮັກສາສັນຕິພາບ ແລະ ຄວາມໝັ້ນຄົງລະຫວ່າງຊາດ, ສະມາຊິກຂອງສະຫະປະຊາຊາດທັງໝົດຈະຮັບພາລະຈັດສົ່ງກຳລັງອາວຸດ, ການຊ່ວຍເຫຼືອ ແລະ ອຳນວຍຄວາມສະດວກຕ່າງໆ ລວມທັງສິດໃນການຜ່ານດິນແດນຕາມທີ່ຈຳເປັນ ໃຫ້ແກ່ຄວາມໝັ້ນຄົງ ເມື່ອສະພາຄວາມໝັ້ນຄົງໄດ້ເຊື້ອເຊີນ ແລະ ອີງຕາມຂໍ້ຕົກລົງພິເສດສະບັບນຶ່ງ ຫຼື ຫຼາຍສະບັບທີ່ໄດ້ກະທຳຮ່ວມກັນ.

2. ຂໍ້ຕົກລົງສະບັບນຶ່ງ ຫຼື ຫຼາຍສະບັບທີ່ກ່າວມານັ້ນ ຈະກຳນົດຈຳນວນພົນ ແລະ ປະເພດຂອງກຳລັງ, ຂັ້ນຂອງການຕຽມພ້ອມ ແລະ ຈຸດທີ່ຕັ້ງໂດຍທົ່ວໄປຂອງກຳລັງພ້ອມດ້ວຍລັກສະນະຂອງການອຳ ນວຍຄວາມສະດວກ ແລະ ການຊ່ວຍເຫຼືອທີ່ຈັດຫາໄວ້ໃຫ້.

3. ໂດຍການລິເລີ່ມຂອງສະພາຄວາມໝັ້ນຄົງຈະມີການເຈລະຈາກັນໄວທີ່ສຸດເທົ່າທີ່ຈະເປັນໄປໄດ້ ກ່ຽວກັບຂໍ້ຕົກລົງກັນສະບັບນຶ່ງ ຫຼື

ຫຼາຍສະບັບ. ຂໍ້ຕົກລົງດັ່ງກ່າວຈະໄດ້ຮັບການລົງນາມລະຫວ່າງສະພາຄວາມໝັ້ນຄົງ ແລະ ສະມາຊິກ; ຫຼື ລະຫວ່າງສະພາຄວາມໝັ້ນຄົງ ແລະ ກຸ່ມປະເທດສະມາຊິກ, ແລະຈະຕ້ອງໄດ້ຮັບການໃຫ້ສັດຕະຍາບັນໂດຍລັດທີ່ລົງນາມ ຕາມຂັ້ນຕອນຂອງລະບຽບລັດຖະທຳມະນູນຂອງລັດເລົ່ານັ້ນ.

*ມາດຕາ 44*

1. ເມື່ອສະພາຄວາມໝັ້ນຄົງ ໄດ້ຕົກລົງທີ່ຈະໃຊ້ກຳລັງແລ້ວ, ກ່ອນທີ່ຈະເຊື້ອເຊີນໃຫ້ສະມາຊິກ ທີ່ບໍ່ມີຜູ້ແທນຢູ່ໃນສະພາຄວາມໝັ້ນຄົງຈັດສົ່ງກຳລັງທະຫານຂອງຕົນເພື່ອປະຕິບັດພັນທະທີ່ໄດ້ຮັບໄວ້ຕາມມາດຕາ 43, ສະພາຄວາມໝັ້ນຄົງຈະຕ້ອງເຊີນສະມາຊິກປະເທດດັ່ງກ່າວນັ້ນເຂົ້າຮ່ວມໃນການພິຈາລະນາກ່ຽວກັບການໃຊ້ກອງກຳລັງທະຫານຂອງສະມາຊິກປະເທດນັ້ນຖ້າສະມາຊິກດັ່ງກ່າວຫາກຕ້ອງການ.

*ມາດຕາ 45*

ເພື່ອຊ່ວຍສະຫະປະຊາຊາດ ໃຫ້ສາມາດດຳເນີນມາດຕະການທາງທະຫານໄດ້ໂດຍດ່ວນ. ສະມາຊິກຂອງສະຫະປະຊາຊາດ ຈະຕ້ອງຈັດສັນກຳລັງທາງອາກາດໄວ້ໃຫ້ຢູ່ໃນທ່າຕຽມພ້ອມໃນທັນທີເພື່ອດຳເນີນ

ການບັງຄັບລະຫວ່າງຊາດຮ່ວມກັນ. ສະພາຄວາມຫມັ້ນຄົງ, ດ້ວຍການຊ່ວຍເຫຼືອຂອງຄະນະກໍາມະການເສນາທິການທະຫານ ຈະກໍານົດຈໍານວນພົນ ແລະ ຂັ້ນຂອງການຕຽມພ້ອມຂອງກອງກໍາລັງທະຫານພ້ອມທັງຂຶ້ນແຜນການດໍາເນີນການຮ່ວມກັນ, ໃນຂອບເຂດ ທີ່ບົ່ງໄວ້ໃນຂໍ້ຕົກລົງພິເສດສະບັບນຶ່ງ ຫຼື ຫຼາຍສະບັບທີ່ກໍານົດໄວ້ໃນ ມາດຕາ 43.

*ມາດຕາ 46*

ສະພາຄວາມໝັ້ນຄົງ ໂດຍການຊ່ວຍເຫຼືອຂອງຄະນະກໍາມະການເສນາທິການທະຫານຈະເປັນຜູ້ຂຶ້ນແຜນສໍາລັບການໃຊ້ກໍາລັງທະຫານ.

*ມາດຕາ 47*

1. ໃຫ້ຈັດຕັ້ງ ຄະນະກໍາມະການ ເສນາທິການທະຫານ ຂຶ້ນເພື່ອໃຫ້ຄໍາປຶກສາ ແລະ ຊ່ວຍເຫຼືອສະພາຄວາມຫມັ້ນຄົງ ໃນບັນຫາຕ່າງໆດ້ານການທະຫານທີ່ຈໍາເປັນສໍາລັບສະພາຄວາມຫມັ້ນຄົງເພື່ອປົກປັກຮັກສາສັນຕິພາບ ແລະ ຄວາມຫມັ້ນຄົງ ລະຫວ່າງຊາດ, ການໃຊ້ ແລະການບັງຄັບບັນຊາກໍາລັງທະຫານທີ່ມອບໃຫ້ ສະພາຄວາມໝັ້ນຄົງ, ລະບຽບການປະກອບອາວຸດ ແລະ ການຫຼຸດຜ່ອນອາວຸດ ທີ່ອາດຈະມີຂຶ້ນ.

2. ຄະນະກໍາມະການເສນາທິການທະຫານ ຈະປະກອບດ້ວຍຫົວ

ໜ້າເສນາທິການ ຂອງສະມາຊິກຖາວອນ ສະພາຄວາມໝັ້ນຄົງ ຫຼື ຜູ້ແທນຂອງບຸກຄົນເຫຼົ່ານັ້ນ. ຄະນະກຳມະການຈະເຊື້ອເຊີນສະມາຊິກຂອງສະຫະປະຊາຊາດທີ່ບໍ່ມີຜູ້ແທນປະຈຳຢູ່ໃນຄະນະກຳມະການ ໃຫ້ເຂົ້າຮ່ວມງານກັບຄະນະກຳມະການ, ຖ້າວ່າການເຂົ້າຮ່ວມຂອງສະມາຊິກດັ່ງກ່າວ ຫາກມີຄວາມຈຳເປັນໃຫ້ແກ່ການປະຕິບັດງານຢ່າງມີປະສິດທິຜົນ.

3. ຄະນະກຳມະການເສນາທິການທະຫານ ຈະຕ້ອງຮັບຜິດຊອບ, ພາຍໃຕ້ອຳນາດຂອງສະພາຄວາມຫມັ້ນຄົງ, ຕໍ່ການຊີ້ນຳດ້ານຍຸດທະສາດກ່ຽວກັບກຳລັງທະຫານທີ່ໄດ້ມອບຫມາຍ ໃຫ້ແກ່ສະພາຄວາມຫມັ້ນຄົງ. ບັນຫາກ່ຽວກັບການບັງຄັບບັນຊາ ກຳລັງດັ່ງກ່າວຈະພິຈາລະນາແກ້ໄຂຕາມພາຍຫຼັງ.

4. ຄະນະກຳມະການເສນາທິການທະຫານ ສາມາດສ້າງຕັ້ງຄະນະອະນຸກຳມະການພູມີພາກຂຶ້ນໄດ້ ໂດຍໄດ້ຮັບການອະນຸຍາດຈາກສະພາຄວາມຫມັ້ນຄົງ ແລະ ຫຼັງຈາກໄດ້ປຶກສາຫາລືກັບອົງການພູມີພາກກ່ຽວຂ້ອງ.

*ມາດຕາ 48*

1. ບັນດາມາດຕະການອັນຈຳເປັນໃຫ້ແກ່ການປະຕິບັດມະຕິຂອງສະພາຄວາມຫມັ້ນຄົງເພື່ອການປົກປັກຮັກສາສັນຕິພາບ ແລະ ຄວາມ

ຫມັ້ນຄົງ ລະຫວ່າງຊາດ ຈະຖືກຮັບຮອງເອົາໂດຍສະມາຊິກທັງຫມົດ ຂອງສະຫະປະຊາຊາດ ຫຼື ບາງປະເທດ ສະມາຊິກເທົ່ານັ້ນແລ້ວແຕ່ການ ຕີລາຄາຂອງສະພາຄວາມຫມັ້ນຄົງ.

2. ມະຕິດັ່ງກ່າວຈະຖືກປະຕິບັດ ໂດຍສະມາຊິກຂອງສະຫະປະຊາ ຊາດ ໂດຍກົງ ແລະ ໂດຍຜ່ານການດຳເນີນການ ຂອງສະມາຊິກດັ່ງກ່າວ ນີ້ ໃນບັນດາອົງການລະຫວ່າງຊາດ ທີ່ກ່ຽວຂ້ອງຊຶ່ງປະເທດນັ້ນ ເປັນ ສະມາຊິກຢູ່.

*ມາດຕາ 49*

ສະມາຊິກສະຫະປະຊາຊາດ ຈະຮ່ວມກັນອຳນວຍການຊ່ວຍເຫຼືອ ຊຶ່ງກັນ ແລະ ກັນ ໃນການປະຕິບັດມາດຕະການທີ່ສະພາຄວາມຫມັ້ນ ຄົງໄດ້ຕົກລົງກັນແລ້ວ.

*ມາດຕາ 50*

ຫາກສະພາຄວາມຫມັ້ນຄົງ ໄດ້ດຳເນີນມາດຕະການປ້ອງກັນ ຫຼື ບັງຄັບຕໍ່ລັດໃດນຶ່ງ, ສ່ວນລັດອື່ນໆເຖິງແມ່ນວ່າຈະເປັນສະມາຊິກຂອງ ສະຫະປະຊາຊາດ ຫຼື ບໍ່ກໍຕາມ ຖ້າຫາກປະເຊີນກັບບັນຫາຫຍຸ້ງຍາກ ເປັນພິເສດ ດ້ານເສດຖະກິດອັນສືບເນື່ອງມາຈາກການປະຕິບັດມາດຕະ

ການດັ່ງກ່າວ ຍ່ອມມີສິດທີ່ຈະປຶກສາຫາລືກັບສະພາຄວາມຫມັ້ນຄົງກ່ຽວກັບການແກ້ໄຂບັນຫາເລົ່ານັ້ນ.

*ມາດຕາ 51*

ບໍ່ມີຂໍ້ຄວາມໃດໆ ໃນກົດບັດສະບັບນີ້ທີ່ຈະຕັດສິດໃນການປ້ອງກັນຕົນເອງ ໂດຍລຳພັງ ຫຼື ຮ່ວມກັນ ໃນກໍລະນີທີ່ສະມາຊິກຂອງສະຫະປະຊາຊາດ ປະເທດໃດນຶ່ງ ຫາກຕົກເປັນເປົ້າໝາຍຂອງການຮຸກຮານ ດ້ານກຳລັງອາວຸດ ຈົນກວ່າສະພາຄວາມຫມັ້ນຄົງ ຈະຮັບເອົາມາດຕະການອັນຈຳເປັນເພື່ອປົກປັກຮັກສາສັນຕິພາບ ແລະ ຄວາມຫມັ້ນຄົງລະຫວ່າງຊາດ, ມາດຕະການທີ່ສະມາຊິກໄດ້ດຳເນີນໄປໃນການໃຊ້ສິດປ້ອງກັນຕົນເອງນີ້ ຈະຕ້ອງລາຍງານໃຫ້ສະພາຄວາມຫມັ້ນຄົງຊາບໃນທັນທີ ແລະ ຈະບໍ່ກະທົບກະເທືອນຫຍັງຫມົດ ຕໍ່ອຳນາດ ແລະ ຫນ້າທີ່ ຂອງສະພາຄວາມຫມັ້ນຄົງດັ່ງທີ່ບົ່ງໄວ້ໃນກົດບັດນີ້ ໃນການດຳເນີນການທີ່ຕົນເຫັນວ່າຈຳເປັນ ເພື່ອປົກປັກຮັກສາ ຫຼື ຟື້ນຟູ ສັນຕິພາບ ແລະ ຄວາມຫມັ້ນຄົງລະຫວ່າງຊາດ ໃນທຸກໄລຍະເວລາ.

# ໝວດທີ່ VIII
## ຂໍ້ຕົກລົງພູມິພາກ

*ມາດຕາ 52*

1. ບໍ່ມີຂໍ້ຄວາມໃດໆ ໃນກົດບັດສະບັບນີ້ ທີ່ຈະຂັດຂວາງການຄົງຕົວຂອງຂໍ້ຕົກລົງ ຫຼື ປະກອບອົງການພູມິພາກສໍາລັບການແກ້ໄຂກໍລະນີທີ່ກ່ຽວກັບການປົກປັກຮັກສາສັນຕິພາບ ແລະ ຄວາມໝັ້ນຄົງລະຫວ່າງຊາດ ທີ່ເຫັນວ່າເໝາະສົມສໍາລັບການດໍາເນີນການໃນລັກສະນະພູມິພາກ ຖ້າວ່າຂໍ້ຕົກລົງ ຫຼື ອົງການດັ່ງກ່າວ ແລະ ການກະທໍານັ້ນໆ ຫາກສອດຄ່ອງກັບເປົ້າໝາຍ ແລະ ຫຼັກການຂອງສະຫະປະຊາຊາດ.

2. ສະມາຊິກຂອງສະຫະປະຊາຊາດທີ່ລົງນາມຂໍ້ຕົກລົງ ຫຼື ສ້າງອົງການດັ່ງກ່າວ ຈະຕ້ອງພະຍາຍາມສຸດຄວາມສາມາດ ເພື່ອແກ້ໄຂຂໍ້ຂັດແຍ້ງໃນຂົງເຂດຢ່າງສັນຕິວິທີ ໂດຍການອີງໃສ່ຂໍ້ຕົກລົງພູມິພາກ ຫຼື ອົງການດັ່ງກ່າວ, ກ່ອນທີ່ຈະສະເໜີເລື່ອງໄປຍັງສະພາຄວາມໝັ້ນຄົງ.

3. ສະພາຄວາມໝັ້ນຄົງ ຈະສົ່ງເສີມການພັດທະນາການແກ້ໄຂ ຂໍ້ຂັດແຍ້ງລັກສະນະຂົງເຂດຢາງສັນຕິວິທີໂດຍອາໃສຂໍ້ຕົກລົງ ຫຼື ອົງການພູມິພາກດັ່ງກ່າວ ບໍ່ວ່າຈະເປັນການລິເລີ່ມຂອງວັດກ່ຽວຂ້ອງ ຫຼື ການສະເໜີເລື່ອງມາຈາກສະພາຄວາມໝັ້ນຄົງກໍຕາມ.

4. ມາດຕານີ້ຈະບໍ່ແຕະຕ້ອງຫຍັງຫມົດຕໍ່ການນຳເອົາມາດຕາ 34 ແລະ 35 ມາໃຊ້.

*ມາດຕາ 53*

1. ສະພາຄວາມຫມັ້ນຄົງຈະຫມູນໃຊ້, ຖ້າຫາກວ່າມີຂໍ້ຕົກລົງ ຫຼື ອົງການພູມີພາກເພື່ອປະຕິບັດມາດຕະການບັງຄັບ ທີ່ໄດ້ເອົາພາຍໃຕ້ອຳນາດຂອງຕົນ. ແຕ່ວ່າຈະບໍ່ມີການດຳເນີນການບັງຄັບໃດໆ ໂດຍຂໍ້ຕົກລົງ ຫຼື ອົງການພູມີພາກ ໂດຍປາສະຈາກການອະນຸຍາດ ຂອງສະພາຄວາມຫມັ້ນຄົງ; ຍົກເວັ້ນມາດຕະການສຳລັບຕໍ່ຕ້ານລັດສັດຕູ ດັ່ງຄຳນິຍາມ ໃນວັກ 2 ຂອງມາດຕານີ້ຊຶ່ງໄດ້ບົ່ງໄວ້ໃນການປະຕິບັດ ມາດຕາ 107 ຫຼື ໃນຂໍ້ຕົກລົງພູມີພາກ ຕ້ານການຟື້ນນະໂຍບາຍການຮຸກຮານກັບຄືນມາ ໂດຍລັດສັດຕູດັ່ງກ່າວ, ຈົນກວ່າຈະຮອດເວລາທີ່ອົງການສະຫະປະຊາຊາດ ຈະສາມາດເຂົ້າຮັບຜິດຊອບ ເພື່ອປ້ອງກັນການຮຸກຮານເທື່ອໃໝ່ຂອງສັດຕູ, ຕາມຄຳຮ້ອງຂໍຂອງລັດຖະບານທີ່ກ່ຽວຂ້ອງ.

2. ຄຳວ່າ " ລັດສັດຕູ " ທີ່ໃຊ້ໃນວັກ 1 ຂອງມາດຕານີ້ຈະນຳໃຊ້ກັບທຸກລັດຊຶ່ງໃນສົງຄາມໂລກຄັ້ງທີ່ ສອງ ເຄີຍເປັນສັດຕູຕໍ່ລັດໃດນຶ່ງທີ່ລົງນາມໃນກົດບັດສະບັບນີ້.

*ມາດຕາ 54*

ສະພາຄວາມຫມັ້ນຄົງ ຈະຕ້ອງໄດ້ຮັບແຈ້ງການຢ່າງຄົບຖ້ວນຕະຫຼອດເວລາເຖິງກິດຈະກຳທີ່ໄດ້ກະທຳໄປ ຫຼື ທີ່ຄາດການໄວ້ຕາມຂໍ້ຕົກລົງພູມິພາກ ຫຼື ໂດຍອົງການພູມິພາກ ເພື່ອປົກປັກຮັກສາສັນຕິພາບ ແລະ ຄວາມຫມັ້ນຄົງລະຫວ່າງຊາດ.

# ໝວດທີ່ IX
## ການຮ່ວມມືດ້ານເສດຖະກິດ ແລະ ສັງຄົມ ລະຫວ່າງຊາດ

*ມາດຕາ 55*

ໂດຍແນໃສ່ ສ້າງເງື່ອນໄຂໃຫ້ແກ່ສະຖຽນລະພາບ ແລະ ສະຫວັດດີພາບອັນຈຳເປັນ ເພື່ອຮັບປະກັນການພົວພັນຢ່າງສັນຕິ ແລະ ແບບເພື່ອນມິດລະຫວ່າງປະຊາຊາດ ບົນພື້ນຖານການເຄົາລົບຫຼັກການສິດສະເໝີພາບ ແລະ ສິດໃນການປົກຄອງຕົນເອງ ຂອງບັນດາປະຊາຊາດ, ສະຫະປະຊາຊາດ ຈະສົ່ງເສີມ:

ກ. ມາດຕະຖານການດຳລົງຊີວິດໃຫ້ສູງຂຶ້ນ, ການມີວຽກເຮັດງານທຳ ແລະ ເງື່ອນໄຂແຫ່ງຄວາມກ້າວໜ້າ ແລະ ການພັດທະນາດ້ານເສດຖະກິດ ແລະ ສັງຄົມ ;

ຂ. ການແກ້ໄຂ ບັນຫາລະຫວ່າງຊາດໃນດ້ານເສດຖະກິດ, ສັງຄົມ, ສາທາລະນະສຸກ ແລະ ອື່ນໆທີ່ກ່ຽວຂ້ອງ ແລະ ການຮ່ວມມືລະຫວ່າງຊາດ ດ້ານວັດທະນະທຳ ແລະ ການສຶກສາ ;

ຄ. ການເຄົາລົບໂດຍທົ່ວໄປ ແລະ ມີປະສິດທິຜົນສິດທິມະນຸດ ແລະ ອິດສະລະພາບອັນພື້ນຖານສຳລັບໝົດທຸກຄົນ ໂດຍປາສະຈາກ

ການຈຳແນກເຊື້ອຊາດ, ເພດ, ພາສາ ຫຼື ສາສະຫນາ.

*ມາດຕາ 56*

ສະມາຊິກສະຫະປະຊາຊາດ ໃຫ້ຄຳຫມັ້ນສັນຍາວ່າຈະ ດຳເນີນຮ່ວມກັນ ຫຼື ແຍກກັນ ໃນການຮ່ວມມື ກັບສະຫະປະຊາຊາດ ເພື່ອ ບັນລຸເປົ້າຫມາຍທີ່ກຳນົດໄວ້ໃນ ມາດຕາ 55.

*ມາດຕາ 57*

1. ສະຖາບັນວິຊາສະເພາະຕ່າງໆ ທີ່ສ້າງຂຶ້ນດ້ວຍຂໍ້ຕົກລົງລະຫວ່າງລັດຖະບານ ແລະ ມີຄວາມຮັບຜິດຊອບລະຫວ່າງຊາດຢ່າງກວ້າງຂວາງ ໃນດ້ານເສດຖະເສດ, ສັງຄົມ, ວັດທະນະທຳ ແລະ ການ ສຶກສາ, ສາທາລະນະສຸກ ແລະ ດ້ານອື່ນໆ ທີ່ກ່ຽວຂ້ອງດັ່ງທີ່ໄດ້ກຳນົດໄວ້ໃນທຳມະນູນກໍ່ຕັ້ງຂອງຕົນ ຈະມີຄວາມກ່ຽວພັນກັບອົງການສະຫະປະຊາຊາດ ຕາມບົດບັນຍັດຂອງ ມາດຕາ 63.
2. ສະຖາບັນທີ່ມີສ່ວນກ່ຽວພັນ ກັບອົງການສະຫະປະຊາຊາດ ແມ່ນເອີ້ນຊື່ວ່າ "ສະຖາບັນວິຊາສະເພາະ".

*ມາດຕາ 58*

ອົງການສະຫະປະຊາຊາດ ອອກຄໍາແນະນໍາສໍາລັບການປະສານສົມທົບແຜນການ ແລະ ກິດຈະກໍາຂອງສະຖາບັນວິຊາສະເພາະ.

*ມາດຕາ 59*

ອົງການສະຫະປະຊາຊາດ ຊຸກຍູ້ຖ້າມີຄວາມຈໍາເປັນການເຈລະຈາລະຫວ່າງລັດກ່ຽວຂ້ອງ ເພື່ອການສ້າງທຸກໆສະຖາບັນວິຊາສະເພາະໃຫມ່ໆທີ່ຈໍາເປັນເພື່ອບັນລຸເປົ້າຫມາຍທີ່ກໍານົດໄວ້ໃນ ມາດຕາ 55.

*ມາດຕາ 60*

ພາຍໃຕ້ອໍານາດຂອງສະມັດຊາໃຫຍ່, ສະພາເສດຖະກິດ ແລະ ສັງຄົມຊຶ່ງມີອໍານາດຕາມບົດບັນຍັດຫມວດ X ຈະຮັບຜິດຊອບປະຕິບັດຫນ້າທີ່ ຂອງອົງການສະຫະປະຊາຊາດຕາມທີ່ກໍານົດໄວ້ໃນ ຫມວດນີ້.

# ໝວດທີ່ X
## ສະພາເສດຖະກິດ ແລະ ສັງຄົມ

## ອົງປະກອບ

*ມາດຕາ 61*

1. ສະພາເສດຖະກິດ ແລະ ສັງຄົມ ຈະປະກອບດ້ວຍສະມາຊິກ ຂອງສະຫະປະຊາຊາດ 54 ປະເທດ ຊຶ່ງເລືອກຕັ້ງຂຶ້ນໂດຍ ສະມັດຊາ ໃຫຍ່.

2. ພາຍໃຕ້ບົດບັນຍັດ ຂອງວັກ 3 ແຕ່ລະປີສະມາຊິກສະພາ ເສດຖະກິດ ແລະ ສັງຄົມ ສິບແປດ ປະເທດ ຈະໄດ້ຮັບການເລືອກຕັ້ງ ໃນກຳນົດເວລາ ສາມປີ. ສະມາຊິກທີ່ພົ້ນຕຳແໜ່ງໄປແລ້ວມີສິດເຂົ້າຮັບ ເລືອກຕັ້ງໄດ້ອີກໃນທັນທີ.

3. ໃນການເລືອກຕັ້ງ ຄັ້ງທຳອິດຫຼັງຈາກ ການເພີ່ມຈຳນວນສະມາ ຊິກ ໃນສະພາເສດຖະກິດ ແລະ ສັງຄົມ ຂຶ້ນຈາກ ຊາວເຈັດ ປະເທດ ເປັນ ຫ້າສິບສີ່ ປະເທດນັ້ນ, ຊາວເຈັດປະເທດ ຈະໄດ້ຮັບເລືອກຕັ້ງບວກ ໃສ່ ກັບສະມາຊິກທີ່ໄດ້ຮັບເລືອກຕັ້ງ ເພື່ອເຂົ້າມາແທນທີ່ສະມາຊິກເກົ້າ ເກົ້າ ປະເທດຊຶ່ງເວລາດຳລົງຕຳແໜ່ງຂອງ ເກົ້າປະເທດ ໃນຈຳນວນ

ສະມາຊິກ ຊາວເຈັດ ປະເທດ ທີ່ເພີ່ມຂຶ້ນຈະສິ້ນສຸດລົງ ໃນທ້າຍປີທຳອິດ ແລະ ກຳນົດດຳລົງຕຳແໜ່ງຂອງ ເກົ້າ ປະເທດຕໍ່ໄປທີ່ໄດ້ຮັບເລືອກຈະສິ້ນສຸດລົງໃນທ້າຍປີທີສອງ ຕາມຂໍ້ຕົກລົງ ຂອງສະມັດຊາໃຫຍ່ທີ່ໄດ້ກຳນົດໄວ້.

4. ສະມາຊິກແຕ່ລະປະເທດ ຂອງ ສະພາເສດຖະກິດ ແລະ ສັງຄົມຈະມີຜູ້ແທນນຶ່ງຄົນ.

## ໜ້າທີ່ ແລະ ອຳນາດ

*ມາດຕາ 62*

1. ສະພາເສດຖະກິດ ແລະ ສັງຄົມສາມາດເຮັດ ຫຼື ຊຸກຍູ້ການຄົ້ນຄວ້າ ຫຼື ການລາຍງານກ່ຽວກັບບັນຫາລະຫວ່າງຊາດ ໃນຂົງເຂດເສດຖະກິດ, ສັງຄົມ, ວັດທະນາທຳ ແລະ ການສຶກສາ, ສາທາລະນະສຸກ ແລະ ຂົງເຂດອື່ນໆ ທີ່ກ່ຽວຂ້ອງ ແລະ ສາມາດເຮັດຄຳແນະນຳກ່ຽວກັບບັນຫາດັ່ງກ່າວຕໍ່ສະມັດຊາໃຫຍ່, ແລະ ຕໍ່ສະມາຊິກຂອງສະຫະປະຊາຊາດ ແລະ ຕໍ່ສະຖາບັນວິຊາສະເພາະທີ່ກ່ຽວຂ້ອງ.

2. ສະພາເສດຖະກິດ ແລະ ສັງຄົມ ສາມາດເຮັດຄຳແນະນຳເພື່ອຮັບປະກັນການເຄົາລົບສິດທິມະນຸດ ແລະ ສິດເສລີພາບອັນພື້ນຖານສຳລັບທຸກຄົນຢ່າງມີປະສິດທິຜົນ.

3. ສະພາເສດຖະກິດ ແລະ ສັງຄົມ ສາມາດກຽມຮ່າງສົນທິສັນຍາເພື່ອສະເໜີຕໍ່ສະມັດຊາໃຫຍ່ ກ່ຽວກັບເລື່ອງອຳນາດຂອງຕົນ.

4. ສະພາເສດຖະກິດ ແລະ ສັງຄົມ ສາມາດຮຽກກອງປະຊຸມລະຫວ່າງຊາດ ກ່ຽວກັບເລື່ອງອຳນາດຂອງຕົນຕາມຂໍ້ບັງຄັບ ທີ່ສະຫະປະຊາຊາດກຳນົດໄວ້.

*ມາດຕາ 63*

1. ສະພາເສດຖະກິດ ແລະ ສັງຄົມ ສາມາດເຮັດຂໍ້ຕົກລົງກັບທຸກສະຖາບັນທີ່ກຳນົດເງື່ອນໄຂເອົາສະຖາບັນດັ່ງກ່າວທີ່ກ່ຽວຂ້ອງກັບສະຫະປະຊາຊາດ ຕາມເນື້ອໃນຂອງມາດຕາ 57. ຂໍ້ຕົກລົງດັ່ງກ່າວຈະຕ້ອງໄດ້ຮັບຄວາມເຫັນດີຈາກສະມັດຊາໃຫຍ່.

2. ສະພາເສດຖະກິດ ແລະ ສັງຄົມສາມາດປະສານສົມທົບກິດຈະກຳກັບສະຖາບັນວິຊາສະເພາະໂດຍການປຶກສາຫາລື, ເຮັດຄຳແນະນຳຕໍ່ສະຖາບັນດັ່ງກ່າວກໍ່ຄືຕໍ່ສະມັດຊາໃຫຍ່ ແລະ ສະມາຊິກຂອງ ສະຫະປະຊາຊາດ.

*ມາດຕາ 64*

1. ສະພາເສດຖະກິດ ແລະ ສັງຄົມ ສາມາດຮັບເອົາທຸກໆມາດຕະການທີ່ເປັນປະໂຫຍດເພື່ອໃຫ້ໄດ້ຮັບບົດລາຍງານ ຢ່າງສະໝ່ຳສະເໝີ

ຈາກສະຖາບັນວິຊາສະເພາະ. ສະພາດັ່ງກ່າວນີ້ສາມາດຕົກລົງກັນກັບສະມາຊິກ ຂອງສະຫະປະຊາຊາດ ແລະ ສະຖາບັນວິຊາສະເພາະ ເພື່ອໃຫ້ໄດ້ຮັບບົດລາຍງານກ່ຽວກັບການປະຕິບັດຄຳແນະນຳຂອງຕົນ ແລະຄຳແນະນຳຂອງ ສະມັດຊາໃຫຍ່ໃນເລື່ອງທີ່ຢູ່ໃນຂອບເຂດອຳນາດຂອງຕົນ.

2. ສະພາເສດຖະກິດ ແລະ ສັງຄົມສາມາດແຈ້ງຂໍ້ສັງເກດຂອງຕົນກ່ຽວກັບບົດລາຍງານດັ່ງກ່າວ ຕໍ່ສະມັດຊາໃຫຍ່.

*ມາດຕາ 65*

ສະພາເສດຖະກິດ ແລະ ສັງຄົມ ສາມາດຈັດຫາຂ່າວສານໃຫ້ແກ່ສະພາຄວາມໝັ້ນຄົງ ແລະ ຊ່ວຍເຫຼືອສະພາຄວາມໝັ້ນຄົງໃນເມື່ອຖືກຮ້ອງຂໍ.

*ມາດຕາ 66*

1. ສະພາເສດຖະກິດ ແລະ ສັງຄົມຈະດຳເນີນໜ້າທີ່ທຸກຢ່າງທີ່ຕົກຢູ່ໃນຂອບອຳນາດຂອງຕົນ ກ່ຽວກັບການປະຕິບັດຕາມຄຳແນະນຳ ຂອງສະມັດຊາໃຫຍ່.

2. ດ້ວຍຄວາມເຫັນດີຂອງສະມັດຊາໃຫຍ່, ສະພາເສດຖະກິດ ແລະ ສັງຄົມ ສາມາດປະຕິບັດຕາມຄຳຮ້ອງຂໍ ຂອງສະມາຊິກ ສະຫະ

ປະຊາຊາດ ຫຼື ຕາມຄໍາຮ້ອງຂໍຂອງສະຖາບັນວິຊາສະເພາະ.

3. ສະພາເສດຖະກິດ ແລະ ສັງຄົມຈະດໍາເນີນໜ້າທີ່ອື່ນໆ ດັ່ງທີ່ໄດ້ກໍານົດໄວ້ໃນພາກສ່ວນອື່ນໆ ຂອງກົດບັດສະບັບນີ້ ຫຼື ດັ່ງທີ່ສະມັດຊາໃຫຍ່ ໄດ້ມອບໝາຍໃຫ້.

*ມາດຕາ 67*

1. ສະມາຊິກແຕ່ລະປະເທດ ຂອງສະພາເສດຖະກິດ ແລະ ສັງຄົມຈະມີຄະແນນສຽງນຶ່ງຄະແນນ.

2. ມະຕິຂອງສະພາເສດຖະກິດ ແລະ ສັງຄົມຈະຮັບເອົາດ້ວຍ ສຽງສ່ວນຫຼາຍຂອງສະມາຊິກຜູ້ມີໜ້າ ແລະ ຜູ້ອອກສຽງ.

## ວິທີດໍາເນີນການປະຊຸມ

*ມາດຕາ 68*

ສະພາເສດຖະກິດ ແລະ ສັງຄົມຈະຕັ້ງຄະນະກໍາມະທິການຕ່າງໆ ຂຶ້ນກ່ຽວກັບບັນຫາເສດຖະກິດ ແລະ ສັງຄົມ ແລະ ຄວາມກ້າວໜ້າຂອງສິດທິມະນຸດ ກໍຄືຄະນະກໍາມາທິການອື່ນໆ ທີ່ຈໍາເປັນສໍາລັບການດໍາເນີນໜ້າທີ່ຂອງຕົນ.

*ມາດຕາ 69*

ສະພາເສດຖະກິດ ແລະ ສັງຄົມ ຈະເຊື້ອເຊີນສະມາຊິກປະເທດໃດປະເທດນຶ່ງ ຂອງສະຫະປະຊາຊາດເຂົ້າຮ່ວມການພິຈາລະນາບັນຫາໃດນຶ່ງ ທີ່ມີສ່ວນກ່ຽວຂ້ອງສະເພາະກັບສະມາຊິກປະເທດນັ້ນ ໂດຍທີ່ສະມາຊິກປະເທດນັ້ນບໍ່ມີສິດລົງຄະແນນສຽງ.

*ມາດຕາ 70*

ສະພາເສດຖະກິດ ແລະ ສັງຄົມ ສາມາດເຮັດຂໍ້ບັນຍັດໃດນຶ່ງເພື່ອໃຫ້ຜູ້ແທນຂອງສະຖາບັນວິຊາສະເພາະເຂົ້າຮ່ວມ ໂດຍທີ່ສະຖາບັນວິຊາສະເພາະດັ່ງກ່າວບໍ່ມີສິດລົງຄະແນນສຽງ, ການພິຈາລະນາວຽກງານຂອງຕົນ ແລະ ຂອງຄະນະກຳມາທິການທີ່ສະພາຕັ້ງຂຶ້ນ ແລະ ເພື່ອໃຫ້ຜູ້ແທນສະພາຂອງຕົນໄດ້ເຂົ້າຮ່ວມ ການພິຈາລະນາບັນຫານຳສະຖາບັນວິຊາສະເພາະ.

*ມາດຕາ 71*

ສະພາເສດຖະກິດ ແລະ ສັງຄົມ ສາມາດເຮັດຂໍ້ບັນຍັດອັນເປັນປະໂຫຍດເພື່ອສຶກສາຫາລືກັບອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ຊຶ່ງຮັບຜິດຊອບບັນຫາທີ່ຢູ່ໃນເຂດອຳນາດຂອງຕົນ. ຂໍ້ບັນຍັດເລົ່ານີ້ອາດເຮັດໄດ້ນຳການຈັດຕັ້ງລະຫວ່າງຊາດກໍ່ຄືກັບອົງການລະດັບຊາດຫຼັງຈາກ

ໄດ້ປຶກສາຫາລືກັບສະມາຊິກຂອງສະຫະປະຊາຊາດທີ່ກ່ຽວຂ້ອງ.

*ມາດຕາ 72*

1. ສະພາເສດຖະກິດ ແລະ ສັງຄົມ ຈະຮັບເອົາຂໍ້ລະບຽບພາຍໃນຂອງຕົນເອງລວມທັງວິທີແຕ່ງຕັ້ງປະທານຂອງຕົນ.

2. ສະພາເສດຖະກິດ ແລະ ສັງຄົມ ຈະປະຊຸມກັນຕາມທີ່ກຳນົດໄວ້ໃນລະບຽບພາຍໃນຂອງຕົນ ຊຶ່ງຈະລວມທັງບົດບັນຍັດສຳລັບຮຽກປະຊຸມຕາມຄຳຮ້ອງຂໍຂອງສະມາຊິກສ່ວນຫຼາຍຂອງສະພາ.

# ໝວດທີ່ XI
## ຖະແຫຼງການວ່າດ້ວຍດິນແດນ ທີ່ຍັງບໍ່ທັນໄດ້ ປົກຄອງຕົນເອງ

*ມາດຕາ 73*

ສະມາຊິກຂອງສະຫະປະຊາຊາດທີ່ມີ ຫຼື ຮັບເອົາຄວາມຮັບຜິດຊອບ ໃນການປົກຄອງດິນແດນຊຶ່ງປະຊາຊົນຍັງ ບໍ່ທັນມີສິດປົກຄອງຕົນເອງ ຢ່າງເຕັມສ່ວນ ຍ່ອມຮັບຮູ້ຫຼັກການວ່າດ້ວຍບູລິມະສິດດ້ານຜົນປະໂຫຍດຂອງປະຊາຊົນ ຜູ້ອາໃສຢູ່ໃນດິນແດນເຫຼົ່ານີ້. ສະມາຊິກຂອງສະຫະປະຊາຊາດ ຈະຮັບເອົາພັນທະເປັນພາລະມອບຫມາຍອັນສັກສິດ ທີ່ຈະສົ່ງເສີມຄວາມວັດທະນາຖາວອນຂອງປະຊາຊົນຜູ້ຢູ່ອາໃສ ຢູ່ໃນດິນແດນເລົ່ານັ້ນຢ່າງສຸດຄວາມສາມາດພາຍໃນຂອບເຂດ ຂອງລະບົບສັນຕິພາບ ແລະ ຄວາມໝັ້ນຄົງລະຫວ່າງຊາດທີ່ໄດ້ສ້າງຂຶ້ນໂດຍກົດບັດສະບັບນີ້ ຕາມເປົ້າຫມາຍດັ່ງຕໍ່ໄປນີ້:

ກ. ຈະຮັບປະກັນດ້ວຍການເຄົາລົບວັດທະນະທຳ ຂອງປະຊາຊົນທີ່ກ່ຽວຂ້ອງ, ຄວາມກ້າວຫນ້າດ້ານການເມືອງ, ເສດຖະກິດ ແລະ ສັງຄົມ ກໍຄືການພັດທະນາການສຶກສາ, ການປະຕິບັດອັນເປັນທຳ ແລະ ການຄຸ້ມຄອງໃຫ້ພົ້ນຈາກການລະເມີດຕ່າງໆ;

ຂ. ຈະພັດທະນາຄວາມສາມາດ ໃນການປົກຄອງຕົນເອງ, ຈະຄຳນຶງເຖິງຄວາມມຸ້ງມາດປາຖະໜາ ດ້ານການເມືອງຂອງປະຊາຊົນ ແລະ ຈະຊ່ວຍເຫຼືອເຂົາເຈົ້າໃນການພັດທະນາບັນດາສະຖາບັນການເມືອງຂອງເຂົາເຈົ້າເຫຼົ່ານັ້ນ ໃຫ້ກ້າວໜ້າຢ່າງເໝາະສົມກັບເງື່ອນໄຂສະເພາະຂອງແຕ່ລະດິນແດນ ແລະ ຂອງປະຊາຊົນເລົ່ານັ້ນ ແລະ ລະດັບການພັດທະນາ ຂອງເຂົາເຈົ້າ;

ຄ. ຈະເຮັດໃຫ້ສັນຕິພາບ ແລະ ຄວາມໝັ້ນຄົງລະຫວ່າງຊາດເຂັ້ມແຂງຂຶ້ນ.

ງ. ຈະສົ່ງເສີມມາດຕະການອັນສ້າງສັນໃນການພັດທະນາ, ຈະຊຸກຍູ້ການຄົ້ນຄວ້າ, ຈະຮ່ວມມືຊຶ່ງກັນ ແລະ ກັນກັບອົງການວິຊາສະເພາະລະຫວ່າງຊາດເມື່ອໃດຫາກສະພາວະການຫາກເໝາະສົມເພື່ອໃຫ້ບັນລຸໄດ້ເປົ້າໝາຍດ້ານສັງຄົມ, ເສດຖະກິດ ແລະ ວິທະຍາສາດຢ່າງແທ້ຈິງດັ່ງທີ່ໄດ້ກຳນົດໄວ້ຕາມມາດຕານີ້;

ຈ. ຈະສົ່ງຂໍ້ຄວາມດ້ານສະຖິຕິ ແລະ ອື່ນໆທີ່ມີລັກສະນະເຕັກນິກກ່ຽວກັບເງື່ອນໄຂດ້ານເສດຖະກິດ, ສັງຄົມ ແລະ ການສຶກສາໃນດິນແດນຊຶ່ງຕົນຮັບຜິດຊອບ, ນອກຈາກດິນແດນທີ່ກຳນົດໄວ້ໃນໝວດທີ XII ແລະ XIII, ໃຫ້ແກ່ເລຂາທິການໃຫຍ່ຢ່າງສະໝໍ່າສະເໝີ ໃນລັກສະນະການແຈ້ງຂ່າວ, ທັງນີ້ໂດຍອີງໃສ່ຄວາມຮຽກຮ້ອງຕ້ອງການດ້ານຄວາມໝັ້ນຄົງ ແລະ ດ້ານລັດຖະທຳມະນູນ.

*ມາດຕາ 74*

ສະມາຊິກຂອງສະຫະປະຊາຊາດຮັບຮູ້ເຊັ່ນດຽວກັນໂດຍນະໂຍບາຍການເມືອງຂອງຕົນຕ້ອງຍຶດຖືຫຼັກການຂອງຄວາມເປັນເພື່ອນບ້ານ ທີ່ດີຕໍ່ກັນໃນດ້ານສັງຄົມ, ເສດຖະກິດ ແລະ ການຄ້າ ເຊັ່ນດຽວກັນກັບໃນດິນແດນຊຶ່ງກົດບັດໝວດນີ້ໄດ້ປະຕິບັດຢູ່ກໍຄື ໃນອະນາເຂດນະຄອນຫຼວງຂອງຕົນເອງໂດຍສອດຄ່ອງກັບຜົນປະໂຫຍດ ແລະ ຄວາມວັດທະນາຖາວອນຂອງພາກສ່ວນອື່ນໆຂອງໂລກ.

# ໝວດທີ່ XII
## ລະບົບວ່າດ້ວຍການອາລັກຂາ ລະຫວ່າງຊາດ

*ມາດຕາ 75*

ອົງການສະຫະປະຊາຊາດ ຈະສ້າງລະບົບວ່າດ້ວຍການອາລັກຂາລະຫວ່າງຊາດ, ພາຍໃຕ້ອຳນາດຂອງຕົນ, ສຳລັບການປົກຄອງ ແລະ ການຄວບຄຸມດູແລດິນແດນທີ່ອາດຈະນຳມາຂຶ້ນກັບລະບົບດັ່ງກ່າວດ້ວຍການເຮັດຂໍ້ຕົກລົງສະເພາະທີ່ຈະເຮັດຕາມພາຍຫຼັງ. ດິນແດນເລົ່ານີ້ຕໍ່ໄປນີ້ ຈະເອີ້ນວ່າ "ດິນແດນອາລັກຂາ".

*ມາດຕາ 76*

ໂດຍສອດຄ້ອງກັບເປົ້າຫມາຍ ຂອງສະຫະປະຊາຊາດທີ່ໄດ້ກຳນົດໄວ້ໃນ ມາດຕາ 1 ຂອງກົດບັດສະບັບນີ້, ຈຸດປະສົງຕົ້ນຕໍຂອງລະບົບອາລັກຂາມີດັ່ງນີ້:

ກ. ເຮັດໃຫ້ສັນຕິພາບ ແລະ ຄວາມໝັ້ນຄົງລະຫວ່າງຊາດເຂັ້ມແຂງຂຶ້ນ;

ຂ. ສົ່ງເສີມຄວາມກ້າວໜ້າດ້ານການເມືອງ, ເສດຖະກິດ ແລະ ສັງຄົມຂອງປະຊາຊົນຜູ້ອາໃສຢູ່ໃນດິນແດນ ໃນອາລັກຂາເຫຼົ່ານັ້ນ ກໍຄືການ

ພັດທະນາການສຶກສາ, ສົ່ງເສີມວິວັດທະນາການອັນກ້າວໜ້າ ໄປສູ່ຄວາມສາມາດ ໃນການປົກຄອງຕົນເອງ ຫຼື ເອກະລາດ ໂດຍຄຳນຶງເຖິງເງື່ອນໄຂສະເພາະ ຂອງແຕ່ລະດິນແດນ ແລະ ປະຊາຊາດ, ຄວາມມຸ້ງມາດປາຖະໜາທີ່ສະແດງອອກຂອງປະຊາຊົນທີ່ກ່ຽວຂ້ອງ ແລະ ບົດບັນຍັດ ທີ່ອາດຈະຖືກກຳນົດໄວ້ ໃນແຕ່ລະຂໍ້ຕົກລົງວ່າດ້ວຍການອາລັກຂາ;

ຄ. ສົ່ງເສີມການເຄົາລົບສິດທິມະນຸດ ແລະ ອິດສະລະພາບອັນພື້ນຖານສຳລັບທຸກຄົນ, ໂດຍປາສະຈາກການຈຳແນກດ້ານເຊື້ອຊາດ, ເພດ, ພາສາ ຫຼື ສາດສະໜາ, ແລະ ພັດທະນາຄວາມຮັບຮູ້ໃນການເພິ່ງພາອາໄສຊຶ່ງກັນ ແລະ ກັນ ຂອງບັນດາປະຊາຊາດໃນໂລກ;

ງ. ຮັບປະກັນການປະຕິບັດອັນສະເໝີພາບດ້ານສັງຄົມ, ເສດຖະກິດ ແລະ ການຄ້າສຳລັບຄົນສັນຊາດຂອງ ປະເທດສະມາຊິກ; ຮັບປະກັນການປະຕິບັດອັນສະເໝີພາບສຳລັບສັນຊາດຂອງປະເທດສະມາຊິກເຫຼົ່ານີ້ວ່າດ້ວຍການຈັດຕັ້ງພະແນກຍຸຕິທຳ, ໂດຍບໍ່ສ້າງຄວາມເສຍຫາຍໃຫ້ແກ່ ການບັນລຸຈຸດປະສົງ ທີ່ໄດ້ກຳນົດໄວ້ຂ້າງເທິງນີ້ ແລະ ພາຍໃຕ້ບົດບັນຍັດຂອງ ມາດຕາ 80.

*ມາດຕາ 77*

1. ລະບົບວ່າດ້ວຍການອາລັກຂາຈະນຳໃຊ້ຢູ່ໃນດິນແດນທີ່ຕົກຢູ່ໃນປະເພດຂ້າງລຸ່ມນີ້ ແລະ ຈະຖືກຈັດເຂົ້າຢູ່ໃນລະບົບດັ່ງກ່າວຕາມ

ສັນຍາວ່າດ້ວຍການອາລັກຂາ:

ກ. ດິນແດນຊຶ່ງປະຈຸບັນຢູ່ພາຍໃຕ້ການຄຸ້ມຄອງ (1).

ຂ. ດິນແດນທີ່ອາດຈະຍາດມາໄດ້ຈາກສັດຕູ ຫຼັງຈາກສົງຄາມໂລກ ຄັ້ງທີ່ ສອງ;

ຄ. ດິນແດນຊຶ່ງລັດທີ່ຮັບຜິດຊອບການປົກຄອງຈັດເຂົ້າຢູ່ພາຍໃຕ້ລະບົບດັ່ງກ່າວແບບສະໝັກໃຈ.

2. ຂໍ້ຕົກລົງຕາມພາຍຫຼັງຈະກຳນົດວ່າດິນແດນສ່ວນໃດ ຊຶ່ງຕົກໃນປະເພດທີ່ໄດ້ກຳນົດໄວ້ຂ້າງເທິງນັ້ນ ຈະຖືກຈັດເຂົ້າຢູ່ພາຍໃຕ້ລະບອບອາລັກຂາ ແລະ ຢູ່ໃນເງື່ອນໄຂອັນໃດ.

*ມາດຕາ 78*

ລະບອບອາລັກຂາ ຈະບໍ່ນຳໃຊ້ກັບປະເທດທີ່ເປັນສະມາຊິກຂອງສະຫະປະຊາຊາດ, ການພົວພັນລະຫວ່າງປະເທດ ສະມາຊິກຂອງສະຫະປະຊາຊາດຈະຕ້ອງເປັນໄປຕາມພື້ນຖານ ຂອງການເຄົາລົບນັບຖືຫຼັກການສະເໝີພາບດ້ານອະທິປະໄຕ.

*ມາດຕາ 79*

ຂໍ້ກຳນົດຂອງລະບອບອາລັກຂາ ສຳລັບດິນແດນແຕ່ລະບ່ອນທີ່ຈະ

(1) Sous mandat

ຈັດເຂົ້າຢູ່ພາຍໃຕ້ລະບອບດັ່ງກ່າວນີ້ ຕະຫຼອດເຖິງ ການປ່ຽນແປງ ແລະ ການດັດແກ້ທີ່ອາດຈະມີຂຶ້ນ, ຈະເປັນຫົວຂໍ້ຂອງການຕົກລົງລະຫວ່າງ ລັດທີ່ກ່ຽວຂ້ອງໂດຍກົງ ລວມທັງມະຫາອຳນາດຜູ້ຄຸ້ມຄອງໃນກໍລະນີ ທີ່ດິນແດນນັ້ນຫາກຢູ່ພາຍໃຕ້ການຮັບຜິດຊອບ ຄຸ້ມຄອງຂອງ ສະມາ ຊິກສະຫະປະຊາຊາດ ແລະ ຈະໄດ້ຮັບຄວາມເຫັນດີຕາມບົດບັນຍັດ ຂອງມາດຕາ 83 ແລະ 85.

*ມາດຕາ 80*

1. ນອກຈາກສິ່ງທີ່ໄດ້ຕົກລົງກັນໄວ້ໃນສັນຍາສະເພາະວ່າດ້ວຍ ການອາລັກຂາຕາມ ມາດຕາ 77, 79 ແລະ 81, ການຈັດເອົາແຕ່ລະ ດິນແດນເຂົ້າຢູ່ພາຍໃຕ້ລະບອບການອາລັກຂາ, ແລະ ຈົນກວ່າສັນຍາດັ່ງ ກ່າວ ຈະຖືກລົງນາມກັນ, ຈະບໍ່ມີບົດບັນຍັດໃດໆ ຂອງກົດບັດຫມວດ ນີ້ຈະຖືກຕີຄວາມຫມາຍ ເປັນການປ່ຽນແປງສິດ ຂອງລັດ ຫຼື ປະຊາຊົນ ໃດກໍຕາມດ້ວຍວິທີໃດນຶ່ງຈະທາງກົງ ຫຼື ທາງອ້ອມ ຫຼື ຂໍ້ກຳນົດສັນຍາ ລະຫວ່າງຊາດທີ່ມີຢູ່ຊຶ່ງສະມາຊິກສະຫະປະຊາຊາດເປັນພາຄີ.

2. ວັກ 1 ຂອງມາດຕານີ້ ຈະບໍ່ຖືກຕີຄວາມຫມາຍວ່າເປັນສາເຫດ ຂອງຄວາມຊັກຊ້າ ຫຼື ການແກ່ຍາວການເຈລະຈາ ແລະ ການລົງນາມ ຂໍ້ຕົກລົງ ແນໃສ່ຈັດສັນດິນແດນ ທີ່ຢູ່ໃນການຄຸ້ມຄອງ ຫຼື ດິນແດນ ອື່ນໆດັ່ງທີ່ກຳນົດໄວ້ໃນມາດຕາ 77 ເຂົ້າຢູ່ພາຍໃຕ້ລະບອບການ

ອາລັກຂາ.

*ມາດຕາ 81*

ຂໍ້ຕົກລົງວ່າດ້ວຍການອາລັກຂາ ໃນແຕ່ລະກໍລະນີ ຈະລວມເອົາເງື່ອນໄຂຊຶ່ງໃນນັ້ນ ດິນແດນພາຍໃຕ້ການອາລັກຂາຈະຖືກປົກຄອງ ແລະ ຈະມີການແຕ່ງຕັ້ງ ອຳນາດການປົກຄອງທີ່ຈະທຳການປົກຄອງດິນແດນດັ່ງກ່າວ. ອຳນາດການປົກຄອງນີ້ຊຶ່ງຕໍ່ໄປເອີ້ນວ່າ " ອຳນາດຮັບຜິດຊອບການປົກຄອງ " ອາດຈະປະກອບດ້ວຍລັດນຶ່ງ ຫຼື ຫຼາຍໆລັດ ຫຼື ໂດຍອົງການສະຫະປະຊາຊາດເອງກໍ່ໄດ້.

*ມາດຕາ 82*

ຂໍ້ຕົກລົງວ່າດ້ວຍການອາລັກຂາອາດຈະກຳນົດເຂດ ຍຸດທະສາດເຂດນຶ່ງ ຫຼື ຫຼາຍເຂດ ຊຶ່ງສາມາດກວມເອົາບາງສ່ວນ ຫຼື ທັງຫມົດຂອງດິນແດນ ພາຍໃຕ້ການອາລັກຂາຊຶ່ງຕໍ່ດິນແດນດັ່ງກ່າວຂໍ້ຕົກລົງຍັງນຳໃຊ້ຢູ່ ໂດຍບໍ່ສ້າງຄວາມເສຍຫາຍໃຫ້ແກ່ຂໍ້ຕົກລົງພິເສດສະບັບໃດສະບັບນຶ່ງ ຫຼື ຫຼາຍສະບັບ ທີ່ໄດ້ເຊັນກັນແລ້ວຕາມ ມາດຕາ 43.

*ມາດຕາ 83*

1. ຫນ້າທີ່ທັງຫມົດຂອງ ອົງການສະຫະປະຊາຊາດກ່ຽວກັບເຂດ

ຍຸດທະສາດ ລວມທັງການໃຫ້ຄວາມເຫັນດີຕໍ່ເນື້ອໃນຂອງຂໍ້ກຳນົດວ່າດ້ວຍການອາລັກຂາ ກໍຄືການປ່ຽນແປງ ຫຼື ການດັດແກ້ທີ່ອາດຈະມີຂຶ້ນນັ້ນແມ່ນຈະດຳເນີນການໂດຍສະພາຄວາມຫມັ້ນຄົງ.

2. ຈຸດປະສົງຕົ້ນຕໍທີ່ໄດ້ກຳນົດໄວ້ໃນ ມາດຕາ 76 ຈະນຳມາໃຊ້ໄດ້ສຳລັບປະຊາຊົນເຂດຍຸດທະສາດແຕ່ລະເຂດ.

3. ພາຍໃຕ້ບົດບັນຍັດຂອງຂໍ້ຕົກລົງວ່າດ້ວຍການອາລັກຂາ ແລະ ໂດຍບໍ່ແຕະຕ້ອງຕໍ່ຂໍ້ກຳນົດດ້ານຄວາມຫມັ້ນຄົງ, ສະພາຄວາມຫມັ້ນຄົງຈະຂໍຄວາມຊ່ວຍເຫຼືອນຳສະພາວ່າດ້ວຍການອາລັກຂາໃນການປະຕິບັດຫນ້າທີ່ດັ່ງກ່າວທີ່ສະຫະປະຊາຊາດມອບຫມາຍໃຫ້ພາຍໃຕ້ລະບອບການອາລັກຂາທາງດ້ານການເມືອງ, ເສດຖະກິດ ແລະ ສັງຄົມ ແລະ ການສຶກສາໃນເຂດຍຸດທະສາດເຫຼົ່ານັ້ນ.

*ມາດຕາ 84*

ອຳນາດທີ່ຮັບຜິດຊອບການປົກຄອງມີຫນ້າທີ່ຕິດຕາມເຮັດໃຫ້ດິນແດນພາຍໃຕ້ການອາລັກຂາຂອງຕົນນັ້ນ ປະກອບສ່ວນເຂົ້າໃນການປົກປັກຮັກສາສັນຕິພາບ ແລະ ຄວາມຫມັ້ນຄົງລະຫວ່າງຊາດ. ໃນຈຸດປະສົງນີ້ ອຳນາດການປົກຄອງດັ່ງກ່າວສາມາດຫມູນໃຊ້ກອງທະຫານອາສາສະຫມັກ, ຄວາມສະດວກ ແລະ ການຊ່ວຍເຫຼືອຈາກດິນແດນພາຍໃຕ້ອາລັກຂາ ເພື່ອປະຕິບັດພັນທະທີ່ຕົນໄດ້ໃຫ້ສັນຍາໄວ້ກັບສະພາຄວາມ

ຫມັ້ນຄົງ ກໍຄືເພື່ອຮັບປະກັນການປ້ອງກັນທ້ອງຖິ່ນ ແລະ ປົກປັກຮັກສາຄວາມເປັນລະບຽບຮຽບຮ້ອຍພາຍໃນດິນແດນອາລັກຂາ.

*ມາດຕາ 85*

1. ຫນ້າທີ່ຂອງ ສະຫະປະຊາຊາດກ່ຽວກັບຂໍ້ຕົກລົງວ່າດ້ວຍການອາລັກຂາສໍາລັບເຂດຕ່າງໆທັງຫມົດທີ່ບໍ່ໄດ້ກໍານົດໃຫ້ເປັນເຂດຍຸດທະສາດ, ລວມທັງການໃຫ້ຄວາມເຫັນດີຕໍ່ເນື້ອໃນຂອງຂໍ້ຕົກລົງວ່າດ້ວຍການອາລັກຂາ ແລະ ການປ່ຽນແປງ ຫຼື ການແກ້ໄຂດັດແປງແມ່ນຈະຖືກດໍາເນີນການໂດຍສະມັດຊາໃຫຍ່ຂອງສະຫະປະຊາຊາດ.

2. ສະພາວ່າດ້ວຍການອາລັກຂາຊຶ່ງກໍານົດການພາຍໃຕ້ອໍານາດຂອງສະມັດຊາໃຫຍ່ ຈະຊ່ວຍເຫຼືອສະມັດຊາໃຫຍ່ໃນການປະຕິບັດໜ້າທີ່ດັ່ງກ່າວໃຫ້ສໍາເລັດຜົນ.

# ໝວດທີ່ XIII
## ສະພາວ່າດ້ວຍການອາລັກຂາ ອົງປະກອບ

*ມາດຕາ 86*

1. ສະພາວ່າດ້ວຍການອາລັກຂາ ຈະປະກອບດ້ວຍສະມາຊິກຂອງ ສະຫະປະຊາຊາດ ດັ່ງຕໍ່ໄປນີ້:

ກ. ສະມາຊິກທີ່ປົກຄອງດິນແດນພາຍໃຕ້ອາລັກຂາ;

ຂ. ສະມາຊິກທີ່ກຳນົດຊື່ໄວ້ໃນມາດຕາ 23 ຊຶ່ງບໍ່ໄດ້ເປັນຜູ້ ປົກຄອງ ດິນແດນພາຍໃຕ້ອາລັກຂາ;

ຄ. ສະມາຊິກອື່ນໆທີ່ສະມັດຊາໃຫຍ່ໄດ້ເລືອກຕັ້ງຂຶ້ນໃນກຳນົດ ເວລາ 3 ປີ ໃນຈຳນວນທີ່ຈຳເປັນເພື່ອຮັບປະກັນວ່າ ຈຳນວນລວມຂອງ ສະມາຊິກສະພາວ່າດ້ວຍການອາລັກຂາຈະແບ່ງອອກໄດ້ຈຳນວນເທົ່າ ກັນລະຫວ່າງສະມາຊິກສະຫະປະຊາຊຊາດທີ່ປົກຄອງດິນແດນພາຍໃຕ້ ອາລັກຂາ ແລະ ສະມາຊິກທີ່ບໍ່ໄດ້ປົກຄອງດິນແດນດັ່ງກ່າວ.

2. ສະມາຊິກແຕ່ລະປະເທດຂອງສະພາວ່າດ້ວຍການອາລັກຂາຈະ ກຳນົດບຸກຄົນ ຄົນນຶ່ງທີ່ມີຄຸນສົມບັດເປັນພິເສດສະເພາະເພື່ອເປັນຜູ້ຕ່າງ ໜ້າໃນສະພາ.

## ໜ້າທີ່ ແລະ ອຳນາດ

*ມາດຕາ 87*

ໃນການປະຕິບັດຕາມໜ້າທີ່ຂອງຕົນ, ສະມັດຊາໃຫຍ່ ແລະ ສະພາວ່າດ້ວຍການອາລັກຂາທີ່ຢູ່ພາຍໃຕ້ອຳນາດຂອງສະມັດຊາໃຫຍ່ສາມາດ:

ກ. ພິຈາລະນາບົດລາຍງານທີ່ຜູ້ມີອຳນາດຮັບຜິດຊອບການປົກຄອງສະເໜີມາ;

ຂ. ຮັບຄຳຮ້ອງທຸກ ແລະ ພິຈາລະນາຄຳຮ້ອງທຸກດັ່ງກ່າວໂດຍປຶກສາຫາລືກັບຜູ້ມີອຳນາດຮັບຜິດຊອບການປົກຄອງ;

ຄ. ຈັດໃຫ້ມີການໄປຢ້ຽມຢາມຢ່າງເປັນໄລຍະດິນແດນພາຍໃຕ້ອາລັກຂາ ໂດຍການຕົກລົງວັນເວລາ ກັບຜູ້ມີອຳນາດຮັບຜິດຊອບການປົກຄອງດັ່ງກ່າວ;

ງ. ເຮັດຂໍ້ບັນຍັດເລົ່ານີ້ ແລະ ອື່ນໆໂດຍສອດຄ່ອງກັບຂໍ້ກຳນົດຂອງການຕົກລົງວ່າດ້ວຍການອາລັກຂາ.

*ມາດຕາ 88*

ສະພາວ່າດ້ວຍການອາລັກຂາ ຈະຈັດວາງຄຳຖາມກ່ຽວກັບຄວາມກ້າວໜ້າ ໃນດ້ານການເມືອງ, ເສດຖະກິດ ແລະ ສັງຄົມ ແລະ ໃນການສຶກສາຂອງປະຊາຊົນຜູ້ອາໃສຢູ່ໃນດິນແດນພາຍໃຕ້ການອາລັກຂາ; ອຳ

ນາດທີ່ຮັບຜິດຊອບການປົກຄອງດິນແດນພາຍໃຕ້ການອາລັກຂາແຕ່ລະບ່ອນພາຍໃນຂອບເຂດອຳນາດຂອງສະມັດຊາໃຫຍ່ ຈະເຮັດບົດລາຍງານປະຈຳປີສະເໜີຕໍ່ສະມັດຊາໃຫຍ່ໂດຍອີງໃສ່ຂໍ້ມູນຄຳຖາມ ທີ່ກ່າວມາຂ້າງເທິງນັ້ນ.

## ການລົງຄະແນນສຽງ

*ມາດຕາ 89*

1. ສະມາຊິກແຕ່ລະປະເທດຂອງສະພາວ່າດ້ວຍການອາລັກຂາມີຄະແນນ ນຶ່ງ ຄະແນນສຽງ.

2. ມະຕິຂອງສະພາວ່າດ້ວຍການອາລັກຂາ ຈະຖືກຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ມີໜ້າ ແລະ ອອກສຽງ.

## ວິທີດຳເນີນການປະຊຸມ

*ມາດຕາ 90*

1. ສະພາວ່າດ້ວຍການອາລັກຂາຈະຮັບເອົາກົດລະບຽບພາຍໃນຂອງຕົນ ຊຶ່ງໃນນັ້ນກຳນົດວິທີການແຕ່ງຕັ້ງປະທານຂອງຕົນນຳ.

2. ສະພາວ່າດ້ວຍການອາລັກຂາຈະປະຊຸມກັນຕາມຄວາມຕ້ອງການໂດຍສອດຄ່ອງກັບກົດລະບຽບພາຍໃນຂອງຕົນ, ຊຶ່ງກົດລະບຽບດັ່ງກ່າວນີ້ຈະລວມເອົາທັງບົດບັນຍັດກໍານົດການຮຽກປະຊຸມຂອງສະພາຕາມຄໍາຮ້ອງຂໍຂອງສະມາຊິກສ່ວນຫຼາຍ.

*ມາດຕາ 91*

ຖ້າເຫັນສົມຄວນສະພາວ່າດ້ວຍການອາລັກຂາຈະຂໍຄວາມຊ່ວຍເຫຼືອນໍາ ສະພາເສດຖະກິດ ແລະ ສັງຄົມ ແລະ ນໍາສະຖາບັນວິຊາສະເພາະສໍາລັບບັນຫາທີ່ກ່ຽວຂ້ອງສິດອໍານາດຂອງ ອົງການດັ່ງກ່າວ.

# ຫມວດທີ XIV
## ສານຍຸຕິທຳ ລະຫວ່າງປະເທດ

*ມາດຕາ 92*

ສານຍຸຕິທຳລະຫວ່າງປະເທດ ແມ່ນອົງການຕຸລາການອັນສຳຄັນຂອງສະຫະປະຊາຊາດ, ສານຈະດຳເນີນໂດຍສອດຄ່ອງກັບທຳມະນູນວ່າດ້ວຍສານຍຸຕິທຳລະຫວ່າງປະເທດ ແລະ ໄດ້ຈັດເຂົ້າເປັນພາກສ່ວນນຶ່ງຂອງກົດບັດສະຫະປະຊາຊາດສະບັບປັດຈຸບັນ.

*ມາດຕາ 93*

1. ສະມາຊິກສະຫະປະຊາຊາດທັງໝົດ ແມ່ນເປັນພາຄີຂອງທຳມະນູນວ່າດ້ວຍສານຍຸຕິທຳລະຫວ່າງປະເທດ ໂດຍພຶດຕິໃນ (1).

2. ລັດທີ່ບໍ່ໄດ້ເປັນສະມາຊິກຂອງສະຫະປະຊາຊາດສາມາດເປັນພາຄີ ຂອງທຳມະນູນວ່າດ້ວຍສານຍຸຕິທຳລະຫວ່າງປະເທດກໍໄດ້ໃນເງື່ອນໄຂທີ່ສະມັດຊາໃຫຍ່ໄດ້ກຳນົດເປັນ.

ກໍລະນີໄປຕາມຄຳແນະນຳຂອງສະພາຄວາມຫມັ້ນຄົງ.

(1) ipso facto = ໂດຍພຶດຕິໃນ ຫຼື ໂດຍປະລິຍາຽ.

*ມາດຕາ 94*

1. ສະມາຊິກແຕ່ລະປະເທດຂອງສະຫະປະຊາຊາດໃຫ້ຄໍາໝັ້ນສັນຍາວ່າຈະປະຕິບັດຕາມມະຕິ ຂອງສານຍຸຕິທໍາລະຫວ່າງປະເທດ ໃນທຸກໆຄະດີທີ່ຕົນເປັນຄູ່ກໍລະນີ.

2. ຖ້າວ່າຄູ່ກໍລະນີ ໃນຄະດີຝ່າຍໃດ ຝ່າຍນຶ່ງຫາກບໍ່ພຶ່ງພໍໃຈປະຕິບັດພັນທະຂອງຕົນຕາມຄໍາພິພາກສາຂອງສານຄູ່ກໍລະນີອີກຝ່າຍນຶ່ງສາມາດຮ້ອງຮຽນໄປຍັງສະພາຄວາມຫມັ້ນຄົງ ແລະ ຖ້າສະພາຄວາມຫມັ້ນຄົງພິຈາລະນາເຫັນວ່າຈໍາເປັນກໍ່ສາມາດເຮັດຄໍາແນະນໍາ ຫຼື ຕັດສິນຮັບເອົາມາດຕະການເພື່ອເຮັດແນວໃດໃຫ້ມີການປະຕິບັດຕາມຄໍາພິພາກສາຂອງສານໃຫ້ເກີດຜົນ.

*ມາດຕາ 95*

ບໍ່ມີຂໍ້ບັນຍັດໃດໆ ໃນກົດບັດສະຫະປະຊາຊາດສະບັບນີ້ຈະຂັດຂວາງສະມາຊິກສະຫະປະຊາຊາດ ບໍ່ໃຫ້ມອບໝາຍການແກ້ໄຂຂໍ້ຂັດແຍ້ງຂອງຕົນຕໍ່ສານອື່ນ ໂດຍອີງຕາມສັນຍາທີ່ມີຢູ່ແລ້ວ ຫຼື ອາດຈະເຊັ່ນກັນໃນອານາຄົດ.

*ມາດຕາ 96*

1. ສະມັດຊາໃຫຍ່ ຫຼື ສະພາຄວາມຫມັ້ນຄົງສາມາດຮ້ອງຂໍຕໍ່

ສານຍຸຕິທຳລະຫວ່າງປະເທດໃຫ້ມີຄຳແນະນຳໃນທຸກໆບັນຫາທາງດ້ານກົດຫມາຍ.

2. ອົງກອນອື່ນໆ ຂອງສະຫະປະຊາຊາດ ຫຼື ສະຖາບັນວິຊາສະເພາະ ສາມາດໄດ້ຮັບອະນຸຍາດຈາກສະມັດຊາໃຫຍ່ໃນເວລາໃດກໍ່ໄດ້ສິດຮ້ອງຂໍຄຳເຫັນແນະນຳຈາກສານກ່ຽວກັບບັນຫາທາງກົດຫມາຍທີ່ເກີດຂຶ້ນໃນຂອບເຂດການເຄື່ອນໄຫວຂອງຕົນ.

# ໝວດທີ່ XV
## ສຳນັກເລຂາທິການ

*ມາດຕາ 97*

ສຳນັກເລຂາທິການປະກອບດ້ວຍເລຂາທິການໃຫຍ່ຄົນນຶ່ງ ແລະ ພະນັກງານທີ່ອົງການສະຫະປະຊາຊາດຕ້ອງການ. ເລຂາທິການໃຫຍ່ໄດ້ຮັບການແຕ່ງຕັ້ງໂດຍສະມັດຊາໃຫຍ່ຕາມຄຳແນະນຳຂອງສະພາຄວາມຫມັ້ນຄົງ. ເລຂາທິການໃຫຍ່ແມ່ນເຈົ້າຫນ້າທີ່ສູງສຸດຂອງອົງການສະຫະປະຊາຊາດ.

*ມາດຕາ 98*

ເລຂາທິການໃຫຍ່ຈະປະຕິບັດອຳນາດໜ້າທີ່ໃນນາມຂອງເຈົ້າໜ້າທີ່ສູງສຸດຢູ່ໃນທຸກໆກອງປະຊຸມຂອງສະມັດຊາໃຫຍ່, ສະພາຄວາມຫມັ້ນຄົງ, ສະພາເສດຖະກິດ ແລະ ສັງຄົມ ແລະ ສະພາວ່າດ້ວຍການອາລັກຂາ. ເລຂາທິການໃຫຍ່ຈະປະຕິບັດຫນ້າທີ່ອື່ນໆ ທີ່ອົງການເຫຼົ່ານີ້ມອບຫມາຍໃຫ້. ເລຂາທິການໃຫຍ່ສະເຫນີບົດລາຍງານປະຈຳປີກ່ຽວກັບວຽກງານຂອງອົງການສະຫະປະຊາຊາດ ຕໍ່ສະມັດຊາໃຫຍ່.

*ມາດຕາ 99*

ເລຂາທິການໃຫຍ່ ສາມາດດຶງຄວາມສົນໃຈ ຂອງສະພາຄວາມໝັ້ນຄົງ ໃສ່ທຸກເລື່ອງຊຶ່ງຕາມຄວາມເຫັນດີຂອງຕົນຖືວ່າອາດຈະເປັນອັນຕະລາຍຕໍ່ການປົກປັກຮັກສາ ສັນຕິພາບ ແລະ ຄວາມໝັ້ນຄົງລະຫວ່າງຊາດ.

*ມາດຕາ 100*

1. ໃນການປະຕິບັດໜ້າທີ່ຂອງຕົນ ເລຂາທິການໃຫຍ່ ແລະ ພະນັກງານຈະບໍ່ຮ້ອງຂໍ ຫຼື ຮັບຮອງເອົາຄໍາສັ່ງຈາກລັດຖະບານໃດໆ ຫຼື ຈາກເຈົ້າໜ້າທີ່ອື່ນໃດພາຍນອກອົງການ. ບຸກຄົນເລົ່ານີ້ຈະລະເວັ້ນຈາກການກະທໍາທີ່ບໍ່ສອດຄ່ອງກັບຖານະຂອງຕົນໃນນາມເປັນເຈົ້າໜ້າທີ່ລະຫວ່າງຊາດ ແລະ ຮັບຜິດຊອບຕໍ່ອົງການສະຫະປະຊາຊາດເທົ່ານັ້ນ.

2. ສະມາຊິກສະຫະປະຊາຊາດທຸກປະເທດຈໍາຕ້ອງໄດ້ເຄົາລົບຖານະລະຫວ່າງປະເທດໂດຍສະເພາະໜ້າທີ່ເລຂາທິການໃຫຍ່ ແລະ ພະນັກງານຂອງເຂົາ ພ້ອມທັງຈະບໍ່ໃຊ້ອິດທິພົນຕໍ່ການປະຕິບັດງານຂອງພວກເຂົາເຈົ້າ.

*ມາດຕາ 101*

1. ພະນັກງານຈະໄດ້ຮັບການແຕ່ງຕັ້ງໂດຍເລຂາທິການໃຫຍ່ຕາມ

ລະບຽບທີ່ສະມັດຊາໃຫຍ່ໄດ້ກຳນົດໄວ້.

2. ພະນັກງານພິເສດສະເພາະຈະໄດ້ຮັບການມອບຫມາຍໃຫ້ໄປປະຈຳການຢ່າງຖາວອນຢູ່ສະພາເສດຖະກິດ ແລະ ສັງຄົມ, ສະພາວ່າດ້ວຍການອາລັກຂາ ແລະ ອົງການອື່ນໆ ຂອງສະຫະປະຊາຊາດ ຖ້າຫາກຕ້ອງການ . ພະນັກງານເຫຼົ່ານີ້ຂຶ້ນກັບສຳນັກເລຂາທິການ.

3. ພື້ນຖານອັນສຳຄັນໃນການຮັບພະນັກງານ ແລະ ການກຳນົດເງື່ອນໄຂເຮັດວຽກຂອງພະນັກງານ ແມ່ນຄວາມຈຳເປັນທີ່ຈະຕ້ອງຮັບປະກັນການບໍລິການສະຫະປະຊາຊາດ ຂອງບຸກຄົນທີ່ມີມາດຕະຖານອັນສູງ ດ້ານສະມັດຖະພາບ ດ້ານອອກແຮງງານຄວາມສາມາດ ແລະຄວາມຊື່ສັດຄວາມສຳຄັນໃນການຈັດຫາພະນັກງານໂດຍອີງໃສ່ ພື້ນຖານດ້ານພູມສາດໃຫ້ກວ້າງຂວາງທີ່ສຸດເທົ່າທີ່ຈະເປັນໄປໄດ້.

# ໝວດທີ່ XVI
## ຂໍ້ບັນຍັດຕ່າງໆ

*ມາດຕາ 102*

1. ພາຍຫຼັງທີ່ກົດບັດສະຫະປະຊາຊາດ ສະບັບປະຈຸບັນໄດ້ມີຜົນບັງຄັບໃຊ້ແລ້ວ ສົນທິສັນຍາທຸກສະບັບ ແລະ ຂໍ້ຕົກລົງ ລະຫວ່າງຊາດທີ່ສະມາຊິກສະຫະປະຊາຊາດໄດ້ເຂົ້າເປັນພາຄີ ຈະຕ້ອງໄປຈົດທະບຽນຢູ່ທີ່ສຳນັກເລຂາທິການໂດຍໄວທີ່ສຸດ ເທົ່າທີ່ຈະໄວໄດ້ ແລະ ຈະຕ້ອງຈັດພິມເຜີຍແຜ່ໂດຍສຳນັກງານນີ້.

2. ພາຄີຂອງສົນທິສັນຍາ ຫຼື ຂໍ້ຕົກລົງລະຫວ່າງຊາດປະເທດໃດທີ່ບໍ່ໄດ້ຈົດທະບຽນໄວ້ຕາມບົດບັນຍັດໃນວັກ 1 ຂອງມາດຕານີ້ ຈະບໍ່ສາມາດຍົກເອົາສົນທິສັນຍາ ຫຼື ຂໍ້ຕົກລົງນັ້ນຂຶ້ນມາເປັນສິ່ງອ້າງອີງຕໍ່ອົງການໃດໆຂອງອົງການສະຫະປະຊາຊາດໄດ້.

*ມາດຕາ 103*

ໃນກໍລະນີມີການຄັດແຍ່ງລະຫວ່າງ ພັນທະຂອງສະມາຊິກສະຫະປະຊາຊາດຕາມກົດບັດສະບັບປະຈຸບັນ ແລະ ພັນທະຕາມຂໍ້ຕົກລົງລະຫວ່າງຊາດໃດນຶ່ງ, ພັນທະຕາມກົດບັດສະຫະປະຊາຊາດ ຈະມີຜົນ

ບັງຄັບໃຊ້ກ່ອນ.

*ມາດຕາ 104*

ອົງການສະຫະປະຊາຊາດ ໄດ້ຮັບຜົນປະໂຫຍກໃນຄວາມສາມາດຕາມກົດຫມາຍໃນດິນແດນຂອງສະມາຊິກແຕ່ລະປະເທດ ຂອງອົງການເທົ່າທີ່ຈຳເປັນເພື່ອດຳເນີນຫນ້າທີ່ ແລະ ບັນລຸເປົ້າຫມາຍຂອງອົງການ.

*ມາດຕາ 105*

1. ອົງການສະຫະປະຊາຊາດ ຈະໄດ້ຮັບເອກະສິດ ແລະ ສິດຄຸ້ມກັນເທົ່າທີ່ຈຳເປັນໃນດິນແດນຂອງສະມາຊິກແຕ່ລະປະເທດຂອງອົງການເພື່ອບັນລຸເປົ້າຫມາຍຂອງຕົນ.

2. ຜູ້ຕາງໜ້າຂອງສະມາຊິກ ສະຫະປະຊາຊາດ ແລະ ເຈົ້າໜ້າທີ່ຂອງສະຫະປະຊາຊາດຈະໄດ້ຮັບເອກະສິດ ແລະ ສິດຄຸ້ມກັນເທົ່າທີ່ຈຳເປັນ ສຳລັບການດຳເນີນໜ້າທີ່ໂດຍອິດສະລະກ່ຽວກັບອົງການສະຫະປະຊາຊາດ.

3. ສະມັດຊາໃຫຍ່ ສະມາດເຮັດຄຳແນະນຳ ເພື່ອກຳນົດລາຍລະອຽດໃນການປະຕິບັດວັກ 1 ແລະ 2 ຂອງມາດຕານີ້ ຫຼື ສາມາດສະເໜີສັນຍາຕໍ່ສະມາຊິກອົງການສະຫະປະຊາຊາດ ໃນຈຸດປະສົງດັ່ງກ່າວ.

# ໝວດທີ່ XVII
## ຂໍ້ຕົກລົງສະເພາະ ຊົ່ວຄາວກ່ຽວກັບຄວາມໝັ້ນຄົງ

*ມາດຕາ 106*

ໃນໄລຍະທີ່ຍັງບໍ່ທັນມີຜົນບັງຄັບໃຊ້ ຂໍ້ຕົກລົງພິເສດດັ່ງທີ່ກຳນົດ ໄວ້ ໃນມາດຕາ 43 ຊຶ່ງຕາມຄຳເຫັນຂອງສະພາຄວາມຫມັ້ນຄົງຈະຊ່ວຍ ໃຫ້ຕົນໄດ້ເລີ່ມປະຕິບັດຕາມຄວາມຮັບຜິດຊອບຂອງຕົນ ໃນມາດຕາ 42, ພາຄີຂອງການຖະແຫຼງ ສີ່ຊາດທີ່ໄດ້ເຊັນກັນໃນ ມົດສະກູ ລົງວັນທີ 30 ຕຸລາ 1943 ກັບປະເທດຝັ່ງຈະປຶກສາຊຶ່ງກັນ ແລະ ກັນ ແລະ ເມື່ອ ໂອກາດຮຽກຮ້ອງຈະປຶກສາຫາລືກັນກັບສະມາຊິກອື່ນໆ ຂອງສະຫະ ປະຊາຊາດ ຕາມບົດບັນຍັດ ວັກ 5 ຂອງຖະແຫຼງການດັ່ງກ່າວເພື່ອ ດຳເນີນການຮ່ວມກັນໃນນາມອົງການສະຫະປະຊາຊາດ ທີ່ອາດຈະຈຳ ເປັນເພື່ອປົກປັກຮັກສາສັນຕິພາບ ແລະ ຄວາມໝັ້ນຄົງລະຫວ່າງຊາດ.

*ມາດຕາ 107*

ບໍ່ມີບັນຍັດໃດໆ ໃນກົດບັດສະບັບນີ້ ຈະມີຜົນກະທົບ ຫຼື ຫ້າມການ ດຳເນີນການທີ່ກ່ຽວພັນໃດໆກັບລັດໃດນຶ່ງ ຊຶ່ງໃນລະຫວ່າງສົງຄາມໂລກ ຄັ້ງທີ່ສອງ ໄດ້ເປັນສັດຕູຂອງລັດຜູ້ລົງນາມ ໃນກົດບັດສະບັບນີ້ ຊຶ່ງລັດ

ຖະບານທີ່ຮັບຜິດຊອບສໍາລັບການດໍາເນີນການເຊັ່ນວ່ານັ້ນໄດ້ກະທໍາໄປ ຫຼື ໄດ້ອະນຸຍາດກະທໍາສືບເນື່ອງຈາກສົງຄາມນັ້ນ.

# ໝວດທີ XVIII
## ການດັດແປງແກ້ໄຂ

*ມາດຕາ 108*

ການດັດແປງແກ້ໄຂກົດບັດສະບັບປັດຈຸບັນຈະມີຜົນບັງຄັບໃຊ້ສຳລັບສະມາຊິກທັງໝົດຂອງສະຫະປະຊາຊາດກໍຕໍ່ເມື່ອການແກ້ໄຂ ນັ້ນໄດ້ຮັບສັດຕະຍາບັນ, ຕາມຂັ້ນຕອນລະບຽບ ລັດຖະທຳມະນູນແຕ່ລະປະເທດ, ໂດຍຄະແນນສຽງສອງສ່ວນສາມ ຂອງສະມາຊິກສະຫະປະຊາຊາດ ລວມທັງສະມາຊິກຖາວອນທັງໝົດຂອງ ສະພາຄວາມໝັ້ນຄົງ.

*ມາດຕາ 109*

1. ການປະຊຸມທົ່ວໄປ ຂອງສະມາຊິກ ສະຫະປະຊາຊາດ, ໃນຈຸດປະສົງແກ້ໄຂກົດບັດສະບັບປັດຈຸບັນ, ອາດຈະຈັດ ໃຫ້ມີຂຶ້ນສະຖານທີ່ ແລະ ວັນເວລາທີ່ກຳນົດ ໂດຍຄະແນນສຽງສອງສ່ວນສາມ ຂອງສະມາຊິກສະມັດຊາໃຫຍ່ ແລະ ໂດຍຄະແນນສຽງຂອງສະມາຊິກສະພາຄວາມໝັ້ນຄົງ ສະມາຊິກ ເກົ້າປະເທດ. ສະມາຊິກແຕ່ລະປະເທດຂອງ ສະຫະປະຊາຊາດ ຈະມີຄະແນນສຽງນຶ່ງສຽງ ໃນການປະຊຸມນີ້.

2. ທຸກໆການປ່ຽນແປງໃນກົດບັດສະບັບປັດຈຸບັນຊຶ່ງໄດ້ຮັບຄຳ

ແນະນຳໂດຍກອງປະຊຸມໂດຍຄະແນນສຽງ ສອງສ່ວນສາມ ຈະມີຜົນບັງຄັບໃຊ້ເມື່ອໃດຫາກໄດ້ຮັບການສັດຕະຍາບັນ, ຕາມຂັ້ນຕອນຂອງລະບຽບລັດຖະທຳມະນູນ ແຕ່ລະປະເທດ, ໂດຍຄະແນນສຽງ ສອງສ່ວນສາມ ຂອງສະມາຊິກສະຫະປະຊາຊາດລວມທັງຄະແນນສຽງ ຂອງສະມາຊິກຖາວອນທັງໝົດ ຂອງສະພາຄວາມໝັ້ນຄົງ.

3. ຖ້າການປະຊຸມດັ່ງກ່າວຫາກຍັງບໍ່ທັນໄດ້ຈັດຂຶ້ນກ່ອນສະໄໝປະຊຸມປະຈຳປີຄັ້ງທີ ສິບ ຂອງສະມັດຊາໃຫຍ່ນັບແຕ່ກົດບັດສະບັບປັດຈຸບັນໄດ້ມີຜົນບັງຄັບໃຊ້ແລ້ວ, ຂໍ້ສະເໜີເພື່ອຈະຮຽກປະຊຸມດັ່ງກ່າວຈະຕ້ອງນຳເຂົ້າລະບຽບວາລະຂອງສະໄໝປະຊຸມ ສະມັດຊາໃຫຍ່ ແລະການປະຊຸມຈະຈັດໃຫ້ມີຂຶ້ນຖ້າຫາກວ່າໄດ້ຮັບການຕົກລົງດ້ວຍຄະແນນສຽງສ່ວນຫຼາຍຂອງສະມັດຊາໃຫຍ່ ແລະ ດ້ວຍຄະແນນສຽງຂອງ ເຈັດສະມາຊິກ ຂອງສະພາຄວາມໝັ້ນຄົງ.

# ໝວດທີ XIX
## ການສັດຕະຍາບັນ ແລະ ການລົງນາມ

*ມາດຕາ 110*

1. ກົດບັດສະບັບປັດຈຸບັນຈະຕ້ອງໄດ້ຮັບການສັດຕະຍາບັນດ້ວຍລັດທີ່ລົງນາມຕາມຂັ້ນຕອນລະບຽບລັດຖະທຳມະນູນ ຂອງປະເທດຂອງຕົນ.

2. ສານສັດຕະຍາບັນຈະມອບໃຫ້ລັດຖະບານສະຫະລັດອາເມລິກາເກັບມ້ຽນ, ຊຶ່ງລັດຖະບານດັ່ງກ່າວຈະແຈ້ງການມອບແຕ່ລະຄັ້ງໃຫ້ແກ່ລັດທີ່ລົງນາມທຸກໆລັດກໍຄືເລຂາທິການໃຫຍ່ສະຫະປະຊາຊາດ ເມື່ອໄດ້ຮັບການແຕ່ງຕັ້ງແລ້ວ.

3. ກົດບັດສະບັບປັດຈຸບັນຈະມີຜົນບັງຄັບໃຊ້ເມື່ອ ສາທາລະນະລັດ ຈີນ, ຝຣັ່ງ, ສະຫະພາບສາທາລະນະລັດສັງຄົມນິຍົມ ໂຊຫວຽດ, ສະຫະລາດຊະອານາຈັກແຫ່ງ ອັງກິດ ແລະ ໄອແລນເໜືອ ແລະ ສະຫະລັດ ອາເມລິກາ ແລະ ຈຳນວນສຽງສ່ວນຫຼາຍຂອງລັດອື່ນໆ ທີ່ລົງນາມໄດ້ມອບສານສັດຕະຍາບັນ. ບົດບັນທຶກຂອງການໄດ້ມອບສານສັດຕະຍາບັນຈະກະທຳຂຶ້ນໂດຍລັດຖະບານແຫ່ງ ສະຫະລັດ ອາເມລິກາ ຊຶ່ງຈະໄດ້ສົ່ງສຳເນົາບົດບັນທຶກດັ່ງກ່າວນັ້ນໄປຍັງທຸກໆລັດທີ່ໄດ້ລົງນາມ.

4. ລັດຊຶ່ງລົງນາມໃນກົດບັດສະບັບປັດຈຸບັນທີ່ໃຫ້ສັດຕະຍາບັນພາຍຫຼັງທີ່ກົດບັດມີຜົນບັງຄັບໃຊ້ຈະກາຍເປັນສະມາຊິກດັ້ງເດີມ ຂອງສະຫະປະຊາຊາດ ນັບແຕ່ວັນເວລາທີ່ໄດ້ມອບສານສັດຕະຍາບັນຂອງຕົນ.

*ມາດຕາ 111*

ກົດບັດສະບັບປັດຈຸບັນ ຊຶ່ງເນື້ອໃນເປັນພາສາຈີນ, ຝຣັ່ງ, ລັດເຊຍ ອັງກິດ ແລະ ແອດສປາຍໂຍນຖືວ່າເປັນຕົ້ນສະບັບເທົ່າທຽມກັນຈະໄດ້ມອບໄວ້ໃນບັນນາສານຂອງລັດຖະບານ ສະຫະລັດອາເມລິກາ. ລັດຖະບານ ສະຫະລັດອາເມລິກາ ຈະໄດ້ສົ່ງສຳເນົາຢ່າງຖືກຕ້ອງແລ້ວໄປຍັງລັດຖະບານແຫ່ງລັດທີ່ລົງນາມອື່ນໆ.

ເພື່ອເປັນຫຼັກຖານ, ບັນດາຜູ້ແທນລັດຖະບານຕ່າງໆປະຈຳສະຫະປະຊາຊາດໄດ້ລົງນາມໄວ້ໃນກົດບັດສະບັບນີ້.

ເຮັດທີ່ ນະຄອນ ຊານຟຣານຊິດສໂກ, ເມື່ອວັນທີ ຊາວຫົກ ເດືອນມິຖຸນາ ປີ ນຶ່ງພັນເກົ້າຮ້ອຍສີ່ສິບຫ້າ.

# ທຳມະນູນ
# ສານຍຸຕິທຳ
# ລະຫວ່າງປະເທດ

*ມາດຕາ 1*

ສານຍຸຕິທຳລະຫວ່າງປະເທດ ຊຶ່ງຕັ້ງຂຶ້ນໂດຍກົດບັດສະຫະປະຊາຊາດເພື່ອໃຫ້ເປັນອົງການສຳຄັນທາງດ້ານຍຸຕິທຳ ຂອງອົງການສະຫະປະຊາຊາດຈະຖືກຕັ້ງຂຶ້ນ ແລະ ຈະປະຕິບັດໜ້າທີ່ຕາມບົດບັນຍັດຂອງທຳມະນູນສະບັບນີ້.

# ໝວດທີ່ I
## ການຈັດຕັ້ງຂອງສານ

*ມາດຕາ 2*

ສານນີ້ປະກອບດ້ວຍ ຄະນະຜູ້ພິພາກສາທີ່ເປັນເອກະລາດ, ເລືອກຕັ້ງໂດຍບໍ່ຄຳນຶງເຖິງສັນຊາດ ຈາກບັນດາບຸກຄົນຜູ້ທີ່ມີຄຸນະທຳສູງ ແລະ ມີຄຸນສົມບັດຄົບຖ້ວນຈາກບັນດາປະເທດນັ້ນໆ, ເພື່ອປະຕິບັດໜ້າທີ່ເປັນພະນັກງານຕຸລາການສູງສຸດ ຫຼື ເປັນນັກກົດໝາຍຊຶ່ງຄວາມສາມາດທາງດ້ານກົດໝາຍລະຫວ່າງປະເທດ ເປັນທີ່ຍອມຮັບໂດຍທົ່ວໄປ.

*ມາດຕາ 3*

1. ສານນີ້ ປະກອບດ້ວຍສະມາຊິກ ສິບຫ້າຄົນ. ສະມາຊິກແຕ່ລະ

ຄົນ ຈະເປັນຄົນສັນຊາດຂອງ ລັດດຽວກັນບໍ່ໄດ້.

2. ກ່ຽວກັບບັນຫານີ້ ບຸກຄົນໃດທີ່ອາດຖືໄດ້ວ່າເປັນຄົນສັນຊາດຂອງ ຫຼາຍລັດກວ່ານຶ່ງລັດ, ໃຫ້ຖືວ່າເປັນຄົນສັນຊາດຂອງ ລັດທີ່ບຸກຄົນນັ້ນໃຊ້ສິດທິທາງແພ່ງ ແລະ ທາງການເມືອງຢ່າງເປັນປົກກະຕິ.

*ມາດຕາ 4*

1. ສະມາຊິກຂອງສານນັ້ນ ຖືກເລືອກຕັ້ງໂດຍສະມັດຊາໃຫຍ່ ແລະ ໂດຍສະພາຄວາມໝັ້ນຄົງ, ຈາກລາຍຊື່ບຸກຄົນທີ່ສະເໜີໂດຍໜ່ວຍງານປະຈຳຊາດ ຂອງສານປະຈຳອານຸຍາໂຕຕຸລາການຕາມບົດບັນຍັດດັ່ງຕໍ່ໄປນີ້.

2. ໃນກໍລະນີທີ່ສະມາຊິກຂອງ ສະຫະປະຊາຊາດ ບໍ່ມີຕົວແທນຢູ່ໃນສານປະຈຳອານຸຍາໂຕຕຸລາການ, ຜູ້ເຂົ້າສະມັກເລືອກຕັ້ງຈະຖືກສະເຫນີຊື່ ໂດຍໜ່ວຍງານປະຈຳຊາດ ສຳລັບກໍລະນີ ນີ້ໂດຍແມ່ນລັດຖະບານຂອງເຂົາເປັນຜູ້ແຕ່ງຕັ້ງ ພາຍໃຕ້ເງື່ອນໄຂອັນດຽວກັນກັບທີ່ໄດ້ກຳນົດໄວ້ ສຳລັບສະມາຊິກຂອງສານປະຈຳອານຸຍາໂຕຕຸລາການຕາມມາດຕາ 44 ຂອງສົນທິສັນຍາກຸງລາໄຮ ປີ 1907 ວ່າດ້ວຍການລະງັບກໍລະນີພິພາດລະຫວ່າງປະເທດ ໂດຍສັນຕິວິທີ.

3. ໃນເມື່ອຍັງບໍ່ມີຂໍ້ຕົກລົງພິເສດ, ສະມັດຊາໃຫຍ່ຈະເປັນຜູ້ກຳນົດເງື່ອນໄຂຕ່າງໆ ສຳລັບລັດທີ່ເປັນພາຄີ ຂອງທຳມະນູນສະບັບນີ້, ແຕ່ຍັງບໍ່

ໄດ້ເປັນສະມາຊິກສະຫະປະຊາຊາດ ທີ່ອາດຈະເຂົ້າຮ່ວມໃນການ ເລືອກຕັ້ງສະມາຊິກຂອງສານນີ້ນັ້ນ, ຕາມການສະເໜີແນະຂອງ ສະພາຄວາມໝັ້ນຄົງ.

*ມາດຕາ 5*

1. ກ່ອນວັນເລືອກຕັ້ງຢ່າງໜ້ອຍ ສາມເດືອນ, ເລຂາທິການໃຫຍ່ອົງການສະຫະປະຊາຊາດຈະບໍ່ສົ່ງຄຳເຊີນເປັນລາຍລັກອັກສອນ ໄປຍັງສະມາຊິກຂອງສານປະຈຳອານຸຍາໂຕຕຸລາການ ຊຶ່ງເປັນຄົນຂອງລັດທີ່ເປັນພາຄີຂອງລັດຖະທຳມະນູນສະບັບນີ້ ແລະ ສົ່ງໄປຍັງສະມາຊິກ ຂອງໜ່ວຍງານປະຈຳຊາດທີ່ແຕ່ງຕັ້ງຂຶ້ນຕາມມາດຕາ 4 ວັກ 2 ເຊື້ອເຊີນໃຫ້ໜ່ວຍງານປະຈຳຊາດສະເຫນີຊື່ບຸກຄົນຊຶ່ງຢູ່ໃນຖານະທີ່ຈະຮັບໜ້າທີ່ ເປັນສະມາຊິກຂອງສານໄດ້, ພາຍໃນໄລຍະເວລາທີ່ໄດ້ກຳນົດ.

2. ໜ່ວຍງານນຶ່ງໆ ຈະສະເໜີໄດ້ບໍ່ເກີນ 4 ຄົນເຊິ່ງຈະເປັນຄົນສັນຊາດດຽວກັນເກີນ 2 ຄົນບໍ່ໄດ້, ບໍ່ວ່າກໍລະນີໃດກໍຕາມ, ຈຳນວນຜູ້ເຂົ້າຮັບເລືອກຕັ້ງທີ່ສະເໜີໂດຍໜ່ວຍງານນັ້ນຈະຫຼາຍກວ່າສອງເທົ່າຂອງຕຳແໜ່ງທີ່ວ່າງບໍ່ໄດ້.

*ມາດຕາ 6*

ກ່ອນຈະສະເໜີລາຍຊື່, ໜ່ວຍງານປະຈຳຊາດແຕ່ລະໜ່ວຍຄວນຈະປຶກສາກັບສານຍຸຕິທຳສູງ, ສະຖາບັນຂອງມະຫາວິທະຍາໄລ ແລະ ໂຮງຮຽນກົດໝາຍ, ສະພາບັນດິດແຫ່ງຊາດ ແລະ ສາຂາແຫ່ງຊາດ ຂອງສະພາບັນດິດລະຫວ່າງປະເທດທີ່ອຸທິດໃຫ້ແກ່ການສຶກສາຄົ້ນຄວ້າວິຊາກົດໝາຍ.

*ມາດຕາ 7*

1. ເລຂາທິການໃຫຍ່ຈະໄດ້ຕຽມບັນຊີລາຍຊື່ໝົດທຸກຄົນທີ່ຖືກບົ່ງຕົວມານັ້ນໂດຍລຽງຕາມລຳດັບຕົວອັກສອນ; ຈະມີພຽງບຸກຄົນເຫຼົ່ານີ້ເທົ່ານັ້ນທີ່ໄດ້ຮັບສິດໃນການເລືອກຕັ້ງ, ຍົກເວັ້ນແຕ່ກໍລະນີທີ່ໄດ້ກຳນົດໄວ້ໃນ ມາດຕາ 12 ວັກ 2.

2. ເລຂາທິການໃຫຍ່ຈະໄດ້ສະເໜີບັນຊີນີ້ຕໍ່ສະມັດຊາໃຫຍ່ ແລະ ສະພາຄວາມໝັ້ນຄົງ.

*ມາດຕາ 8*

ສະມັດຊາໃຫຍ່ ແລະ ສະພາຄວາມໝັ້ນຄົງ ຈະດຳເນີນການເລືອກຕັ້ງສະມາຊິກຂອງສານຢ່າງເປັນອິດສະລະຂອງໃຜລາວ.

*ມາດຕາ 9*

ໃນການເລືອກຕັ້ງທຸກໆຄັ້ງ, ຜູ້ເລືອກຕັ້ງຈະຕ້ອງຄຳນຶງສະເໝີວ່າ, ອົງຄະນະຜູ້ພິພາກສາທີ່ຖືກເລືອກເຂົ້າມານັ້ນ ບໍ່ພຽງແຕ່ຈະເປັນບຸກຄົນທີ່ມີຄຸນນະສົມບັດຄົບຖ້ວນຕາມທີ່ກຳນົດໄວ້ແລ້ວເທົ່ານັ້ນ, ແຕ່ຫາກຕ້ອງເປັນຕົວແທນຂອງອະລິຍະທຳ ແລະ ລະບົບກົດໝາຍທີ່ສຳຄັນຂອງໂລກໂດຍທົ່ວໄປອີກດ້ວຍ.

*ມາດຕາ 10*

1. ຜູ້ເຂົ້າຮັບສະໝັກຜູ້ໃດທີ່ໄດ້ຮັບຄະແນນສຽງສ່ວນຫຼາຍກວ່າໝູ່ແບບເດັດຂາດໃນສະມັດຊາໃຫຍ່ ແລະ ໃນສະພາຄວາມໝັ້ນຄົງໃຫ້ຖືວ່າໄດ້ຮັບເລືອກຕັ້ງ.

2. ການລົງຄະແນນສຽງໃນສະພາຄວາມໝັ້ນຄົງເພື່ອເລືອກຕັ້ງຜູ້ພິພາກສາ ຫຼື ແຕ່ງຕັ້ງສະມາຊິກເຂົ້າຮ່ວມຄະນະກຳມາທິການຕາມທີ່ໄດ້ລະບຸໄວ້ໃນມາດຕາ 12 ຕໍ່ໄປນີ້, ບໍ່ມີຫຍັງແຕກຕ່າງກັນລະຫວ່າງສະມາຊິກຖາວອນ ແລະ ບໍ່ຖາວອນຂອງສະພາຄວາມໝັ້ນຄົງ.

3. ໃນກໍລະນີທີ່ຄົນສັນຊາດຂອງລັດດຽວກັນທີ່ຫຼາຍກວ່າຄົນ ໄດ້ຮັບຄະແນນສຽງຫຼາຍກວ່າໝູ່ທັງຢູ່ໃນສະມັດຊາໃຫຍ່ ແລະ ຢູ່ໃນສະພາຄວາມໝັ້ນຄົງ, ຜູ້ທີ່ມີອາຍຸສູງພຽງຜູ້ດຽວເທົ່ານັ້ນຈະຖືເປັນຜູ້ໄດ້ຮັບການເລືອກຕັ້ງ.

*ມາດຕາ 11*

ຖ້າວ່າການເລືອກຕັ້ງຄັ້ງທຳອິດໄດ້ຜ່ານໄປແລ້ວ, ແຕ່ຍັງມີຫຼາຍຕຳແໜ່ງຍັງຫວ່າງຢູ່, ກໍໄດ້ດຳເນີນການເລືອກຕັ້ງຄັ້ງທີ່ສອງໃນວິທີດຽວກັນ ແລະ ຖ້າຫາກຈຳເປັນກໍເລືອກກັນອີກເທື່ອທີ່ສາມ.

*ມາດຕາ 12*

1. ຖ້າວ່າພາຍຫຼັງການເລືອກຕັ້ງຄັ້ງທີ່ສາມໄດ້ຜ່ານໄປແລ້ວ ແຕ່ຫາກມີຫຼາຍຕຳແໜ່ງຍັງຫວ່າງຢູ່, ສະມັດຊາໃຫຍ່ ຫຼື ສະພາຄວາມຫມັ້ນຄົງອາດຮ້ອງຂໍໃນເວລາໃດກໍໄດ້ໃຫ້ມີຄະນະກຳມາທິການໄກ່ເກັ່ຽຊຶ່ງປະກອບດ້ວຍສະມາຊິກ ຫົກຄົນ, ສາມຄົນແຕ່ງຕັ້ງໂດຍສະມັດຊາໃຫຍ່ ແລະ ອີກສາມຄົນ ແຕ່ງຕັ້ງໂດຍສະພາຄວາມໝັ້ນຄົງເພື່ອເລືອກ ເອົາຊື່ນຶ່ງດ້ວຍການລົງຄະແນນສຽງສ່ວນຫຼາຍແບບເດັດຂາດສຳລັບຕຳແໜ່ງແຕ່ລະຕຳແໜ່ງທີ່ຍັງຫວ່າງຢູ່ແລ້ວ ສະເຫນີໄປຍັງສະມັດຊາໃຫຍ່ ແລະ ສະພາຄວາມຫມັ້ນຄົງເພື່ອຮັບຮອງເອົາຕາມລຳດັບ.

2. ຄະນະກຳມາທິການໄກ່ເກັ່ຽສາມາດຕົກລົງໂດຍເປັນເອກະສັນກັນຮັບເອົາບຸກຄົນທີ່ມີຄຸນສົມບັດຄົບຖ້ວນ ແລະ ຈົດຊື່ຜູ້ນັ້ນເຂົ້າໃນບັນຊີໄວ້, ເຖິງວ່າຜູ້ນັ້ນຈະມີຊື່ຢູ່ໃນບັນຊີທີ່ມີຜູ້ສະເຫນີຕາມທີ່ກຳນົດໄວ້ໃນມາດຕາ 7 ກໍຕາມ.

3. ຖ້າຄະນະກຳມະທິການໄກ່ເກັ່ຽໃຫ້ຂໍ້ສັງເກດວ່າ ຕົນຈະບໍ່ປະສົບຜົນສຳເລັດໃນການເລືອກຕັ້ງ ກໍຈະແມ່ນບັນດາສະມາຊິກຂອງສານຊຶ່ງຫາກໍໄດ້ຮັບການເລືອກຕັ້ງ ແລ້ວຖືກບັນຈຸໃສ່ຕຳແໜ່ງຫວ່າງທີ່ສະພາຄວາມຫມັ້ນຄົງບັ່ງໄວ້, ເລືອກເອົາບັນດາຜູ້ສະຫມັກທີ່ໄດ້ຮັບເອົາຄະແນນສຽງສະໜັບສະໜູນມາແລ້ວຈາກສະມັດຊາໃຫຍ່ ຫຼື ຈາກສະພາຄວາມໝັ້ນຄົງ.

4. ຖ້າຫາກມີຄະແນນສຽງເທົ່າທຽບກັນ ລະຫວ່າງຜູ້ພິພາກສາ, ຄະແນນສຽງຂອງຜູ້ພິພາກສາຜູ້ມີອາຍຸສູງກວ່າຈະເປັນອັນຊີ້ຂາດ.

*ມາດຕາ 13*

1. ສະມາຊິກຂອງ ສານຈະຢູ່ໃນຕຳແໜ່ງໃນກຳນົດເວລາ 9 ປີ ແລະ ສາມາດໄດ້ຮັບເລືອກຕັ້ງຄືນໃໝ່ໄດ້. ແຕ່ສຳລັບຜູ້ພິພາກສາທີ່ໄດ້ຮັບເລືອກຕັ້ງຄັ້ງທຳອິດນັ້ນ ກຳນົດເວລາ ຢູ່ໃນຕຳແໜ່ງ ຂອງຜູ້ພິພາກສາຫ້າ ຄົນ ຈະສິ້ນສຸດລົງພາຍໃນ ສາມ ປີ ແລະ ໄລຍະເວລາຢູ່ໃນຕຳແໜ່ງຂອງຜູ້ພິພາກສາອີກ ຫ້າ ຄົນ ຈະສິ້ນສຸດລົງພາຍໃນ ຫົກ ປີ.

2. ການພົ້ນຈາກຕຳແໜ່ງ ຕາມກຳນົດເວລາ ສາມ ປີ ແລະ ຫົກ ປີ ຂອງຜູ້ພິພາກສາດັ່ງທີ່ກ່າວໃນຂ້າງເທິງນັ້ນ ຈະດຳເນີນດ້ວຍວິທີຈົກສະຫຼາກ ໂດຍເລຂາທິການໃຫຍ່ ຂອງ ສະຫະປະຊາຊາດ ໃນທັນທີຫຼັງຈາກທີ່ການເລືອກຕັ້ງທຳອິດໄດ້ສຳເລັດລົງ.

3. ສະມາຊິກຂອງສານຈະສືບຕໍ່ປະຕິບັດໜ້າທີ່ຂອງຕົນຕໍ່ໄປຈົນກວ່າຈະໄດ້ເລືອກຕັ້ງເອົາຜູ້ເຂົ້າມາຮັບຕຳແໜ່ງແທນ. ເຖິງຈະມີການປ່ຽນແທນແລ້ວກໍຕາມ, ແຕ່ສະມາຊິກຂອງສານກໍຍັງມີອຳນາດພິຈາລະນາຄະດີໃດນຶ່ງທີ່ຕົນໄດ້ເລີ່ມພິຈາລະນາມາແລ້ວນັ້ນຕໍ່ໄປຈົນກວ່າຈະສິ້ນສຸດລົງ.

4. ໃນກໍລະນີທີ່ຜູ້ພິພາກສາລາອອກ, ກໍໃຫ້ຍື່ນໃບລາອອກຕໍ່ປະທານສານເພື່ອສົ່ງຕໍ່ໄປຍັງເລຂາທິການໃຫຍ່ຈະເຮັດໃຫ້ຕຳແໜ່ງນັ້ນຫວ່າງລົງ.

*ມາດຕາ 14*

ຕຳແໜ່ງທີ່ຫວ່າງຈະໄດ້ຖືກເລືອກຕັ້ງຕາມວິທີການດຽວກັນກັບການເລືອກຕັ້ງຄັ້ງທຳອິດ, ໂດຍອີງຕາມຂໍ້ກຳນົດດັ່ງຕໍ່ໄປນີ້: ເລຂາທິການໃຫຍ່ຈະດຳເນີນການເຊີນຕາມມາດຕາ 5 ພາຍໃນໄລຍະເວລາໜຶ່ງເດືອນຈາກການຫວ່າງລົງຂອງຕຳແໜ່ງ ແລະ ວັນທີຂອງການເລືອກຕັ້ງຈະຖືກກຳນົດໂດຍ ສະພາຄວາມໝັ້ນຄົງ.

*ມາດຕາ 15*

ສະມາຊິກ ຂອງສານທີ່ໄດ້ຮັບການເລືອກຕັ້ງ ແທນສະມາຊິກທີ່ຍັງຢູ່ໃນຕຳແໜ່ງບໍ່ທັນຄົບກຳນົດ ຈະໄດ້ຢູ່ໃນຕຳແໜ່ງພຽງໄລຍະເວລາທີ່

ຍັງເຫຼືອຢູ່ຂອງຜູ້ຕົນປ່ຽນແທນເທົ່ານັ້ນ.

*ມາດຕາ 16*

1. ສະມາຊິກ ຂອງສານຈະປະຕິບັດໜ້າທີ່ໃດນຶ່ງ ກ່ຽວກັບການເມືອງ ຫຼື ການປົກຄອງບໍ່ໄດ້ ຫຼື ຈະປະກອບບວຽກງານອື່ນໆ ທີ່ມີລັກສະນະເປັນອາຊີບບໍ່ໄດ້.

2. ຫາກມີກໍລະນີສົງໃສ ໃນບັນຫາດັ່ງກ່າວນີ້, ສານຈະພິຈາລະນາຕັດສິນຊີ້ຂາດ.

*ມາດຕາ 17*

1. ສະມາຊິກຂອງ ສານບໍ່ສາມາດຈະໄປເປັນຕົວແທນ, ເປັນທີ່ປຶກສາ ຫຼື ເປັນທະນາຍຄວາມໃນຄະດີກໍຕາມ.

2. ສະມາຊິກຂອງສານ ຈະບໍ່ສາມາດເຂົ້າຮ່ວມຕັດສິນຄະດີໃດໆ, ໃນຖານະທີ່ຕົນເຄີຍເຮັດໜ້າທີ່ເປັນຕົວແທນທະນາຍຄວາມ ຫຼື ຜູ້ເວົ້າຄະດີໃຫ້ແກ່ຄູ່ຄວາມຝ່າຍໜຶ່ງມາກ່ອນ ຫຼື ໃນຖານະສະມາຊິກຂອງສານພາຍໃນປະເທດ ຫຼື ສານລະຫວ່າງປະເທດ ຫຼື ຂອງຄະນະກຳມະທິການສອບສວນ ຫຼື ໃນຖານະອື່ນໃດກໍຕາມ.

3. ຖ້າຫາກມີບັນຫາໃນເລື່ອງນີ້ ກໍໃຫ້ສານພິຈາລະນາຕັດສິນຊີ້ຂາດ.

*ມາດຕາ 18*

1. ສະມາຊິກຂອງສານ ຈະຖືກປົດອອກຈາກຕໍາແໜ່ງບໍ່ໄດ້, ເວັ້ນເສຍແຕ່ມີມະຕິເປັນເອກະພາບກັນ ຂອງບັນດາສະມາຊິກ ກ່ຽວກັບການຂາດຄຸນສົມບັດທີ່ໄດ້ກໍານົດໄວ້.

2. ຈ່າສານເປັນຜູ້ແຈ້ງກ່ຽວກັບເລື່ອງດັ່ງກ່າວ ຢ່າງເປັນທາງການໃຫ້ແກ່ເລຂາທິການໃຫຍ່ຊາບ.

3. ການແຈ້ງຂ່າວດັ່ງກ່າວຈະເຮັດໃຫ້ຕໍາແໜ່ງນັ້ນຫວ່າງລົງ.

*ມາດຕາ 19*

ໃນການປະຕິບັດໜ້າທີ່ວຽກງານຂອງສານ, ສະມາຊິກຂອງສານຈະໄດ້ຮັບເອກະສິດ ແລະ ສິດຄຸ້ມກັນທາງການທູດ.

*ມາດຕາ 20*

ກ່ອນຈະເຂົ້າຮັບໜ້າທີ່, ສະມາຊິກຂອງສານທຸກຄົນ ຕ້ອງປະຕິຍານຕົນຕໍ່ໜ້າສານ ໃນເວລາເປີດພິທີອ່ານຕົນເອງ ຈະປະຕິບັດງານທີ່ຖືກມອບໝາຍໃຫ້ໂດຍບໍ່ເຂົ້າຂ້າງອອກຂາ ແລະ ຊື່ສັດຕໍ່ໜ້າທີ່ຂອງຕົນ.

*ມາດຕາ 21*

1. ສານຈະແຕ່ງຕັ້ງປະທານ ແລະ ຮອງປະທານຂອງຕົນໃຫ້ຢູ່ໃນ

ຕຳແໜ່ງ ໃນກຳນົດເວລາ 3 ປີ. ປະທານ ແລະ ຮອງປະທານສາມາດ ໄດ້ຮັບການເລືອກຕັ້ງຄືນໃໝ່ໄດ້.

2. ສານຈະແຈ້ງແຕ່ງຕັ້ງຈ່າສານຂອງຕົນນຶ່ງຄົນ ແລະ ເຈົ້າໜ້າທີ່ອື່ນໆຕາມຄວາມເປັນຈິງ.

*ມາດຕາ 22*

1. ສຳນັກງານນີ້ຕັ້ງຢູ່ທີ່ ນະຄອນລາໄຮ ແຕ່ບໍ່ໄດ້ຫ້າມການທີ່ສານຈະໄປນັ່ງພິຈາລະນາຄວາມ ແລະ ປະຕິບັດຫນ້າທີ່ຂອງຕົນຢູ່ແຫ່ງອື່ນໃນເມື່ອສານຫາກເຫັນວ່າສົມຄວນ.

2. ປະທານສານ ແລະ ຈ່າສານມີສະຖານທີ່ຢູ່ສຳນັກງານຂອງສານ.

*ມາດຕາ 23*

1. ສານເປີດການພິຈາລະນາຄວາມຕະຫຼອດ, ເວັ້ນເສຍແຕ່ໃນເວລາພັກຊຶ່ງໄລຍະ ແລະ ເວລາພັກສານຈະເປັນຜູ້ກຳນົດ.

2. ສະມາຊິກຂອງສານມີສິດລາພັກໄດ້ເປັນຄັ້ງຄາວ ຊຶ່ງສານຈະເປັນຜູ້ກຳນົດວັນ ແລະ ເວລາພັກ ໃຫ້ໂດຍຄຳນຶງເຖິງໄລຍະທາງ ລະຫວ່າງ ນະຄອນລາໄຮ ແລະ ບ້ານເຮືອນຂອງຜູ້ພິພາກສາ.

3. ສະມາຊິກຂອງ ສານຕ້ອງຕຽມພ້ອມປະຕິບັດໜ້າທີ່ໄດ້ຕະຫຼອດເວລາ, ເວັ້ນເສຍແຕ່ໃນກໍລະນີລາພັກ ຫຼື ບໍ່ສາມາດປະຕິບັດໜ້າທີ່ ໄດ້

ເນື່ອງຈາກຄວາມເຈັບປ່ວຍ ຫຼື ເຫດຜົນສຳຄັນອື່ນໆຊຶ່ງຕ້ອງລາຍງານຢ່າງຖືກຕ້ອງໃຫ້ປະທານຊາບ.

*ມາດຕາ 24*

1. ຖ້າຫາກເນື່ອງຈາກເຫດຜົນສະເພາະ, ສະມາຊິກຂອງສານຜູ້ໃດຜູ້ນຶ່ງໄດ້ພິຈາລະນາເຫັນວ່າຕົນບໍ່ເຂົ້າຮ່ວມໃນການຕັດສິນຄະດີໃດນຶ່ງກໍ່ໃຫ້ແຈ້ງຕໍ່ປະທານຊາບ.

2. ຫາກປະທານເຫັນວ່າ, ຍ້ອນເຫດຜົນສະເພາະບາງປະການ, ສະມາຊິກຂອງສານຜູ້ໃດຜູ້ນຶ່ງບໍ່ສົມຄວນເຂົ້າຮ່ວມນັ່ງພິຈາລະນາຄະດີໃດນຶ່ງ ກໍ່ໃຫ້ແຈ້ງສະມາຊິກຜູ້ນັ້ນຊາບ.

3. ຖ້າວ່າກໍລະນີເປັນເຊັ່ນດຽວກັນ, ສະມາຊິກຂອງສານເທົ່ານັ້ນ ແລະ ປະທານສານມີຄວາມເຫັນວ່າບໍ່ສອດຄ່ອງກັນກໍ່ໃຫ້ສານເປັນຜູ້ຕັດສິນ.

*ມາດຕາ 25*

1. ສານຕ້ອງນັ່ງພິຈາລະນາການແບ່ງວຽກງານຢ່າງຄົບຄະນະ, ຍົກເວັ້ນໃນກໍລະນີທີ່ໄດ້ບັນຍັດໄວ້ໃນຢ່າງອື່ນ ໃນທຳມະນູນສະບັບນີ້.

2. ຂໍ້ບັງຄັບຂອງສານອາດຈະກຳນົດອະນຸຍາດໃຫ້ ຜູ້ພິພາກສານຶ່ງຄົນ ຫຼື ຫຼາຍກວ່ານັ້ນ, ໄດ້ຮັບການຍົກເວັ້ນຈາກການເຂົ້ານັ່ງພິຈາລະນາ

ຄວາມ, ແລ້ວແຕ່ສະພາວະການ ແລະ ການໜູນວຽນປ່ຽນຜຽນກັນ, ແຕ່ຢູ່ໃນເງື່ອນໄຂທີ່ວ່າຈຳນວນຜູ້ພິພາກສາຊຶ່ງມີຢູ່ທີ່ຈະປະກອບເປັນສານນັ້ນບໍ່ໃຫ້ຕ່ຳກວ່າ 11 ຄົນ.

3. ຄະນະຜູ້ພິພາກສາ ເກົ້າ ຄົນ ສາມາດປະກອບເປັນສານໄດ້.

*ມາດຕາ 26*

1. ສານສາມາດຈັດແບ່ງເປັນນຶ່ງ ຫຼື ຫຼາຍຫ້ອງປະຊຸມສານໄດ້ທຸກໄລຍະ, ອັນປະກອບດ້ວຍຜູ້ພິພາກສາຢ່າງໜ້ອຍ ສາມ ຄົນ ແຕ່ລະຫ້ອງປະຊຸມສານຈະກຳນົດ, ເພື່ອພິຈາລະນາຄະດີແຕ່ລະປະເພດ ຕົວຢ່າງຄະດີແຮງງານ, ຄະດີກ່ຽວກັບການຜ່ານແດນ ແລະ ການຄົມມະນາຄົມ.

2. ສານອາດຈັດຫ້ອງປະຊຸມສານໄດ້ທຸກໄລຍະ, ເພື່ອພິຈາລະນາຄະດີໃດນຶ່ງ. ຈຳນວນຜູ້ພິພາກສາທີ່ຈະປະກອບເຂົ້າໃນຫ້ອງປະຊຸມສານເຊັ່ນວ່ານີ້ຈະແມ່ນສານເປັນຜູ້ກຳນົດ ແລະ ໂດຍຄວາມເຫັນດີຂອງຄູ່ຄວາມ.

3. ຄະນະສານທີ່ກຳນົດໃນມາດຕານີ້ຈະພິຈາລະນາຄວາມ ແລະ ພິພາກສາ ຖ້າຫາກຄູ່ຄວາມຮ້ອງຂໍ.

*ມາດຕາ 27*

ທຸກຄຳພິພາກສາ ຂອງຄະນະສານໃດນຶ່ງຕາມທີ່ໄດ້ກຳນົດໄວ້ໃນ

ມາດຕາ 26 ແລະ 29 ໃຫ້ຖືວ່າເປັນຄຳພິພາກສາຂອງສານນີ້.

*ມາດຕາ 28*

ຄະນະພິພາກສາຕາມທີ່ກ່າວໄວ້ໃນມາດຕາ 26 ແລະ 29 ນີ້ ສາມາດເຂົ້ານັ່ງປະຊຸມສານ ແລະ ປະຕິບັດໜ້າທີ່ຢູ່ບ່ອນອື່ນກໍໄດ້ ນອກຈາກນະຄອນຫຼວງລາໄຮ ຖ້າຄູ່ຄວາມຫາກເຫັນດີ.

*ມາດຕາ 29*

ເພື່ອໃຫ້ວຽກງານດຳເນີນໄປດ້ວຍຄວາມວ່ອງໄວ, ທຸກໆປີ ສານຈະປະກອບຄະນະນຶ່ງອັນມີຜູ້ພິພາກສາ ຫ້າ ຄົນ ເພື່ອພິພາກສາເລື່ອງຂັ້ນຕອນກ່ຽວກັບການດຳເນີນງານ ຕາມການຮ້ອງຂໍຂອງຄູ່ຄວາມ. ນອກຈາກນີ້ຈະເລືອກເອົາຜູ້ພິພາກສາອີກ ສອງ ຄົນ ເພື່ອປ່ຽນແທນ ຜູ້ພິພາກສາທີ່ບໍ່ສາມາດເຂົ້າຮ່ວມໃນການນັ່ງພິຈາລະນາຄະດີໄດ້.

*ມາດຕາ 30*

1. ໃຫ້ສານກຳນົດຂໍ້ບັງຄັບໃນການປະຕິບັດຫນ້າທີ່, ໂດຍສະເພາະໃຫ້ກຳນົດພິຈາລະນາຄວາມ.

2. ຂໍ້ບັງຄັບຂອງສານອາດຈະອານຸຍາດໃຫ້ຜູ້ຊ່ວຍສານນັ່ງບັນລັງສານ ຫຼື ນັ່ງຫ້ອງປະຊຸມສານແຕ່ລະຫ້ອງຮ່ວມພິຈາລະນາຄະດີ, ແຕ່ບໍ່ມີ

ສິດລົງຄະແນນສຽງ.

*ມາດຕາ 31*

1. ຜູ້ພິພາກສາທີ່ມີສັນຊາດດຽວກັບຄູ່ຄວາມຝ່າຍໃດຝ່າຍນຶ່ງຍັງມີສິດເຂົ້າຮ່ວມພິຈາລະນາໃນຄະດີນັ້ນໆໄດ້.

2. ຖ້າຄະນະສານທີ່ເຂົ້ານັ່ງພິຈາລະນາຄະດີມີຜູ້ພິພາກສານຶ່ງຄົນຊຶ່ງເປັນຄົນສັນຊາດດຽວກັນກັບຄູ່ຄວາມຝ່າຍໃດຝ່າຍນຶ່ງ, ຄູ່ຄວາມອີກຝ່າຍນຶ່ງ ອາດຈະເລືອກເອົາບຸກຄົນໃດນຶ່ງເຂົ້າມາເປັນຜູ້ພິພາກສາຕື່ມອີກກໍໄດ້, ບຸກຄົນຜູ້ນັ້ນຄວນເລືອກມາຈາກຜູ້ທີ່ໄດ້ຮັບແຕ່ງຕັ້ງຕາມທີ່ກຳນົດໄວ້ໃນມາດຕາ 4 ແລະ 5.

3. ຖ້າຄະນະສານທີ່ເຂົ້າຮ່ວມ ນັ່ງພິຈາລະນາບໍ່ມີຜູ້ພິພາກສາຊຶ່ງເປັນສັນຊາດດຽວ ກັບຄູ່ຄວາມຝ່າຍໃດຝ່າຍນຶ່ງເລີຍ, ຄູ່ຄວາມຝ່າຍໃດຝ່າຍນຶ່ງຍັງສາມາດເລືອກເອົາຜູ້ພິພາກສາຜູ້ໜຶ່ງໃນວິທີດຽວກັນກັບທີ່ກ່າວໄວ້ໃນວັກ 2 ຂອງມາດຕານີ້.

4. ບົດບັນຍັດໃນມາດຕານີ້ໃຫ້ນຳໄປບັງຄັບໃຊ້ໃນກໍລະນີຂອງມາດຕາ 26 ແລະ 29 ໃນກໍລະນີດັ່ງກ່າວນັ້ນ ປະທານສານຈະຮ້ອງຂໍໃຫ້ສະມາຊິກຂອງສານ ນຶ່ງ ຄົນ ຫຼື ຖ້າມີ ສອງ ຄົນ ທີ່ປະກອບເປັນຄະນະສານຢູ່ນັ້ນແລ້ວ ໃຫ້ສະລະບ່ອນນັ່ງຂອງຕົນໃຫ້ແກ່ສະມາຊິກຂອງສານຊຶ່ງເປັນຄົນສັນຊາດດຽວກັນກັບຄູ່ຄວາມທີ່ກ່ຽວຂ້ອງ ແລະ ຖ້າບໍ່ມີຜູ້

ພິພາກສາດັ່ງກ່າວກໍຄວນສະຫຼະຕຳແໜ່ງໃຫ້ແກ່ຜູ້ພິພາກສາຊຶ່ງ ຄູ່ຄວາມໄດ້ຄັດເລືອກເອົາໄວ້ເປັນພິເສດ.

5. ຖ້າມີຄູ່ຄວາມຫຼາຍຝ່າຍຫາກກ່ຽວຂ້ອງໃນຜົນປະໂຫຍດອັນດຽວກັນ, ເພື່ອປະຕິບັດບົດບັນຍັດທີ່ກ່າວຂ້າງເທິງນີ້, ໃຫ້ຖືວ່າເປັນຄູ່ຄວາມຝ່າຍດຽວເທົ່ານັ້ນ ຫາກມີຂໍ້ສົງໃສກ່ຽວກັບບັນຫານີ້ກໍໃຫ້ສານເປັນຜູ້ຕັດສິນຊີ້ຂາດ.

6. ຜູ້ພິພາກສາທີ່ໄດ້ເລືອກຕັ້ງຂຶ້ນຕາມວັກ 2, ວັກ 3 ແລະ 4 ຂອງມາດຕານີ້ ຈະຕ້ອງສອດຄ່ອງຕາມເງື່ອນໄຂຂອງມາດຕາ 2, 17 (ວັກ 2), 20 ແລະ 24 ຂອງທຳມະນູນສະບັບນີ້. ຜູ້ພິພາກສາດັ່ງກ່າວນີ້ຈະເຂົ້າຮ່ວມໃນການພິພາກສາຄະດີ ໃນເງື່ອນໄຂທີ່ເທົ່າທຽມກັນກັບຜູ້ພິພາກສາອື່ນໆ.

*ມາດຕາ 32*

1. ສະມາຊິກຂອງສານ ແຕ່ລະຄົນໄດ້ຮັບເງິນປີ.

2. ປະທານສານໄດ້ຮັບເງິນເພີ່ມພິເສດປະຈຳປີ.

3. ຮອງປະທານສານ ໄດ້ຮັບເງິນເພີ່ມພິເສດປະຈຳວັນ ໃນໄລຍະເວລາປະຕິບັດໜ້າທີ່ແທນປະທານສານ.

4. ນອກຈາກສະມາຊິກຂອງສານແລ້ວ ຜູ້ພິພາກສາທີ່ໄດ້ຮັບການຄັດເລືອກຂຶ້ນຕາມ ມາດຕາ 31 ຈະໄດ້ຄ່າຕອບແທນຕາມການປະຕິບັດ

ໜ້າທີ່ຂອງຕົນໃນແຕ່ລະວັນ.

5. ເງິນປີ, ເງິນເພີ່ມພິເສດ ແລະ ຄ່າຕອບແທນຂອງຜູ້ພິພາກສາ, ສະມັດຊາໃຫຍ່ຈະເປັນຜູ້ກຳນົດໃຫ້. ເງິນດັ່ງກ່າວນີ້ຈະຫລຸດຈຳນວນ ລົງບໍ່ໄດ້ໃນໄລຍະຢູ່ໃນຕຳແໜ່ງ.

6. ສະມັດຊາໃຫຍ່ຈະເປັນຜູ້ກຳນົດເງິນປີຂອງຈ່າສານ ໂດຍອີງຕາມຄຳສະເໜີຂອງສານ.

7. ສະມັດຊາໃຫຍ່ຈະເປັນຜູ້ກຳນົດເງື່ອນໄຂ ການຈ່າຍບຳນານໃຫ້ແກ່ສະມາຊິກຂອງສານ ແລະ ຂອງຈ່າສານ ຕະຫຼອດເຖິງເງື່ອນໄຂການທົດແທນຄືນຄ່າໃຊ້ຈ່າຍ ໃນການເດີນທາງຂອງເຂົາເຈົ້າ.

8. ເງິນປີ, ເງິນເພີ່ມພິເສດ ແລະ ຄ່າຕອບແທນ ຈະໄດ້ຖືກຍົກເວັ້ນຈາກການເສຍພາສີອາກອນ.

*ມາດຕາ 33*

ສະຫະປະຊາຊາດ ເປັນຜູ້ອອກຄ່າໃຊ້ຈ່າຍຂອງສານ ຕາມວິທີການກຳນົດຂອງສະມັດຊາໃຫຍ່.

# ໝວດທີ່ II
## ອຳນາດສານ

*ມາດຕາ 34*

1. ມີແຕ່ລັດເທົ່ານັ້ນທີ່ຈະເປັນຄູ່ຄວາມ ໃນຄະດີ ທີ່ນຳມາຂຶ້ນສານນີ້.

2. ໃນເງື່ອນໄຂ ຂອງກົດລະບຽບຂອງສານ, ສານອາດຈະຂໍຊາບຂໍ້ມູນກ່ຽວຂ້ອງກັບຄະດີທີ່ສານກຳລັງດຳເນີນຢູ່ ຈາກອົງການຈັດຕັ້ງລະຫວ່າງປະເທດ ທີ່ເປັນຂອງລັດຖະບານ ແລະ ຮັບເອົາຂໍ້ມູນຊຶ່ງອົງການຈັດຕັ້ງດັ່ງກ່າວໄດ້ໃຫ້ມາໂດຍຂໍ້ລິເລີ່ມ ຂອງຕົນເອງ.

3. ໃນເມື່ອການຕີຄວາມໝາຍ ເອກະສານກ່ຽວກັບສົນທິສັນຍາລະຫວ່າງປະເທດ ທີ່ເປັນຂອງລັດຖະບານ ຫຼຫ ສົນທິສັນຍາ ລະຫວ່າງປະເທດ ທີ່ຍອມຮັບດ້ວຍກັນມາແລ້ວ ຕາມເອກະສານນີ້ ເກີດມີບັນຫາໃນຄະດີທີ່ຂຶ້ນມາສູ້ສານ. ຈ່າສານຈະເປັນຜູ້ແຈ້ງເລື່ອງນີ້ໃຫ້ອົງການຈັດຕັ້ງລະຫວ່າງປະເທດນັ້ນຊາບ ແລະ ຈະແຈ້ງເປັນລາຍລັກອັກສອນຂັ້ນຕອນຂອງການພິຈາລະນາຄວາມໃນສານທັງໝົດ ໄປໃຫ້ອົງການຈັດຕັ້ງລະຫວ່າງປະເທດນັ້ນຊາບ.

*ມາດຕາ 35*

1. ສານເປີດຮັບພິຈາລະນາຄະດີຂອງ ລັດທີ່ເປັນພາຄີ ແຫ່ງທໍາມະນູນສະບັບນີ້.

2. ເງື່ອນໄຂຕ່າງໆ ທີ່ສານພິຈາລະນາຄະດີຂອງລັດອື່ນ, ໃຫ້ສະພາຄວາມຫມັ້ນຄົງເປັນຜູ້ກໍານົດ, ພາຍໃຕ້ບົດບັນຍັດພິເສດທີ່ໄດ້ລະບຸໄວ້ໃນສົນທິສັນຍາທີ່ບັງຄັບໃຊ້, ແຕ່ເງື່ອນໄຂດັ່ງກ່າວຈະບໍ່ເຮັດໃຫ້ຄູ່ຄວາມຢູ່ໃນຖານະບໍ່ເທົ່າທຽມກັນຕໍ່ໜ້າສານ.

3. ເມື່ອລັດທີ່ບໍ່ເປັນສະມາຊິກຂອງສະຫະປະຊາຊາດ ເປັນຄູ່ຄວາມໃນຄະດີ, ສານຈະກໍານົດຈໍານວນເງິນເຊິ່ງຄູ່ຄວາມຝ່າຍນັ້ນຈະຕ້ອງໄດຮັບພາລະ ເພື່ອເປັນຄ່າໃຊ້ຈ່າຍຂອງສານ. ແຕ່ວ່າບັນຍັດຂໍ້ນີ້ຈະບໍ່ໄດ້ບັງຄັບໃຊ້, ຖ້າຫາກວ່າລັດນັ້ນໄດ້ປະກອບສ່ວນເຂົ້າໃນຄ່າໃຊ້ຈ່າຍຂອງສານ.

*ມາດຕາ 36*

1. ເຂດອໍານາດສານກວມໄປເຖິງຄະດີຕ່າງໆທັງໝົດທີ່ຄູ່ຄວາມນໍາມາຂຶ້ນສານ ແລະ ກວມເຖິງເລື່ອງຕ່າງໆ ທີ່ລະບຸໄວ້ເປັນພິເສດໃນກົດບັດສະຫະປະຊາຊາດ ຫຼື ໃນສົນທິສັນຍາ ແລະ ອານຸສັນຍາຕ່າງໆ ທີ່ມີຜົນບັງຄັບໃຊ້ຢູ່.

2. ລັດທີ່ເປັນພາຄີ ຂອງທໍາມະນູນສະບັບນີ້ ອາດຈະຖະແຫຼງໃນ

ເວລາໃດນຶ່ງ ກ່ຽວກັບການຮັບຮູ້ການບັງຄັບຢ່າງສິ້ນເຊີງ ແລະ ໂດຍປາສະຈາກຂໍ້ຕົກລົງພິເສດໃດໆ ກ່ຽວກັບອຳນາດສານຕໍ່ທຸກໆລັດທີ່ຮັບ ເອົາພັນທະແບບດຽວກັນ ໃນກໍລະນີ້ມີຂໍ້ຂັດແຍ້ງດ້ານກົດໝາຍທີ່ກ່ຽວກັບ:

ກ. ການຕີຄວາມໃນ ສົນທິສັນຍາ.

ຂ. ບັນຫາກ່ຽວກັບກົດໝາຍລະຫວ່າງປະເທດ.

ຄ. ຄວາມເປັນຈິງຂອງທຸກການກະທຳ, ຊຶ່ງຫາກປະຕິບັດໄປ, ຈະເປັນການລະເມີດຂໍ້ຜູກມັດລະຫວ່າງປະເທດນີ້.

ງ. ສະພາບ ຫຼື ຂອບເຂດຂອງຄ່າປົວແປງທີ່ເກີດຈາກກໍລະນີລະເມີດພັນທະລະຫວ່າງປະເທດນີ້.

3. ຄຳຖະແຫຼງດັ່ງກ່າວຂ້າງເທິງອາດຈະກະທຳໂດຍບໍ່ມີເງື່ອນໄຂ ຫຼື ມີເງື່ອນໄຂຂອງການຕອບຄຳຖະແຫຼງກັນ ແລະ ກັນຂອງຫຼາຍລັດ ຫຼື ບາງລັດ ຫຼື ໃນກຳນົດເວລາແນ່ນອນ.

4. ຄຳຖະແຫຼງດັ່ງກ່າວນີ້ຈະຕ້ອງມອບໃຫ້ ເລຂາທິການໃຫຍ່ສະຫະປະຊາຊາດຊຶ່ງຈະສົ່ງສຳເນົາຄຳຖະແຫຼງດັ່ງກ່າວໄປໃຫ້ພາຄີ ຂອງທຳມະນູນ ສະບັບນີ້ ແລະ ສົ່ງໃຫ້ຈ່າສານ.

5. ຄຳຖະແຫຼງທີ່ເຮັດຂຶ້ນເພື່ອປະຕິບັດ ມາດຕາ 36 ຂອງທຳມະນູນ ຂອງສານປະຈຳຍຸຕິທຳ ລະຫວ່າງປະເທດ ສຳລັບກຳນົດເວລາທີ່ ຍັງບັງຄັບໃຊ້ຢູ່ໃນບັນດາພາຄີ ຂອງທຳມະນູນສະບັບນີ້ໄດ້ຖືວ່າກຳນົດເວລາ

ທີ່ຍັງບັງຄັບໃຊ້ຢູ່ ແລະ ຕາມເນື້ອໃນຂອງຄຳຖະແຫຼງນັ້ນ.

6. ໃນກໍລະນີທີ່ມີການຕັ້ງບັນຫາຂຶ້ນມາວ່າ ສານຈະມີສິດອຳນາດ ຫຼືບໍ່, ໃຫ້ສານເປັນຜູ້ວິນິໃສ ແລະ ຕັດສິນບັນຫານັ້ນ.

*ມາດຕາ 37*

ໃນເມື່ອສົນທິສັນຍາ ຫຼື ອານຸສັນຍາທີ່ບັງຄັບໃຊ້ຢູ່ກຳນົດໃຫ້ສົ່ງເລື່ອງຂຶ້ນໃຫ້ສານທີ່ສັນນິບາດຊາດ (1) ຈະສ້າງຕັ້ງຂຶ້ນ ຫຼື ສານປະຈຳຍຸຕິທຳລະຫວ່າງປະເທດ ວິນິໃສ່ກໍຈະແມ່ນສານຍຸຕິທຳລະຫວ່າງປະເທດເປັນຜູ້ປະກອບຄະນະສານນັ້ນຂຶ້ນມາ ໃນລະຫວ່າງບັນດາລັດທີ່ເປັນພາຄີ ຂອງທຳມະນູນສານສະບັບນີ້ດ້ວຍກັນເພື່ອວິນິໃສ.

*ມາດຕາ 38*

1. ສານນີ້ຊຶ່ງມີໜ້າທີ່ແກ້ໄຂຂໍ້ຂັດແຍ້ງທີ່ນຳມາສູ່ສານຕາມກົດໝາຍ ລະຫວ່າງປະເທດຈຳຕ້ອງໃຊ້:

ກ. ສົນທິສັນຍາ ລະຫວ່າງປະເທດບໍ່ວ່າທົ່ວໄປ ຫຼື ສະເພາະ, ຊຶ່ງຕັ້ງກົດລະບຽບອັນເປັນທີ່ຮັບຮູ້ໂດຍລັດທີ່ເປັນຄວາມກັນ;

ຂ. ຮີດຄອງປະເພນີລະຫວ່າງປະເທດ ໃນຖານະເປັນຫຼັກຖານຂອງການປະຕິບັດ ໂດຍທົ່ວໄປ, ຊຶ່ງຖືວ່າເປັນກົດຫມາຍ;

ຄ. ຫຼັກການທົ່ວໄປຂອງກົດຫມາຍຈຶ່ງຮັບຮູ້ໂດຍປະເທດທີ່ຈະ

ເລີ່ມແລ້ວ;

ງ. ພາຍໃຕ້ຂໍ້ກຳນົດ ມາດຕາ 59 ແຫ່ງບົດບັນຍັດສະບັບນີ້ ຄຳພິພາກສາຂອງສານ ແລະ ແນວຄວາມຄິດຂອງນັກກົດໝາຍທີ່ມີຄຸນນະວຸດທິສູງ ຂອງປະເທດຕ່າງໆ ຈະເປັນພາຫະນະຊ່ວຍໃຫ້ສານວິນິໃສຫຼັກຂອງກົດໝາຍ.

2. ບົດບັນຍັດຂໍ້ນີ້ຈະບໍ່ກະທົບກະເທືອນຕໍ່ອຳນາດຂອງສານ ໃນການພິຈາລະນາຕັດສິນຄະດີ ໂດຍອາໃສຫຼັກການຄວາມຍຸຕິທຳ ແລະ ຄວາມຮັບຜິດຊອບອັນດີ (1), ຫາກຄູ່ຄວາມຕົກລົງໃຫ້ປະຕິບັດເຊັ່ນນັ້ນ.

(1) ex acquo et bono.

# ໝວດທີ່ III
## ການພິຈາລະນາຄະດີ

*ມາດຕາ 39*

1. ພາສາທາງການຂອງສານຄື ຝຼັ່ງ ແລະ ອັງກິດ. ຖ້າຄູ່ຄວາມຕົກລົງກັນວ່າ ໃຫ້ດຳເນີນຄະດີ ເປັນພາສາຝຼັ່ງ ກໍໃຫ້ເຮັດຄຳພິພາກສາເປັນພາສາຝຼັ່ງ, ຖ້າຄູ່ຄວາມຕົກລົງກັນວ່າໃຫ້ດຳເນີນຄະດີ ເປັນພາສາອັງກິດກໍໃຫ້ເຮັດຄຳພິພາກສາເປັນພາສາອັງກິດ.

2. ຖ້າບໍ່ມີການຕົກລົງກັນວ່າໃຫ້ໃຊ້ພາສາໃດນຶ່ງ ໃນເວລາດຳເນີນຄະດີຢູ່ສານ, ຄູ່ຄວາມຝ່າຍໃດຝ່າຍໜຶ່ງອາດຈະໃຊ້ພາສາໃດພາສານຶ່ງໃນສອງພາສານີ້ ທີ່ຕົນພໍໃຈ ແລະ ຄຳພິພາກສາຂອງສານກໍຈະເຮັດທັງເປັນພາສາຝຼັ່ງ ແລະ ອັງກິດ, ໃນກໍລະນີນີ້ສານຈະບົ່ງບອກວ່າໃນສອງພາສານີ້ພາສາໃດມີຄຸນຄ່າ.

3. ຫາກຄູ່ຄວາມຝ່າຍໃດຝ່າຍນຶ່ງ ຮ້ອງຂໍຕໍ່ສານຢາກໃຊ້ ພາສາ ໃດນຶ່ງ ນອກຈາກ ພາສາ ຝຼັ່ງ ຫຼື ອັງກິດ, ສານກໍຈະອະນຸຍາດຕາມຄຳຂໍ.

*ມາດຕາ 40*

1. ຄະດີຕ່າງໆ ຈະຂຶ້ນມາສູ່ສານໄດ້ ດ້ວຍການແຈ້ງຄວາມຕົກລົງນຳກັນ ຫຼື ດ້ວຍການຍື່ນຄຳຮ້ອງຕໍ່ຈ່າສານ; ໃນສອງກໍລະນີດັ່ງກ່າວນັ້ນ ຕ້ອງລະບຸຫົວຂໍ້ພິດພາດກັນນັ້ນ ແລະ ບົ່ງບອກເຖິງຄູ່ຄວາມທີ່ກ່ຽວຂ້ອງດ້ວຍ.

2. ຈ່າສານຈະແຈ້ງຄຳຮ້ອງຟ້ອງ ໃຫ້ພວກກ່ຽວຂ້ອງຊາບທັນທີ.

3. ຈ່າສານຈະແຈ້ງໃຫ້ສະມາຊິກສະຫະປະຊາຊາດຊາບ ໂດຍຜ່ານເລຂາທິການໃຫຍ່ ແລະ ແຈ້ງໃຫ້ລັດອື່ນໆ ຊຶ່ງມີສິດ ທີ່ຈະຮັບຟັງການພິຈາລະນາຂອງ ສານຊາບນຳດ້ວຍ.

*ມາດຕາ 41*

1. ຖ້າຫາກສານເຫັນວ່າ ມີສະພາວະການຈຳເປັນ, ສານມີອຳນາດກຳນົດມາດຕະການຊົ່ວຄາວເພື່ອຮັກສາສິດ ຂອງຄູ່ຄວາມຝ່າຍໃດ ຝ່າຍນຶ່ງໄວ້.

2. ໃນລະຫວ່າງລໍຖ້າການລົງຄຳຕັດສິນຂັ້ນສຸດທ້າຍ ສານຕ້ອງແຈ້ງມາດຕະການດັ່ງກ່າວໄປຍັງຄູ່ຄວາມ ແລະ ສະພາຄວາມໝັ້ນຄົງ ຊາບໃນທັນທີທັນໃດ.

*ມາດຕາ 42*

1. ຄູ່ຄວາມມີຕົວແທນຂອງຕົນເພື່ອດຳເນີນການ.

2. ຢູ່ຕໍ່ໜ້າສານ, ຄູ່ຄວາມຈະໄດ້ຮັບຄວາມຊ່ວຍເຫຼືອຈາກທີ່ປຶກສາ ຫຼື ທະນາຍຄວາມ.

3. ຢູ່ຕໍ່ໜ້າສານ, ຕົວແທນ, ທີ່ປຶກສາ ແລະ ທະນາຍຄວາມຂອງຄູ່ຄວາມຈະມີເອກະສິດ ແລະ ສິດຄຸ້ມຄອງກັນ ຕາມຄວາມຈຳເປັນ ໃນການປະຕິບັດໜ້າທີ່ ໂດຍອິດສະລະຂອງຕົນ.

*ມາດຕາ 43*

1. ການດຳເນີນຄະດີມີສອງຂັ້ນຕອນຄື ມີລາຍລັກອັກສອນ ແລະ ທາງປາກເປົ່າ.

2. ການດຳເນີນຄະດີເປັນລາຍລັກອັກສອນ ປະກອບດ້ວຍການສົ່ງເອກະສານໃຫ້ຜູ້ພິພາກສາ ແລະ ສົ່ງຄຳຖະແຫຼງໃຫ້ຄູ່ຄວາມ, ຄຳໂຕ້ແຍ້ງ ແລະ ຫາກຈຳເປັນມີຄຳຕອບໂຕ້, ຕະຫຼອດເຖິງໜັງສື ແລະ ເອກະສານອ້າງອີງຕ່າງໆ ເພື່ອໃຊ້ສະຫນັບສະຫນູນ ເຫດຜົນຂອງຕົນ.

3. ການສົ່ງເອກະສານດັ່ງກ່າວຕ້ອງຜ່ານຈ່າສານຕາມເລກລຳດັບ ແລະ ຕາມທີ່ສານກຳນົດໃຫ້.

4. ທຸກເອກະສານ ຂອງຄູ່ຄວາມຝ່າຍນຶ່ງຕ້ອງສົ່ງສຳເນົາໃຫ້ອີກຝ່າຍນຶ່ງ ໂດຍມີການຢັ້ງຢືນຢ່າງຖືກຕ້ອງ.

5. ການດຳເນີນຄະດີ ຂອງສານທາງປາກເປົ່າປະກອບດ້ວຍການເປີກຕົວພະຍານ, ຮັບຟັງຜູ້ຊ່ຽວຊານ, ຕົວແທນ, ທີ່ປຶກສາ ແລະ ທະນາຍຄວາມ.

*ມາດຕາ 44*

1. ການສົ່ງແຈ້ງການຕ່າງໆ ໃຫ້ບຸກຄົນອື່ນໆ, ນອກຈາກຕົວແທນທີ່ປຶກສາ ແລະ ທະນາຍຄວາມແລ້ວ, ສານຈະສົ່ງແຈ້ງການໄປໃຫ້ລັດຖະບານຂອງລັດນັ້ນໂດຍກົງ ຊຶ່ງແຈ້ງການດັ່ງກ່າວຈະມີຜົນປະຕິບັດໃນດິນແດນຂອງລັດດັ່ງກ່າວ.

2. ຈະໄດ້ປະຕິບັດເຊັ່ນດຽວກັນນີ້ໃນກໍລະນີທີ່ຕ້ອງໄດ້ດຳເນີນການກັບທີ່ເພື່ອໃຫ້ໄດ້ມາຊຶ່ງຫຼັກຖານນັ້ນ.

*ມາດຕາ 45*

ການເປີດອະພິປາຍຢູ່ໃນສານໃຫ້ຢູ່ພາຍໃຕ້ການນຳພາຂອງປະທານສານ ແລະ ໃນກໍລະນີທີ່ປະທານສານບໍ່ສາມາດເຂົ້າມາຮ່ວມໄດ້, ກໍໃຫ້ຢູ່ພາຍໃຕ້ການນຳພາຂອງຮອງປະທານສານ, ຫາກທັງສອງຄົນບໍ່ສາມາດມາເປັນປະທານສານໄດ້, ກໍໃຫ້ຜູ້ພິພາກສາອາວຸໂສນັ່ງເປັນປະທານ.

*ມາດຕາ 46*

ການເປີດອະພິປາຍຢູ່ໃນສານໃຫ້ເຮັດແບບເປີດເຜີຍ, ເວັ້ນແຕ່ສານຈະສັ່ງຢ່າງອື່ນ ຫຼື ວ່າຄູ່ຄວາມຮ້ອງຂໍບໍ່ອະນຸຍາດໃຫ້ຄົນທັງຫຼາຍເຂົ້າ ຮັບຟັງການພິຈາລະນານັ້ນ.

*ມາດຕາ 47*

1. ການອະພິປາຍຢູ່ໃນສານແຕ່ລະຄັ້ງຕ້ອງເຮັດບົດບັນທຶກ ແລະ ລົງນາມໂດຍຈ່າສານ ແລະ ປະທານສານ.

2. ມີບົດບັນທຶກການອະພິປາຍຢູ່ໃນສານເທົ່ານັ້ນຈະຖືວ່າເປັນທາງການໄດ້.

*ມາດຕາ 48*

ໃນການດຳເນີນຄະດີ, ສານຈະເປັນຜູ້ອອກຄຳສັ່ງຕ່າງໆ ເປັນຜູ້ກຳນົດລະບຽບ ແລະ ເວລາຊຶ່ງຄູ່ຄວາມແຕ່ລະຝ່າຍຈະຕ້ອງສິ້ນສຸດການໂຕ້ແຍ້ງ ແລະ ສານຈະເອົາທຸກໆມາດຕະການກ່ຽວກັບການສືບຫາຫຼັກຖານ.

*ມາດຕາ 49*

ກ່ອນການເປີດອະພິປາຍຢູ່ໃນສານ, ສານສາມາດຂໍໃຫ້ຕົວແທນຂອງຄູ່ຄວາມສົ່ງເອກະສານ ຫຼື ໃຫ້ຄຳອະທິບາຍໃດນຶ່ງກ່ອນ ການພິຈາ

ລະນາຄະດີ. ຫາກມີການປະຕິເສດສານກໍ່ຈະລົງ ບົດບັນທຶກເອົາໄວ້.

*ມາດຕາ 50*

ສານສາມາດມອບໃຫ້ສ່ວນບຸກຄົນ, ຄະນະບຸກຄົນ, ສຳນັກງານກຳມາທິການ ຫຼື ອົງການໃດນຶ່ງທີ່ສານໄດ້ເລືອກເອົາໄວ້ເພື່ອໃຫ້ປະຕິບັດການສອບສວນ ຫຼື ວິເຄາະເລື່ອງໃດເລື່ອງນຶ່ງ ໃນເວລາໃດກໍໄດ້.

*ມາດຕາ 51*

ໃນລະຫວ່າງການພິຈາລະນາ, ສານຈະວາງທຸກໆຄຳຖາມທີ່ເປັນປະໂຫຍດຕໍ່ພະຍານບຸກຄົນ ແລະ ຕໍ່ຜູ້ຊ່ຽວຊານເງື່ອນໄຂທີ່ສານກຳນົດໃນບາງຂໍ້ບັງຄັບດັ່ງກ່າວໄວ້ໃນມາດຕາ 30.

*ມາດຕາ 52*

ເມື່ອສານໄດ້ຮັບຫຼັກຖານ ແລະ ໄດ້ຄຳໃຫ້ການຂອງພະຍານໃນໄລຍະເວລາທີ່ໄດ້ກຳນົດໄວ້ແລ້ວ, ສານກໍອາດປະຕິເສດບໍ່ຮັບຟັງພະຍານບຸກຄົນ ຫຼື ຮັບເອົາເອກະສານເພີ່ມເຕີມ ຊຶ່ງຄູ່ຄວາມຝ່າຍໃດຝ່າຍນຶ່ງຢາກເອົາມາສະເຫນີຕໍ່ສານ, ເວັ້ນເສຍແຕ່ອີກຝາຍນຶ່ງໃຫ້ການຍິນຍອມ.

*ມາດຕາ 53*

1. ຫາກຄູ່ຄວາມຝ່າຍນຶ່ງບໍ່ມາປະກົດຕົວຢູ່ສານ ຫຼື ບໍ່ມາຕໍ່ສູ້ຄະດີ, ອີກຝ່າຍນຶ່ງອາດຈະໃຫ້ສານພິພາກສາໃຫ້ເປັນໄປຕາມຄວາມຮຽກຮ້ອງຂອງຝ່າຍຕົນ.

2. ກ່ອນຈະປະຕິບັດການດັ່ງທີ່ກ່າວຂ້າງເທິງນີ້ ສານຕ້ອງຮັບປະກັນວ່າບໍ່ພຽງແຕ່ສານຈະມີອຳນາດຕາມມາດຕາ 37 ແລະ ມາດຕາ 38 ເທົ່ານັ້ນ, ແຕ່ສິດຮຽກຮ້ອງນັ້ນຈະຕ້ອງມີຫຼັກຖານຫມັ້ນຄົງທັງດ້ານ ຄວາມເປັນຈິງ ແລະ ທາງກົດຫມາຍ.

*ມາດຕາ 54*

1. ເມື່ອຕົວແທນ, ທີ່ປຶກສາ ແລະ ທະນາຍຄວາມໄດ້ສະເຫນີ ຄະດີຂອງຕົນ ພາຍໃຕ້ການກວດກາ ຂອງສານສຳເລັດແລ້ວ, ປະທານ ສານກໍຈະສັ່ງໃຫ້ປິດການພິຈາລະນາຄະດີ .

2. ສານຈະອອກຈາກທີ່ນັ່ງເພື່ອພິຈາລະນາຄຳພິພາກສາ .

3. ການພິຈາລະນາຂອງສານແມ່ນກະທຳກັນແບບເປັນຄວາມລັບ .

*ມາດຕາ 55*

1. ການຕັດສິນຂອງສານແມ່ນເອົາຕາມສຽງສ່ວນຫຼາຍຂອງຜູ້ພິພາກສາທີ່ມີຫນ້າ.

2. ຖ້າຄະແນນສຽງເທົ່າທຽມກັນ, ຄະແນນສຽງຂອງປະທານສານ ຫຼື ຜູ້ພິພາກສາທີ່ຮັກສາການແທນຈະເປັນສຽງຊີ້ຂາດ

*ມາດຕາ 56*

1. ຄຳພິພາກສາຕ້ອງສະແດງອອກເຖິງເຫດຜົນຊຶ່ງເປັນພື້ນຖານຂອງການພິພາກສາ.

2. ຄຳພິພາກສາຕ້ອງມີລາຍຊື່ຂອງຜູ້ພິພາກສາເຂົ້າຮ່ວມໃນການພິຈາລະນາຕັດສິນນັ້ນ.

*ມາດຕາ 57*

ຫາກໃນຄຳພິພາກສາທັງຫມົດ ຫຼື ໃນບາງສ່ວນບໍ່ມີຄວາມເປັນເອກະພາບກັນຂອງຜູ້ພິພາກສາ, ຜູ້ພິພາກສາຄົນໃດຄົນນຶ່ງມີສິດເຮັດບົດປະກອບຄວາມເຫັນຂອງຕົນຄັດຕິດຄຳພິພາກສານັ້ນກໍໄດ້.

*ມາດຕາ 58*

ປະທານສານ ແລະ ຈ່າສານເປັນຜູ້ລົງນາມໃນຄຳພິພາກສາ. ໃຫ້ອ່ານຄຳພິພາກສາຢ່າງເປີດເຜີຍໃນສານ, ບັນດາຕົວແທນຕ້ອງແຈ້ງໃຫ້ຊາບຕາມຄວາມເຫມາະສົມ.

*ມາດຕາ 59*

ຄຳພິພາກສາຂອງສານ ມີຜົນບັງຄັບໃຊ້ສະເພາະຕໍ່ຄູ່ຄວາມ ແລະ ສະເພາະໃນຄະດີທີ່ຖືກຕັດສິນເທົ່ານັ້ນ.

*ມາດຕາ 60*

ຄຳພິພາກສາ ຂອງສານແມ່ນໃຊ້ໄດ້ເດັດຂາດ ແລະ ບໍ່ມີການອຸທອນຕື່ມ. ໃນກໍລະນີທີ່ມີຄວາມຂັດຂ້ອງກ່ຽວກັບຄວາມຫມາຍ ຫຼື ຂອບເຂດຂອງຄຳພິພາກສານັ້ນ ໃຫ້ສານຕີຄວາມຫມາຍຄຳພິພາກສານັ້ນ, ເມື່ອຄູ່ຄວາມຝ່າຍໃດຝ່າຍນຶ່ງຮ້ອງຂໍ.

*ມາດຕາ 61*

1. ຄຳຮ້ອງຂໍໃຫ້ພິຈາລະນາຄືນໃຫມ່ ອາດຈະກະທຳໄດ້ສະເພາະໃນກໍລະນີທີ່ຄຳຮ້ອງຂໍນັ້ນມີເຫດຜົນ ໃນການພົບຂໍ້ຄວາມເປັນຈິງ ບາງປະການຊຶ່ງມີຜົນສະທ້ອນຕໍ່ການຕັດສິນເທົ່ານັ້ນ, ຊຶ່ງຂໍ້ຄວາມຈິງດັ່ງກ່າວນີ້ ບໍ່ປະກົດຕໍ່ສານ ແລະ ຕໍ່ຝ່າຍທີ່ຮ້ອງຂໍໃຫ້ພິຈາລະນາຄືນໃຫມ່ກ່ອນການລົງຄຳພິພາກສາ ແລະ ຄວາມບໍ່ຮູ້ຂໍ້ຄວາມເປັນຈິງດັ່ງກ່າວນັ້ນບໍ່ແມ່ນຍ້ອນຄວາມປະຫມາດເລີ່ນເລີ້.

2. ຂັ້ນຕອນໃນການພິຈາລະນາຄືນໃຫມ່ ໃຫ້ເລີ່ມໂດຍຄຳພິພາກສາຂອງສານ ກ່າວເຖິງການພົບພໍ້ຂໍ້ຄວາມເປັນຈິງໃຫມ່ຢ່າງຈະແຈ້ງ, ທັງ

ຍອມຮັບວ່າການພົບຂໍ້ຄວາມເປັນຈິງໃຫມ່ນີ້ມີລັກສະນະພິຈາລະນາຄະດີຄືນໃຫມ່ໄດ້ ແລະ ປະກາດໃຫ້ຮັບຄໍາຮ້ອງຂໍໃຫ້ພິຈາລະນາຄືນໃຫມ່ນີ້ໄວ້ໂດຍອີງໃສ່ເຫດຜົນນີ້.

3. ສານອາດຈະຂໍຊາບ ການປະຕິບັດຕາມຄໍາພິພາກສານີ້ກ່ອນທີ່ຈະອະນຸຍາດໃຫ້ພິພາກສາຄືນໃຫມ່.

4. ຄໍາຮ້ອງຂໍໃຫ້ພິຈາລະນາຄືນໃຫມ່ ຕ້ອງກະທໍາຢ່າງຊ້າທີ່ສຸດພາຍໃນ 6 ເດືອນພາຍຫຼັງໄດ້ຄົ້ນພົບຂໍ້ຄວາມເປັນຈິງອັນໃຫມ່.

5. ເມື່ອພົ້ນກໍານົດ 10 ປີ ຫຼັງຈາກວັນອ່ານຄໍາພິພາກສາແລ້ວຈະຂໍໃຫ້ພິຈາລະນາຄືນໃຫມ່ອີກບໍ່ໄດ້.

*ມາດຕາ 62*

1. ໃນຄະດີນຶ່ງ, ຫາກລັດໃດນຶ່ງເຫັນວ່າຕົນໄດ້ຮັບການກະທົບໃນແງ່ຜົນປະໂຫຍດທາງດ້ານກົດຫມາຍ, ລັດນັ້ນອາດຈະຂໍຮ້ອງໄປ ຍັງສານເພື່ອເຂົ້າໄປກ່ຽວຂ້ອງກັບຄະດີນັ້ນກໍໄດ້.

2. ສານຈະພິຈາລະນາ ຕັດສິນຄໍາຮ້ອງຂໍນີ້.

*ມາດຕາ 63*

1. ຫາກມີການຕີຄວາມຫມາຍສົນທິສັນຍາ ຊຶ່ງມີລັດພາຄີອື່ນໆກ່ຽວຂ້ອງນໍາດ້ວຍນອກຈາກຄູ່ຄວາມ, ຈ່າສານຈະແຈ້ງໃຫ້ ບັນດາລັດ

ດັ່ງກ່າວຊາບໃນທັນທີ.

2. ທຸກລັດທີ່ໄດ້ຮັບຄຳແຈ້ງການດັ່ງກ່າວມີສິດທີ່ຈະເຂົ້າມາມີສ່ວນໃນການພິຈາລະນາ, ແຕ່ຖ້າລັດດັ່ງກ່າວຫາກໃຊ້ສິດນັ້ນ, ການຕີຄວາມຫມາຍທີ່ກ່າວໄວ້ໃນຄຳພິພາກສານັ້ນ ຍ່ອມເປັນພັນທະສຳລັບລັດເຫຼົ່ານັ້ນຢ່າງສະເຫມີພາບກັນ.

*ມາດຕາ 64*

ຄູ່ຄວາມຕ້ອງເສຍຄ່າໃຊ້ຈ່າຍຂອງຕົນເອງໃນການດຳເນີນຄະດີ, ຍົກເວັ້ນແຕ່ສານຈະຕົກລົງເປັນຢ່າງອື່ນ.

# ໝວດທີ່ IV
## ຄໍາເຫັນແນະນໍາ

*ມາດຕາ 65*

1. ສານອາດຈະເຫັນຄໍາແນະນໍາໃນທຸກບັນຫາກົດໝາຍຕາມຄໍາຮ້ອງຂໍຈາກອົງການ ຫຼື ສະຖາບັນທີ່ກົດບັດສະຫະປະຊາຊາດອະນຸຍາດ ຫຼື ສອດຄ່ອງກັບບົດບັນຍັດຂອງກົດບັດສະຫະປະຊາຊາດ ໃນການຂໍຄໍາເຫັນແນະນໍານີ້.

2. ການທີ່ຈະຂໍໃຫ້ສານໃຫ້ຄໍາແນະນໍາຕ້ອງເຮັດຄໍາຮ້ອງຂໍເປັນລາຍລັກອັກສອນຕໍ່ສານ ສະແດງຂໍ້ຄວາມຢ່າງແຈ່ມແຈ້ງກ່ຽວກັບບັນຫາທີ່ຕ້ອງການຂໍຄໍາເຫັນຈາກສານ. ໃຫ້ສົ່ງເອກະສານຕ່າງໆທີ່ຈະຊ່ວຍໃນການພິຈາລະນາບັນຫານັ້ນໃຫ້ແຈ່ມແຈ້ງໄປພ້ອມ.

*ມາດຕາ 66*

1. ໃຫ້ຈ່າສານແຈ້ງຄໍາຮ້ອງເພື່ອຂໍຄໍາເຫັນຈາກສານໄປຍັງລັດທຸກໆລັດທີ່ມີສິດໃນການພິຈາລະນາຂອງສານໃນທັນທີ.

2. ນອກຈາກນີ້, ໃຫ້ຈ່າສານແຈ້ງເປັນການພິເສດ ແລະ ໂດຍກົງໃຫ້ລັດໃດນຶ່ງ ຫຼື ໃຫ້ອົງການຈັດຕັ້ງສາກົນ ຊຶ່ງມີສິດຟັງການພິຈາລະນາ

ຂອງສານ ຫຼື ການຕັດສິນຂອງປະທານ ຫຼື ຂອງສານຊາບ (ຫຼື ໃນກໍລະນີທີ່ສານບໍ່ໄດ້ນັ່ງພິຈາລະນາ), ຈ່າສານຈະຮັບຄໍາຖະແຫຼງເປັນລາຍລັກອັກສອນຕາມໄລຍະເວລາທີ່ປະທານກໍານົດໄວ້, ຫຼື ຮັບຟັງຄໍາຖະແຫຼງທາງປາກເປົ່າກ່ຽວກັບບັນຫານັ້ນໃນເວລານັ່ງພິຈາລະນາ ໂດຍເປີດເຜີຍຊຶ່ງຈັດຂຶ້ນເພື່ອຜົນປະໂຫຍດດັ່ງກ່າວຫາກເຫັນວ່າຄໍາຖະແຫຼງນັ້ນສາມາດໃຫ້ຂໍ້ມູນກ່ຽວກັບບັນຫານັ້ນ.

3. ຖ້າຫາກລັດໃດລັດນຶ່ງບໍ່ໄດ້ຮັບການແຈ້ງພິເສດດັ່ງທີ່ກ່າວໄວ້ໃນວັກ 2 ຂອງມາດຕານີ້, ລັດນັ້ນກໍຄວນສະແດງຄວາມປະສົງຂອງຕົນທີ່ຈະສະເຫນີຄໍາຖະແຫຼງເປັນລາຍລັກອັກສອນ ຫຼື ຄວາມປະສົງຢາກຮັບຟັງການພິຈາລະນາ, ສານຈະເປັນຜູ້ຕັດສິນ.

4. ລັດ ຫຼື ອົງການຈັດຕັ້ງທີ່ໄດ້ສະເຫນີຄໍາຖະແຫຼງເປັນລາຍລັກອັກສອນ ຫຼື ດ້ວຍປາກເປົ່າ ຫຼື ດ້ວຍທັງສອງວິທີກໍອາດຈະໄດ້ຮັບອະນຸຍາດໃຫ້ໄວ້ໃຈຂໍ້ຄວາມທີ່ສະເຫນີໂດຍລັດ ຫຼື ອົງການ ຈັດຕັ້ງອື່ນໆ, ໃນຮູບການ, ມາດຕະການ ແລະ ໄລຍະເວລາ ທີ່ສານກໍານົດໄວ້ໃນແຕ່ລະກໍລະນີ, ຖ້າຫາກສານບໍ່ໄດ້ນັ່ງພິຈາລະນາ, ແມ່ນປະທານສານຈະ ຊີ້ຂາດໃນເລື່ອງນີ້ໂດຍສະເພາະຈາກນັ້ນຈ່າສານຈະແຈ້ງຂໍ້ຄວາມຢ່າງເປັນລາຍລັກອັກສອນໄປຍັງລັດ ຫຼື ອົງການຈັດຕັ້ງທີ່ໄດ້ຍື່ນຂໍ້ຄວາມໃນທໍານອງດຽວກັນນີ້ ໃນເວລາອັນສົມຄວນ.

*ມາດຕາ 67*

ສານຈະອ່ານຄໍາແນະນໍາໂດຍເປີດເຜີຍ, ແລ້ວແຈ້ງໃຫ້ເລຂາທິການໃຫຍ່ ສະມາຊິກສະຫະປະຊາຊາດ, ຜູ້ແທນລັດອື່ນໆ ແລະ ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງໂດຍກົງຊາບ.

*ມາດຕາ 68*

ໃນການປະຕິບັດໜ້າທີ່ກ່ຽວກັບການເຮັດຄໍາແນະນໍານີ້, ສານຈະຕ້ອງອີງໃສ່ບົດບັນຍັດຂອງທໍາມະນູນສະບັບນີ້, ຊຶ່ງນໍາໄປປະຕິບັດຕໍ່ການຂັດແຍ້ງຕາມທີ່ສານຍອມຮັບວ່າຈະໄດ້ນໍາມາບັງຄັບໃຊ້.

# ໝວດທີ່ V
## ການດັດແປງແກ້ໄຂ

*ມາດຕາ 69*

ການດັດແປງແກ້ໄຂທຳມະນູນສະບັບນີ້ໃຫ້ປະຕິບັດວິທີດຽວກັນກັບການດັດແປງແກ້ໄຂກົດບັດສະຫະປະຊາຊາດ, ແຕ່ໃນເງື່ອນໄຂທີ່ວ່າສະມັດຊາໃຫຍ່ສາມາດຮັບຮອງເອົາບົດບັນຍັດນີ້ໂດຍການສະເໜີຂອງສະພາຄວາມໝັ້ນຄົງ, ເພື່ອແກ້ໄຂການເຂົ້າຮ່ວມ ວິທີການພິຈາລະ ນາດັ່ງກ່າວຂອງລັດທີ່ເປັນພາຄີ ຂອງທຳມະນູນຂອງສານສະບັບປັດຈຸບັນ, ແຕ່ຫາກຍັງບໍ່ທັນເປັນສະມາຊິກຂອງສະຫະປະຊາຊາດ.

*ມາດຕາ 70*

ສານສາມາດສະເໜີຂໍ້ດັດແປງແກ້ໄຂທຳມະນູນສະບັບນີ້ຖ້າຫາກເຫັນວ່າຈຳເປັນ, ໂດຍສະເໜີເປັນລາຍລັກອັກສອນໄປຍັງເລຂາທິການເພື່ອພິຈາລະນາເພື່ອໃຫ້ໄປຕາມບົດບັນຍັດຂອງມາດຕາ 69.

# ໝາຍເຫດ
# ການດັດແປງແກ້ໄຂເພີ່ມເຕີມບັນດາມາດຕາໃນ ກົດບັດ

ການແກ້ໄຂເພີ່ມເຕີມ ບັນດາມາດຕາ 23-27 ແລະ 61 ຂອງກົດບັດໄດ້ຖືກຮັບຮອງເອົາ ໂດຍສະມັດຊາໃຫຍ່ ໃນວັນທີ 17 ທັນວາ 1963 ແລະ ມີຜົນບັງຄັບໃຊ້ ໃນວັນທີ 31 ສິງຫາ 1965. ການແກ້ໄຂເພີ່ມເຕີມ ມາດຕາ 61 ອີກເທື່ອໃໝ່ ໄດ້ຖືກຮັບຮອງເອົາ ໂດຍສະມັດຊາໃຫຍ່ ໃນວັນທີ 20 ທັນວາ 1971 ແລະ ມີຜົນບັງຄັບໃຊ້ ໃນວັນທີ 24 ທັນວາ 1973. ການແກ້ໄຂເພີ່ມເຕີມ ມາດຕາ 109 ເຊິ່ງໄດ້ຖືກຮັບຮອງເອົາໂດຍ ສະມັດຊາໃຫຍ່ໃນວັນທີ 20 ທັນວາ 1965 ໄດ້ມີຜົນບັງຄັບໃຊ້ ໃນວັນທີ 12 ມິຖຸນາ 1968.

ການແກ້ໄຂເພີ່ມເຕີມ ມາດຕາ 23 ໄດ້ກໍານົດເອົາສະມາຊິກ ຂອງສະພາຄວາມໝັ້ນຄົງຈາກ 11 ມາເປັນ 15 (ປະເທດ). ການແກ້ໄຂເພີ່ມເຕີມ ມາດຕາ 27 ເຫັນດີວ່າບັນດາການຕົກລົງຂອງສະພາຄວາມໝັ້ນຄົງກ່ຽວກັບບັນຫາວິທີການຕ່າງໆນັ້ນ ຕ້ອງໄດ້ຮັບການລົງຄະແນນສຽງຮັບຮູ້ ຈາກ 9 ປະເທດ ສະມາຊິກ (ກ່ອນໜ້ານັ້ນແມ່ນ 7).

ການຕົກລົງຂອງສະພາຄວາມໝັ້ນຄົງ ກ່ຽວກັບບັນດາບັນຫາຕ່າງໆ ຕ້ອງໄດ້ຮັບການລົງຄະແນນສຽງຮັບຮູ້ ຈາກ 9 ປະເທດ ສະມາຊິກ (ກ່ອນໜ້ານັ້ນແມ່ນ 7). ຊຶ່ງໃນນັ້ນ ລວມທັງຄະແນນສຽງຂອງ 5

ປະເທດສະມາຊິກ ຖາວອນ ຂອງສະພານຳດ້ວຍ.

ການແກ້ໄຂເພີ່ມເຕີມ ມາດຕາ 61 ຊຶ່ງມີຜົນບັງຄັບໃຊ້ໃນ ວັນທີ 31 ສິງຫາ 1965 ໄດ້ກຳນົດ ຈຳນວນສະມາຊິກ ຂອງສະພາເສດຖະກິດ ແລະ ສັງຄົມ ຈາກ 18 ມາເປັນ 27 (ປະເທດ). ການແກ້ໄຂເພີ່ມເຕີມ ມາດຕາ ນີ້ອີກ ຊຶ່ງມີຜົນບັງຄັບໃຊ້ ໃນວັນທີ 24 ມິຖຸນາ 1973 ໄດ້ກຳນົດເອົາຈຳນວນ ສະມາຊິກ ຂອງສະພາຈາກ 27 ມາເປັນ 54 ປະເທດ.

ການແກ້ໄຂເພີ່ມເຕີມ 109-ຂໍ້ 1 ຂອງມາດຕານີ້ບົ່ງໄວ້ວ່າ ກອງປະຊຸມໃຫຍ່ຂອງບັນດາສະມາຊິກ ສ.ປ.ຊ ເພື່ອທົບທວນຄືນກົດບັດ ສາມາດຈັດຂຶ້ນໄດ້ຕາມສະຖານທີ່ ແລະ ວັນເວລາຊຶ່ງສະມັດຊາໃຫຍ່ ຈະໄດ້ກຳນົດເອົາຈາກການລົງຄະແນນສຽງ 2/3 ຂອງສຽງສ່ວນຫຼາຍ ແລະ ຈາກການລົງຄະແນນສຽງຮັບຮູ້ 9 ສຽງ (ກ່ອນໜ້ານັ້ນ 7) ຂອງສະມາຊິກທົ່ວໄປຂອງສະພາຄວາມຫມັ້ນຄົງ.

ໃນກອງປະຊຸມສະໄຫມສາມັນ ຄັ້ງທີ 10, ສະມັດຊາໃຫຍ່ໄດ້ພິຈາລະນາບັນຫາການເປີດກອງປະຊຸມ ເພື່ອທົບທວນກົດບັດ, ຂໍ້ 3 ຂອງ ມາດຕາ 109 ຍັງຄົງຖືກຮັກສາໄວ້ຕາມຮູບເດີມ, ເຖິງແມ່ນວ່າໄດ້ກຳນົດວ່າ "ຈາກການລົງຄະແນນສຽງຮັບຮູ້ 7 ສຽງຂອງ ສະມາຊິກທົ່ວໄປຂອງສະພາຄວາມຫມັ້ນຄົງ", ສະມັດຊາໃຫ່ຍ ແລະ ສະພາຄວາມຫມັ້ນຄົງໄດ້ໃຫ້ການສືບຕໍ່ພິຈະລະນາອັກນີ້ ໃນກອງປະຊຸມສະໄຫມສາມັນ ຂອງສະມັດຊາໃຫຍ່ ຄັ້ງທີ່ 10 ໃນປີ 1955.

To learn more about publications
of the United Nations:

**un.org/publications**

ກົດບັດສະຫະປະຊາຊາດ ໄດ້ລົງນາມໃນປີ 1945 ໂດຍ 51 ປະເທດ ທີ່ເປັນຕົວແທນໃຫ້ທຸກທະວີບ, ເປີດທາງໃຫ້ແກ່ການສ້າງ ສະຫະປະຊາຊາດ ໃນວັນທີ 24 ຕຸລາ 1945. ທຳມະນູນສານຍຸຕິທຳລະຫວ່າງປະເທດ ໄດ້ປະກອບເປັນສ່ວນໜຶ່ງຂອງ ກົດບັດ.

ຈຸດປະສົງຂອງ ກົດບັດ ແມ່ນເພື່ອຊ່ວຍຊີວິດມະນຸດຈາກສົງຄາມ; ຢືນຢັນເຖິງຄວາມເຊື່ອໝັ້ນ ໃນສິດທິອັນພື້ນຖານ ຂອງມະນຸດ, ໃນກຽດສັກສີ ແລະ ຄຸນຄ່າຂອງມວນມະນຸດແຕ່ລະຄົນ; ໃນສິດສະເໝີພາບລະຫວ່າງ ຊາຍ ແລະ ຍິງ ກໍຄືບັນດາປະຊາຊາດໃຫຍ່ ແລະ ນ້ອຍ; ແລະ ເພື່ອສົ່ງເສີມຄວາມກ້າວໜ້າທາງສັງຄົມ ແລະ ເງື່ອນໄຂແຫ່ງການດຳລົງ ຊີວິດອັນດີກວ່າເກົ່າ ໃຫ້ແກ່ມວນມະນຸດທຸກຄົນ. ກົດບັດ ແມ່ນພື້ນຖານທີ່ເກີດມາເພື່ອ ປົກປັກຮັກສາສັນຕິພາບ ແລະ ຄວາມໝັ້ນຄົງສາກົນ.